# ພຣະທັມພວກຜູ້ປົກຄອງ



| | | | | | | |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |
| 15 | 16 | 17 | 18 | 19 | 20 | 21 |



## ພວກຜູ້ປົກຄອງ

JUDGES

### 1 ເຜົ່າຢູດາ ແລະຊີເມໂອນຈັບອາໂດນີເບເຊກ

Israel’s Failure to Complete The Conquest of Canaan

(ຢຊຍ 15:13-19)

1 ຢູ່ມາ ເມື່ອໂຢຊວຍໄດ້ເສັຽຊີວິດແລ້ວ ຄົນອິສຣາເອນທູນຖາມພຣະຜູ້ເປັນເຈົ້າວ່າ, “ໃຜໃນພວກຂ້າພຣະອົງທັງ
ຫລາຍຈະຂຶ້ນໄປກ່ອນເພື່ອສູ້ຮົບກັບຄົນການາອານ”
2 ພຣະຜູ້ເປັນເຈົ້າກ່າວວ່າ, “ຢູດາຈະຂຶ້ນໄປ ເບິ່ງແມ່, ເຮົາໄດ້ມອບແຜ່ນດິນນັ້ນໄວ້ໃນກຳມືເຂົາແລ້ວ”
3 ຢູດາຈຶ່ງເວົ້າກັບຊີເມໂອນອ້າຍຂອງຕົນວ່າ, “ຈົ່ງຂຶ້ນໄປກັບເຮົາ ໃນເຂດແດນທີ່ກຳນົດໃຫ້ແກ່ເຮົາ ເພື່ອເຮົາຈະ
ໄດ້ຕໍ່ສູ້ກັບຄົນການາອານ ແລະເຮົາຈະໄປຮ່ວມຮົບໃນເຂດແດນທີ່ກຳນົດໃຫ້ແກ່ທ່ານນັ້ນເຫມືອນກັນ” ຊີເມ
ໂອນກໍໄປກັບເຂົາ
4 ແລ້ວຢູດາກໍຂຶ້ນໄປ ແລະພຣະຜູ້ເປັນເຈົ້າຊົງມອບຄົນການາອານ ຄົນເປຣິສຊີໄວ້ໃນມືຂອງເຂົາ ແລະເຂົາກໍປະ
ຫານຄົນທີ່ເມືອງເບເຊກ ແລະເຂົາໄດ້ປະຫານຄົນໃນເມືອງເບເຊກນຶ່ງຫມື່ນຄົນ
5 ເຂົາທັງຫລາຍພົບອາໂດນີເບເຊກໃນເມືອງເບເຊກ ແລະຕໍ່ສູ້ກັບທ່ານ ເຂົາໄດ້ປະຫານຄົນການາອານ ແລະຄົນ
ເປຣິສຊີ
6 ອາໂດນີເບເຊກໄດ້ຫນີໄປ ແຕ່ເຂົາຕາມຈັບໄດ້ຕັດນິ້ວຫົວໂປ້ມື ແລະນິ້ວຫົວໂປ້ຕີນຂອງທ່ານອອກເສັຽ
7 ອາໂດນີເບເຊກກ່າວວ່າ, “ມີກະສັດເຈັດສິບອົງທີ່ມີຫົວໂປ້ມືແລະຫົວໂປ້ຕີນດ້ວນ ເກັບເສດອາຫານຢູ່ໃຕ້ໂຕະ
ຂອງເຮົາ ເຮົາກະທຳແກ່ເຂົາຢ່າງໃດ ພຣະຜູ້ເປັນເຈົ້າຈຶ່ງຊົງກະທຳແກ່ເຮົາຢ່າງນັ້ນ” ເຂົາທັງຫລາຍກໍຄຸມຕົວ
ທ່ານມາທີ່ກຸງເຢຣູຊາເລັມ ແລະທ່ານກໍເສັຽຊີວິດຢູ່ທີ່ນັ້ນ

**ເຜົ່າຢູດາຊະນະເມືອງເຢຣູຊາເລັມ ແລະ
ເມືອງເຮໂບຣນ**

8 ແລະຄົນຢູດາໄດ້ເຂົ້າໂຈມຕີເມືອງເຢຣູຊາເລັມ ແລະຍຶດເມືອງໄດ້ ຈຶ່ງຂ້າຟັນຊາວເມືອງເສັຽດ້ວຍຄົມດາບ
ແລະເອົາໄຟເຜົາເມືອງເສັຽ
9 ພາຍຫລັງຄົນເຜົ່າຢູດາໄດ້ລົງໄປສູ້ຮົບກັບຄົນການາອານຜູ້ຊຶ່ງຕັ້ງຢູ່ຕາມແຖບພູໃນເນເກັບ ແລະທີ່ຢູ່ຕາມຕີນພູ
10 ແລະຢູດາໄດ້ໄປສູ້ຮົບກັບຄົນການາອານຜູ້ຢູ່ໃນ
ເຮໂບຣນ (ເມືອງເຮໂບຣນນັ້ນແຕ່ກ່ອນມີຊື່ວ່າ
ກີຣີອາດອາຣ໌ບາ) ແລະເຂົາທັງຫລາຍໄດ້ປະຫານ
ເຊຊັຍ ແລະອາຮີມານ ແລະຕັນມັຍ

**ໂອດນີເອນຊະນະເມືອງເດບີຣ໌ ແລະໄດ້ຮັບນາງສາວອັກສາ**

11 ເຂົາທັງຫລາຍຍົກມາຈາກທີ່ນັ້ນໄປຕໍ່ສູ້ຮົບກັບຊາວເມືອງເດບີຣ໌ (ເມືອງເດບີຣ໌ນັ້ນແຕ່ກ່ອນມີຊື່ວ່າ ກີຣີອາດເຊເຟີ)
12 ແລະກາເລັບກ່າວວ່າ, "ໃຜໂຈມຕີເມືອງກີຣີອາດເຊເຟີ ແລະຍຶດໄດ້ ເຮົາຈະຍົກອັກສາບຸດສາວຂອງເຮົາໃຫ້ເປັນເມັຽ"
13 ໂອດນີເອນບຸດເກນັສ ນ້ອງຊາຍຂອງກາເລັບຕີເມືອງນັ້ນໄດ້ ທ່ານຈຶ່ງຍົກອັກສາບຸດສາວຂອງຕົນໃຫ້ເປັນເມັຽ
14 ຢູ່ມາເມື່ອແຕ່ງງານກັນແລ້ວ ນາງຈຶ່ງຊວນຜົວໃຫ້ຂໍທີ່ດິນຈາກບິດາ ນາງກໍລົງມາຈາກຫລັງລໍ ກາເລັບຈຶ່ງຖາມນາງວ່າ, "ເຈົ້າມາມີເຣື່ອງຫຍັງ"
15 ນາງຈຶ່ງຕອບທ່ານວ່າ, "ຂໍຂອງຂວັນໃຫ້ລູກຈັກຢ່າງນຶ່ງເຖີດ ເມື່ອພໍ່ໃຫ້ຂ້ານ້ອຍມາຢູ່ໃນດິນແດນເນເກັບແລ້ວ ລູກຂໍນ້ຳພຸນຳ" ແລະກາເລັບກໍຍົກນ້ຳພຸທາງເທິງແລະນ້ຳພຸທາງລຸ່ມໃຫ້ແກ່ນາງ

**ເຂດແດນທີ່ເຜົ່າຢູດາ ແລະເບັນຢາມິນຍຶດຄອງ**

16 ຄົນເກນິດພໍ່ເຖົ້າຂອງໂມເຊໄດ້ຂຶ້ນໄປຈາກເມືອງດົງຕົ້ນຕານ ພ້ອມກັບຄົນຢູດາມາເຖິງຖິ່ນກັນດານຢູດາຊຶ່ງຢູ່ໃນເນເກັບໃກ້ອາຣາດ ແລະເຂົາກໍເຂົ້າໄປຕັ້ງຢູ່ກັບຊົນຊາດນັ້ນ
17 ຢູດາກໍຍົກໄປຮ່ວມກັບຊີເມໂອນອ້າຍຂອງເຂົາປະຫານຄົນການາອານຊຶ່ງຢູ່ໃນເມືອງເຊຟັທ ແລະທຳລາຍເມືອງນັ້ນເສັຽຢ່າງສິ້ນເຊີງ ເຂົາຈຶ່ງເອີ້ນຊື່ເມືອງນັ້ນວ່າໂຮຣ໌ມາ
18 ຢູດາໄດ້ຍຶດເມືອງກາຊາພ້ອມທັງອານາເຂດ ແລະເມືອງອັສເກໂລນພ້ອມທັງອານາເຂດ ແລະເມືອງເອກໂລນພ້ອມທັງອານາເຂດໄວ້ດ້ວຍ
19 ພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບຢູດາ ເຂົາຈຶ່ງຂັບໄລ່ຊາວພູດອຍອອກໄປ ແຕ່ຈະຂັບໄລ່ຊາວເມືອງທີ່ຢູ່ໃນທີ່ຮາບພຽງນັ້ນບໍ່ໄດ້ ເພາະພວກເຫລົ່ານັ້ນມີຣົດຮົບເຫລັກ
20 ເມືອງເຮໂບຣນນັ້ນເຂົາຍົກໃຫ້ກາເລັບດັ່ງທີ່ໂມເຊໄດ້ກ່າວໄວ້ ກາເລັບຈຶ່ງຂັບໄລ່ບຸດຊາຍທັງສາມຄົນຂອງອານາກອອກໄປເສັຽ
21 ແຕ່ຄົນເບັນຢາມິນບໍ່ໄດ້ຂັບໄລ່ຄົນເຢບຸສຜູ້ຢູ່ໃນເຢຣູຊາເລັມໃຫ້ອອກໄປ ດັ່ງນັ້ນຄົນເຢບຸສຈຶ່ງອາໄສຢູ່ກັບຄົນເບັນຢາມິນໃນເຢຣູຊາເລັມຈົນເຖິງທຸກວັນນີ້

**ເຊື້ອສາຍໂຢເຊັບຊະນະເມືອງເບັດເອນ**

22 ເຊື້ອສາຍຂອງໂຢເຊັບໄດ້ຂຶ້ນໄປໂຈມຕີເມືອງເບັດເອນ ແລະພຣະຜູ້ເປັນເຈົ້າຊົງສະຖິດກັບເຂົາ
23 ເຊື້ອສາຍຂອງໂຢເຊັບໄດ້ໃຊ້ຄົນໄປສອດແນມເມືອງເບັດເອນ (ແຕ່ກ່ອນເມືອງນີ້ຊື່ ລູຊ)
24 ແລະຜູ້ສອດແນມເຫັນຊາຍຄົນນຶ່ງຍ່າງອອກມາຈາກເມືອງ ຈຶ່ງເວົ້າກັບເຂົາວ່າ, "ຂໍຊີ້ທາງເຂົ້າເມືອງນີ້ໃຫ້ແກ່ເຮົາ ແລະເຮົາຈະປານີເຈົ້າ"
25 ຊາຍຄົນນັ້ນກໍຊີ້ທາງເຂົ້າເມືອງໃຫ້ ແລະເຂົາປະຫານເມືອງນັ້ນ ທຳລາຍເສັຽດ້ວຍຄົມດາບ ແຕ່ເຂົາປ່ອຍໃຫ້ຊາຍຄົນນັ້ນ ແລະຍາດຕິພີ່ນ້ອງຂອງເຂົາລອດໄປ
26 ຊາຍຄົນນັ້ນກໍເຂົ້າໄປໃນແຜ່ນດິນຂອງຄົນຮິດຕິ ແລະສ້າງເມືອງຂຶ້ນເມືອງນຶ່ງເອີ້ນຊື່ວ່າເມືອງ ລູຊ ຊຶ່ງເປັນຊື່ຢູ່ຈົນເຖິງທຸກວັນນີ້
27 ມານັສເຊບໍ່ໄດ້ຂັບໄລ່ຊາວເມືອງເບັດເຊອານ ແລະຊາວຊົນນະບົດຂອງເມືອງນັ້ນໃຫ້ອອກໄປ ຫລືຊາວເມືອງຕາອານາກກັບຊາວຊົນນະບົດຂອງເມືອງນັ້ນ ຫລືຊາວເມືອງໂດຣ໌ກັບຊາວຊົນນະບົດຂອງເມືອງນັ້ນ ຫລືຊາວເມືອງອິບເລອາມກັບຊາວຊົນນະບົດຂອງເມືອງນັ້ນ ຫລືຊາວເມືອງເມກິດໂດກັບຊາວຊົນນະບົດຂອງເມືອງນັ້ນ ແຕ່ຄົນການາອານຍັງສືບຕໍ່ອາໄສຢູ່ໃນແຜ່ນດິນນັ້ນ
28 ຢູ່ມາເມື່ອຄົນອິສຣາເອນມີກຳລັງເຂັ້ມແຂງຂຶ້ນກໍບັງຄັບຄົນການາອານໃຫ້ທຳງານໂຍທາ ແຕ່ບໍ່ໄດ້ຂັບໄລ່ໃຫ້ເຂົາອອກໄປໃຫ້ຫມົດ

29 ແລະເອຟຣາອິມບໍ່ໄດ້ຂັບໄລ່ຄົນການາອານຜູ້ອາໄສຢູ່ໃນເມືອງເກເຊີໃຫ້ອອກໄປ ແຕ່ຄົນການາອານຍັງອາໄສຢູ່ໃນເມືອງເກເຊີຖ້າມກາງເຂົາ

**ເຂດແດນທີ່ເຜົ່າອື່ນໆຍຶດຄອງ**

30 ເຊບູລູນບໍ່ໄດ້ຂັບໄລ່ຊາວເມືອງກິດໂຣນ ຫລືຊາວເມືອງນາຮາໂລນ ແຕ່ຄົນການາອານໄດ້ອາໄສຢູ່ຖ້າມກາງເຂົາແລະຖືກເກນໃຫ້ທຳງານໂຍທາ

31 ອາເຊີບໍ່ໄດ້ຂັບໄລ່ຊາວເມືອງອັກໂກ ຫລືຊາວເມືອງຊີໂດນ ຫລືຊາວເມືອງອາລາບ ຫລືຊາວເມືອງອັກຊີບ ຫລືຊາວເມືອງເຮນບາ ຫລືຊາວເມືອງອາຟີກ ຫລືຊາວເມືອງເຣໂຮບ

32 ແຕ່ຄົນເຜົ່າອາເຊີໄດ້ອາໄສຢູ່ຖ້າມກາງຄົນການາອານຊາວແຜ່ນດິນນັ້ນ ເພາະວ່າເຂົາທັງຫລາຍບໍ່ໄດ້ຂັບໄລ່ໃຫ້ອອກໄປເສັຽ

33 ເນັຟທາລີບໍ່ໄດ້ຂັບໄລ່ຊາວເມືອງເບັດເຊເມສ ຫລືຊາວເມືອງເບັດອານັທ ແຕ່ອາໄສຢູ່ໃນໝູ່ຄົນການາອານຊາວແຜ່ນດິນນັ້ນ ແຕ່ຢ່າງໃດກໍດີຊາວເມືອງເບັດເຊເມສ ແລະຊາວເມືອງເບັດອານັທກໍຖືກເກນໃຫ້ທຳງານໂຍທາ

34 ຄົນອາໂມຣິດໄດ້ບັງຄັບຄົນເຜົ່າດານໃຫ້ກັບເຂົ້າໄປໃນພູດອຍບໍ່ຍອມໃຫ້ລົງມາຍັງທີ່ລຸ່ມ

35 ຄົນອາໂມຣິດຍັງສືບຕໍ່ອາໄສຢູ່ທີ່ຮາຣ໌ເຮເຣສໃນເມືອງອັຍຢາໂລນ ແລະໃນເມືອງຊາອັນບິມ ແຕ່ມືເຊື້ອສາຍໂຢເຊັບເໜືອກວ່າມືເຂົາທັງຫລາຍ ເຂົາຈຶ່ງຖືກເກນໃຫ້ທຳງານໂຍທາ

36 ອານາເຂດຂອງຄົນອາໂມຣິດຕັ້ງຕົ້ນແຕ່ທາງຂ້າມພູອັກຣັບບິມ ຕັ້ງແຕ່ເມືອງເຊລາຂຶ້ນໄປ

## 2 ທູດຂອງພຣະຜູ້ເປັນເຈົ້າທີ່ໂບຄີມ

Israel's Disobedience

1 ຕໍ່ມາ ທູດຂອງພຣະຜູ້ເປັນເຈົ້າໄດ້ສະເດັດມາຈາກເມືອງກິນການເພື່ອໄປໂບຄີມ ທູດອົງນີ້ເວົ້າຕໍ່ພວກອິສຣາເອນວ່າ, “ເຮົາພາພວກເຈົ້າອອກມາຈາກປະເທດເອຢິບ ແລະນຳເຂົ້າໄປໃນແຜ່ນດິນທີ່ໄດ້ສັນຍາໄວ້ກັບປູ່ຍ່າຕາຍາຍຂອງພວກເຈົ້າ ເຮົາໄດ້ບອກພວກເຈົ້າວ່າ ເຮົາຈະບໍ່ລຶບລ້າງຄຳໝັ້ນສັນຍາທີ່ມີໄວ້ກັບພວກເຈົ້າຈັກເທື່ອ

2 ແລະພວກເຈົ້າຕ້ອງທຳລາຍແທ່ນບູຊາຂອງພວກເຂົານັ້ນຖິ້ມໝົດເສັຽ ແຕ່ພວກເຈົ້າບໍ່ໄດ້ທຳຕາມທີ່ເຮົາໄດ້ບອກໄວ້ ພວກເຈົ້າກັບໄປທຳຢ່າງອື່ນແທນ

3 ສະນັ້ນເຮົາຂໍບອກພວກເຈົ້າດຽວນີ້ວ່າ ເຮົາຈະບໍ່ຂັບໄລ່ປະຊາຊົນເຫລົ່ານີ້ອອກໄປຈາກບ່ອນທີ່ພວກເຈົ້າຈະໄປຢູ່ນັ້ນ ພວກເຂົາຈະເປັນຜູ້ຂົ່ມເຫັງພວກເຈົ້າ ແລະພຣະຂອງເຂົາຈະເປັນສິ່ງທີ່ລໍ້ລວງໃຫ້ພວກເຈົ້າໄດ້ຮັບເຄາະຮ້າຍ”

4 ເມື່ອທູດຂອງພຣະຜູ້ເປັນເຈົ້າເວົ້າດັ່ງນັ້ນແລ້ວ ພວກອິສຣາເອນກໍພາກັນຮ້ອງໄຫ້

5 (ດັ່ງນັ້ນບ່ອນນີ້ຈຶ່ງໄດ້ເອີ້ນວ່າໂບຄີມ) ແລ້ວພວກເຂົາກໍເອົາເຄື່ອງບູຊາຖວາຍແດ່ພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ

**ໂຢຊວຍເສັຽຊີວິດ**

Death of Joshua

(ຢຊຍ 24:29-31)

6 ເມື່ອໂຢຊວຍໄດ້ສົ່ງພວກອິສຣາເອນກັບຄືນເມືອ ພວກເຂົາແຕ່ລະຄົນກໍໄປຮັບເອົາສ່ວນແບ່ງຂອງຕົນໃນແຜ່ນດິນນັ້ນ

7 ພວກອິສຣາເອນຮັບໃຊ້ພຣະຜູ້ເປັນເຈົ້າຕລອດຊົ່ວຊີວິດຂອງໂຢຊວຍ ແລະຫລັງຈາກທ່ານເສັຽຊີວິດໄປແລ້ວ
ພວກເຂົາກໍຍັງຮັບໃຊ້ພຣະອົງຕໍ່ໄປຈົນຕລອດຊົ່ວອາຍຸຂອງພວກຜູ້ນຳ ພວກຜູ້ນຳເຫລົ່ານີ້ເປັນຜູ້ຮູ້ຈັກກິຈການ
ທຸກຢ່າງທີ່ພຣະຜູ້ເປັນເຈົ້າຊົງກະທຳຕໍ່ພວກອິສຣາເອນ
8 ໂຢຊວຍບຸດຂອງນູນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ໄດ້ເສັຽຊີວິດໄປເມື່ອອາຍຸໄດ້ຮ້ອຍສິບປີ
9 ສົບຂອງທ່ານໄດ້ຝັງໄວ້ໃນດິນຂອງທ່ານເອງ ຢູ່ເທິງພູເອຟຣາອິມທີ່ເມືອງຕິມນັທເຮເຣສ ຢູ່ທາງທິດເຫນືອຂອງ
ພູກາອັສ
10 ຕໍ່ມາ ຄົນທຸກຄົນໃນສມັຍດຽວກັນນັ້ນກໍເສັຽຊີວິດໄປເຊັ່ນດຽວກັນ ແຕ່ພວກທີ່ເກີດໃຫມ່ໃຫຍ່ລຸນໄດ້ລືມພຣະຜູ້
ເປັນເຈົ້າໄປຫມົດຕລອດທັງທຸກສິ່ງທີ່ພຣະອົງໄດ້ຊົງກະທຳຕໍ່ພວກອິສຣາເອນ

**ອິສຣາເອນປະລະການນະມັສການພຣະຜູ້ເປັນເຈົ້າ**

Israel's Unfaithfulness

11 ເມື່ອພວກອິສຣາເອນທຳຜິດຕໍ່ສູ້ພຣະຜູ້ເປັນເຈົ້າ ແລະຮັບໃຊ້ພຣະບາອານ
12 ພວກເຂົາໄດ້ປະລະການນະມັສການພຣະຜູ້ເປັນເຈົ້າແຫ່ງປູ່ຍ່າຕາຍາຍຂອງເຂົາ ຜູ້ຊົງນຳຫນ້າເຂົາອອກຈາກ
ປະເທດເອຢິບ ພວກເຂົາພາກັນເລີ້ມນະມັສການພຣະອື່ນ ຊຶ່ງເປັນພຣະຂອງຊົນຊາດຕ່າງໆທີ່ຢູ່ອ້ອມຮອບເຂົາ
ນັ້ນ ພວກເຂົາໄດ້ພາກັນຂາບໄຫວ້ພຣະເຫລົ່ານີ້ ແລະທຳໃຫ້ພຣະຜູ້ເປັນເຈົ້າຊົງພຣະພິໂຣດ
13 ພວກເຂົາໄດ້ປະຖິ້ມການນະມັສການພຣະຜູ້ເປັນເຈົ້າແລະຮັບໃຊ້ພຣະບາອານກັບພຣະອັຊຕາຣ໌ເຕສທັງຫລາຍ
14 ສ່ວນພຣະຜູ້ເປັນເຈົ້າກໍຊົງພຣະພິໂຣດຕໍ່ພວກອິສຣາເອນ ພຣະອົງຈຶ່ງຊົງທຳໃຫ້ພວກໂຈນເຂົ້າມາໂຈມຕີແລະ
ປຸ້ນພວກເຂົາ ແລະພຣະອົງຍັງຊົງປ່ອຍໃຫ້ພວກສັດຕຣູທີ່ຢູ່ອ້ອມຮອບນັ້ນຊະນະພວກເຂົາ ພວກອິສຣາເອນກໍບໍ່
ສາມາດປ້ອງກັນຕົວເອງໄດ້
15 ທຸກໆເທື່ອທີ່ພວກເຂົາອອກໄປສູ້ຮົບ ພຣະຜູ້ເປັນເຈົ້າກໍຊົງຕໍ່ສູ້ພວກເຂົາຕາມທີ່ພຣະອົງຊົງບອກໄວ້ແລ້ວ ພວກ
ເຂົາໄດ້ຕົກຢູ່ໃນພາວະຂັດສົນຢ່າງໃຫຍ່ຫລວງ
16 ເວລາຕໍ່ມາ ພຣະຜູ້ເປັນເຈົ້າໄດ້ຊົງໂຜດໃຫ້ພວກອິສຣາເອນມີຜູ້ປົກຄອງທີ່ເຂັ້ມແຂງ ເພື່ອຊ່ອຍໃຫ້ພົ້ນຈາກ
ເງື້ອມມືຂອງພວກໂຈນ
17 ແຕ່ພວກເຂົາບໍ່ຍອມປະຕິບັດຕາມຄຳສັ່ງຂອງພວກຜູ້ປົກຄອງເຫລົ່ານັ້ນ ແລ້ວບໍ່ສັດຊື່ຕໍ່ພຣະຜູ້ເປັນເຈົ້າໂດຍໄປ
ນະມັສການ ພຣະອື່ນ ພໍ່ແມ່ຂອງພວກເຂົາໄດ້ຟັງຄຳສັ່ງຂອງພຣະຜູ້ເປັນເຈົ້າແຕ່ເຂົາເອງບໍ່ໄດ້ປະຕິບັດຕາມ
18 ທຸກເທື່ອທີ່ພຣະຜູ້ເປັນເຈົ້າຊົງໂຜດໃຫ້ເຂົາມີຜູ້ປົກຄອງ ພຣະອົງກໍຊົງຊ່ອຍເຫລືອຜູ້ນັ້ນ ແລະຊົງຊ່ອຍປະຊາຊົນ
ໃຫ້ພົ້ນຈາກເງື້ອມມືຂອງສັດຕຣູຕລອດຊົ່ວຊີວິດຂອງຜູ້ປົກຄອງຄົນນັ້ນ ພຣະຜູ້ເປັນເຈົ້າຊົງມີຄວາມເມດຕາ
ເຂົາ ເພາະວ່າພວກເຂົາໄດ້ຮ້ອງຄວນຄາງຢ່າງທໍຣະມານຍ້ອນຖືກກົດຂີ່ຂົ່ມເຫັງ
19 ແຕ່ເມື່ອຜູ້ປົກຄອງເສັຽຊີວິດໄປແລ້ວ ພວກປະຊາຊົນກໍກັບຄືນມາທຳຢ່າງເກົ່າ ແລະທຳການຊົ່ວຮ້າຍ
ຫລາຍກວ່າພໍ່ແມ່ເຂົາ ພວກເຂົາຕິດຕາມພຣະອື່ນທັງຮັບໃຊ້ແລະບົວລະບັດພຣະນັ້ນ ພວກເຂົາດື້ດ້ານຖືຮີດ
ຄອງອັນຊົ່ວຮ້າຍ
20 ດ້ວຍເຫດນີ້ ພຣະຜູ້ເປັນເຈົ້າຈຶ່ງຊົງພຣະພິໂຣດພວກອິສຣາເອນຫລາຍຂຶ້ນ ແລະຊົງກ່າວວ່າ, "ເພາະຊົນຊາດ
ເຫລົ່ານີ້ ໄດ້ທຳລາຍຄຳສັນຍາທີ່ເຮົາມີໄວ້ກັບບັນພະບຸຣຸດຂອງພວກເຂົາ ແລະເຂົາບໍ່ໄດ້ຟັງຄຳຂອງເຮົາ
21 ແຕ່ນີ້ຕໍ່ໄປ ເຮົາຈະບໍ່ຂັບໄລ່ຊົນຊາດໃດທີ່ຍັງເຫລືອຢູ່ໃນປະເທດນີ້ ຊຶ່ງນັບຕັ້ງແຕ່ການເສັຽຊີວິດຂອງໂຢຊວຍມາ
22 ເພື່ອເຮົາຈະໄດ້ຮູ້ວ່າ ພວກອິສຣາເອນຈະຕິດຕາມເສັ້ນທາງຂອງເຮົາຕາມທີ່ບັນພະບຸຣຸດຂອງພວກເຂົາໄດ້ປະຕິ
ບັດມານັ້ນຫລືບໍ່"
23 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງປ່ອຍຊົນຊາດທີ່ບໍ່ໄດ້ຢູ່ໃຕ້ອຳນາດຂອງໂຢຊວຍນັ້ນໄວ້ ໂດຍບໍ່ໄດ້ຂັບໄລ່ເຂົາ
ອອກຢ່າງກະທັນຫັນ

## 3 ປະຊາຊາດຊຶ່ງຊົງໃຫ້ເຫລືອໄວ້ເພື່ອທົດສອບຄົນອິສຣາເອນ

Nations remaining in the Land

1 ຕໍ່ໄປນີ້ເປັນປະຊາຊາດທີ່ພຣະຜູ້ເປັນເຈົ້າຊົງໃຫ້ເຫລືອໄວ້ ເພື່ອໃຊ້ທົດສອບຄົນອິສຣາເອນ ຜູ້ຊຶ່ງຍັງບໍ່ເຄີຍປະ
ສົບສົງຄາມໃນການາອານ
2 ແຕ່ພຽງຊົງໃຫ້ຊາດເຊື້ອສາຍຄົນອິສຣາເອນເຂົ້າໃຈເຣື່ອງການສົງຄາມ ເພື່ອຢ່າງນ້ອຍພຣະອົງຈະໄດ້ຊົງສອນ
ແກ່ຜູ້ທີ່ຍັງບໍ່ຮູ້ມາກ່ອນ
3 ຄືເຈົ້ານາຍທັງຫ້າຂອງພວກຟີລິສຕິນ ຄົນການາອານທັງຫມົດ ຊາວຊີໂດນ ແລະຄົນຮີວີຜູ້ອາໄສຢູ່ເທິງພູເລບາ
ນອນ ຕັ້ງແຕ່ພູບາອັນເຮີໂມນຈົນເຖິງທາງເຂົ້າເມືອງເລໂບຮາມັທ
4 ເຫລືອຄົນເຫລົ່ານີ້ຢູ່ເພື່ອທົດສອບຄົນອິສຣາເອນເພື່ອໃຫ້ຮູ້ວ່າອິສຣາເອນຈະເຊື່ອຟັງພຣະທັມບັນຍັດຂອງພຣະ
ເຈົ້າ ຊຶ່ງພຣະອົງຊົງບັນຊາໄວ້ກັບບັນພະບຸຣຸດຂອງເຂົາໂດຍຜ່ານທາງໂມເຊນັ້ນຫລືບໍ
5 ດັ່ງນັ້ນແຫລະ ຄົນອິສຣາເອນຈຶ່ງອາໄສຢູ່ໃນຫມູ່ຄົນການາອານ ຄົນຮິດຕີ ຄົນອາໂມຣິດ ຄົນເປຣິສຊີ ຄົນຮີວີ
ແລະຄົນເຢບຸສ
6 ເຂົາໄປສູ່ຂໍບຸດສາວຊົນຊາດເຫລົ່ານັ້ນມາເປັນເມັຽແລະຍົກບຸດສາວຂອງຕົນໃຫ້ແກ່ບຸດຊາຍຂອງຄົນເຫລົ່ານັ້ນ
ແລະໄດ້ບົວລະບັດພຣະຂອງເຂົາເຫລົ່ານັ້ນ

### ໂອທນີເອນ

Othniel

7 ຄົນອິສຣາເອນໄດ້ກະທຳຄວາມຊົ່ວໃນສາຍພຣະເນດພຣະຜູ້ເປັນເຈົ້າ ລືມພຣະຜູ້ເປັນເຈົ້າພຣະເຈົ້າຂອງຕົນ
ເສັຽ ໄປບົວລະບັດພຣະບາອານທັງຫລາຍແລະພວກພຣະອັຊຕາຣ໌ເຕສ
8 ເພາະສະນັ້ນພຣະພິໂຣດຂອງພຣະຜູ້ເປັນເຈົ້າກໍພຸ່ງຂຶ້ນຕໍ່ອິສຣາເອນ ແລະພຣະອົງຊົງຂາຍເຂົາໄວ້ໃນມືກູຊານ
ຣິຊາທາອິມກະສັດເມືອງເມໂຊໂປຕາເມັຽແລະຄົນອິສຣາເອນໄດ້ປະຕິບັດກູຊານຣິຊາທາອິມແປດປີ
9 ແຕ່ເມື່ອຄົນອິສຣາເອນຮ້ອງທູນພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຊົງໃຫ້ເກີດຜູ້ຊ່ອຍແກ່ຄົນອິສຣາເອນ ຜູ້ໄດ້ຊ
່ອຍເຂົາທັງຫລາຍໃຫ້ລອດ ຄືໂອທນີເອນບຸດເກນັສ ນ້ອງຊາຍຂອງກາເລັບ
10 ພຣະວິນຍານຂອງພຣະຜູ້ເປັນເຈົ້າຊົງສະຖິດກັບໂອທນີເອນ ແລະທ່ານຈຶ່ງປົກຄອງຄົນອິສຣາເອນ ແລະອອກ
ໄປທຳສົງຄາມ ແລະພຣະຜູ້ເປັນເຈົ້າຊົງມອບກູຊານຣິຊາທາອິມກະສັດເມືອງເມໂຊໂປຕາເມັຽໄວ້ໃນມືຂອງ
ທ່ານ ແລະມືຂອງທ່ານ   ຊະນະກູຊານຣິຊາທາອິມ
11 ດັ່ງນັ້ນແຜ່ນດິນຈຶ່ງໄດ້ຢຸດພັກສງົບຢູ່ເປັນເວລາສີ່ສິບປີ ແລ້ວໂອທນີເອນບຸດເກນັສກໍເສັຽຊີວິດ

### ເອຮູດ

Ehud

12 ຄົນອິສຣາເອນກະທຳຄວາມຊົ່ວໃນສາຍພຣະເນດພຣະຜູ້ເປັນເຈົ້າອີກ ພຣະຜູ້ເປັນເຈົ້າຈຶ່ງຊົງເສີມກຳລັງເອກ
ໂລນ ກະສັດເມືອງໂມອາບເພື່ອຕໍ່ສູ້ອິສຣາເອນ ເພາະວ່າເຂົາທັງຫລາຍໄດ້ປະພຶດຊົ່ວໃນໃນສາຍພຣະເນດ
ຂອງພຣະຜູ້ເປັນເຈົ້າ
13 ທ່ານຈຶ່ງໄດ້ໃຫ້ຄົນອັມໂມນ ແລະຄົນອາມາເລກມາສົມທົບ ຍົກໄປໂຈມຕີອິສຣາເອນ ແລະໄດ້ຍຶດເມືອງດົງຕົ້ນ
ຕານໄວ້
14 ແລະຄົນອິສຣາເອນຈຶ່ງປະຕິບັດເອກໂລນກະສັດເມືອງໂມອາບຢູ່ເຖິງສິບແປດປີ

15 ແຕ່ເມື່ອຄົນອິສຣາເອນຮ້ອງທູນພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຊົງໃຫ້ເກີດຜູ້ຊ່ອຍຄົນນຶ່ງແກ່ເຂົາທັງຫລາຍ ຄື
ເອຮູດ ບຸດເກຣາເຜົ່າເບັນຢາມິນ ຄົນຖະນັດມືຊ້າຍ ຄົນອິສຣາເອນໃຫ້ທ່ານເປັນຜູ້ນຳເອົາຂອງຂວັນໄປມອບ
ແກ່ເອກໂລນກະສັດເມືອງໂມອາບ
16 ເອຮູດໄດ້ທຳດາບສອງຄົມໄວ້ປະຈຳຕົວເຫລັ້ມນຶ່ງຍາວສອກນຶ່ງ ເຫນັບໄວ້ໃຕ້ຜ້າທີ່ຕົ້ນຂາຂວາ
17 ເຂົາກໍນຳຂອງຂວັນໄປມອບແກ່ເອກໂລນ ກະສັດເມືອງໂມອາບ ຝ່າຍເອກໂລນເປັນຄົນອ້ວນຫລາຍ
18 ເມື່ອເອຮູດມອບຂອງຂວັນແລ້ວ ທ່ານຈຶ່ງໄປສົ່ງຄົນທີ່ຫາບຫາມຂອງຂວັນນັ້ນ
19 ແລ້ວຕົວທ່ານກັບຄືນໄປຍັງຮູບເຄົາຣົບແກະສລັກທີ່ຢູ່ໃກ້ກິນການທູນວ່າ, “ຂ້າແດ່ກະສັດ ຂ້າພຣະອົງມີຂໍ້ຣາຊ
ການລັບທີ່ຈະກາບທູນໃຫ້ຊົງຊາບ” ກະສັດຈຶ່ງມີບັນຊາວ່າ, “ມິດ ມິດ” ບັນດາມະຫາດເລັກທີ່ເຝົ້າຢູ່ກໍທູນລາ
ອອກໄປຫມົດ
20 ເອຮູດກໍເຂົ້າໄປເຝົ້າທ່ານ ຂນະນັ້ນທ່ານປະທັບຢູ່ຄົນດຽວໃນຫ້ອງເຢັນຊັ້ນເທິງຂອງທ່ານ ແລະເອຮູດທູນວ່າ,
“ຂ້າພຣະອົງມີພຣະດຳຣັດຈາກພຣະຜູ້ເປັນເຈົ້າຖວາຍພຣະອົງ” ທ່ານຈຶ່ງລຸກຂຶ້ນຈາກພຣະທີ່ນັ່ງ
21 ເອຮູດກໍຍື່ນມືຊ້າຍຊັກດາບນັ້ນອອກຈາກຕົ້ນຂາຂວາແທງເຂົ້າໄປໃນທ້ອງຂອງເອກໂລນ
22 ດາບຈົມເຂົ້າໄປຫມົດທັງດ້າມ ໄຂມັນຫຸ້ມດາບໄວ້ ທ່ານເອກໂລນກໍບໍ່ຊັກດາບອອກຈາກທ້ອງຂອງທ່ານ ຂອງ
ເປິະເປື້ອນໄດ້ໄຫລອອກມາ
23 ແລ້ວເອຮູດອອກໄປທີ່ສະລຽງປິດປະຕູໄວ້ ແລະລັ່ນກຸນແຈເສັຽ
24 ເມື່ອເອຮູດໄປແລ້ວມະຫາດເລັກກໍເຂົ້າມາເບິ່ງ ເມື່ອເຂົາເຫັນວ່າຫ້ອງຊັ້ນເທິງປິດໃສ່ກຸນແຈຢູ່ ເຂົາທັງຫລາຍ
ຄິດວ່າ, “ພຣະອົງກຳລັງຊົງຢູ່ໃນຫ້ອງເຢັນ”
25 ເມື່ອຄອຍຢູ່ດົນສົມຄວນຈົນຣຳຄານ ບໍ່ເຫັນມີຜູ້ໃດເປີດຫ້ອງຊັ້ນເທິງ ເຂົາຈຶ່ງເອົາກະແຈມາໄຂເປີດອອກເບິ່ງ
ເຫັນເຈົ້ານາຍຂອງຕົນນອນສິ້ນຊີວິດຢູ່ເທິງພື້ນ
26 ເມື່ອເຂົາຕ່າງກໍຄອຍກັນຢູ່ນັ້ນ ເອຮູດກໍຫນີຜ່ານທາງຮູບເຄົາຣົບຫີນແກະສລັກແລະປົບຫນີໄປເຖິງເມືອງເຊອີ
ຣາ
27 ເມື່ອທ່ານມາເຖິງແລ້ວຈຶ່ງເປົ່າເຂົາສັດຂຶ້ນໃນພູດອຍເອຟຣາອິມ ແລ້ວຄົນອິສຣາເອນກໍຍົກລົງໄປກັບທ່ານຈາ
ກພູດອຍແລະທ່ານນຳເຂົາ
28 ທ່ານຈຶ່ງສັ່ງເຂົາວ່າ, “ຈົ່ງຕາມເຮົາມາ ເພາະພຣະຜູ້ເປັນເຈົ້າຊົງມອບສັດຕຣູຂອງທ່ານ ຄືຊາວໂມອາບໄວ້ໃນມື
ຂອງທ່ານແລ້ວ” ເຂົາທັງຫລາຍຈຶ່ງລົງຕາມທ່ານໄປ ແລະຍຶດທ່າຂ້າມນ້ຳຈໍແດນສະກັດຄົນໂມອາບໄວ້ບໍ່ຍອມ
ໃຫ້ໃຜຂ້າມໄປໄດ້ຈັກຄົນດຽວ
29 ໃນຄາວນັ້ນເຂົາປະຫານຄົນໂມອາບເສັຽປະມານນຶ່ງຫມື່ນຄົນ ລ້ວນແຕ່ຄົນສະກັນແລະລ່ຳສັນທັງສິ້ນ ບໍ່ພົ້ນໄປ
ໄດ້ຈັກຄົນດຽວ
30 ໂມອາບຈຶ່ງຜ່າຍແພ້ຢູ່ໃຕ້ມືຂອງອິສຣາເອນໃນວັນນັ້ນ ແລະແຜ່ນດິນອິສຣາເອນກໍໄດ້ຢຸດພັກສງົບຢູ່ແປດສິບປີ

**ຊັມກາ**

Shamgar

31 ພາຍຫລັງເອຮູດ ຕໍ່ມາແມ່ນຊັມກາບຸດອານັທຜູ້ໃຊ້ໄມ້ບັງຄັບງົວຂ້າຄົນຟີລິສຕິນເສັຽຫົກຮ້ອຍຄົນ ທ່ານກໍເປັນຜູ້
ຊ່ອຍອິສຣາເອນໃຫ້ລອດດ້ວຍເຫມືອນກັນ

## 4 ເດໂບຣາ ແລະບາຣາກ

Deborah and Barak

1 ຫລັງຈາກເອຮູດເສັຽຊີວິດໄປແລ້ວ ພວກອິສຣາເອນກໍທຳຜິດຕໍ່ສູ້ພຣະຜູ້ເປັນເຈົ້າ

2 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງມອບເຂົາໄວ້ໃຕ້ອຳນາດຂອງຢາບິນເຈົ້າຊີວິດຊາວການາອານທີ່ປົກຄອງຢູ່ໃນເມືອງຮາໂຊຣ໌ ແມ່ທັບຂອງທ່ານຊື່ວ່າ ຊີເຊຣາເປັນຊາວເມືອງຮາໂຣເຊທຮາກົວອີມ

3 ແລ້ວພວກອິສຣາເອນກໍຮ້ອງຂໍຄວາມຊ່ອຍເຫລືອຈາກພຣະຜູ້ເປັນເຈົ້າ ເພາະວ່າກະສັດຢາບິນມີຣົດຮົບເກົ້າຮ້ອຍຄັນ ແລະໄດ້ບີບບັງຄັບຊາວອິສຣາເອນຢ່າງຫນັກຢູ່ເຖິງຊາວປີ

4 ໃນເວລານັ້ນ ນາງເດໂບຣາເມັຽຂອງລັປປີໂດດ ເປັນຜູ້ປະກາດພຣະທັມ ແລະປົກຄອງພວກອິສຣາເອນ

5 ພວກອິສຣາເອນໄດ້ມາຫາທ່ານຢູ່ໃຕ້ຕົ້ນໄມ້ຂອງເດໂບຣາ ຢູ່ລະຫວ່າງກາງເມືອງຣາມາແລະເບັດເອນ ເພື່ອໃຫ້ທ່ານຕັດສິນຢ່າງຍຸດຕິທັມໃນບັນຫາຕ່າງໆ

6 ນາງເດໂບຣາຈຶ່ງໃຊ້ຄົນໄປຫາບາຣາກບຸດຂອງອາບີໂນອາມທີ່ມາຈາກເມືອງເກເດສໃນແຂວງເນັຟທາລີ ໂດຍເວົ້າວ່າ, "ພຣະຜູ້ເປັນເຈົ້າຂອງອິສຣາເອນໄດ້ສັ່ງແກ່ເຈົ້າວ່າ ໃຫ້ເກນເອົາພວກຜູ້ຊາຍສິບພັນຄົນຈາກຕະກູນເນັຟທາລີແລະເຊບູລູນ ເພື່ອພາໄປຍັງພູຕາໂບຣ໌

7 ສ່ວນເຮົາຈະທຳໃຫ້ຊີເຊຣາແມ່ທັບຂອງເຈົ້າຊີວິດຢາບິນ ພ້ອມທັງຣົດຮົບແລະຝູງທະຫານອອກໄປຕໍ່ສູ້ເຈົ້າທີ່ຫ້ວຍກີໂຊນ ແລະເຮົາຈະມອບເຂົາໄວ້ໃນມືຂອງເຈົ້າ"

8 ບາຣາກໄດ້ເວົ້າຕໍ່ນາງເດໂບຣາວ່າ, "ຂ້າພະເຈົ້າຈະອອກໄປ ຖ້າວ່າທ່ານໄປກັບຂ້າພະເຈົ້າ ແຕ່ວ່າຖ້າທ່ານບໍ່ໄປຂ້າພະເຈົ້າກໍຈະບໍ່ໄປຄືກັນ"

9 ນາງເດໂບຣາຈຶ່ງຕອບວ່າ, "ຕົກລົງ ຂ້າພະເຈົ້າຈະໄປກັບທ່ານ ແຕ່ວ່າທ່ານຈະບໍ່ໄດ້ຊື່ສຽງໃນໄຊຊະນະຄັ້ງນີ້ເພາະວ່າພຣະຜູ້ເປັນເຈົ້າຈະມອບຊີຊາເຣໄວ້ໃນກຳມືຂອງແມ່ຍິງຄົນນຶ່ງ" ແລ້ວນາງເດໂບຣາກໍໄປເມືອງເກເດສກັບບາຣາກ

10 ບາຣາກໄດ້ເກນເອົາສິບພັນຄົນຈາກຕະກູນເຊບູລູນແລະເນັຟທາລີ ເພື່ອໃຫ້ຕິດຕາມທ່ານໄປເມືອງເກເດສສ່ວນນາງເດໂບຣາກໍໄປເຫມືອນກັນ

11 ໃນຂນະນັ້ນ ເຮເບີຊາວເກນິດ ໄດ້ກາງຜ້າເຕັນພັກຢູ່ໃຕ້ຕົ້ນໄມ້ໃຫຍ່ທີ່ເອໂລນເບຊາອານັນນິມໃກ້ເມືອງເກເດສເພາະເຂົາໄດ້ແຍກຫນີຈາກພວກເກນິດເປັນເຊື້ອສາຍໂຮບັບຜູ້ເປັນພໍ່ເຖົ້າຂອງໂມເຊ

12 ຕໍ່ມາ ມີຄົນບອກຊີເຊຣາວ່າ, "ບາຣາກບຸດຂອງອາບີໂນອາມໄດ້ໄປເຖິງພູຕາໂບຣ໌ແລ້ວ"

13 ສ່ວນຊີເຊຣາກໍເອົາຣົດຮົບເກົ້າຮ້ອຍຄັນພ້ອມທັງກຳລັງພົນທັງຫມົດ ຍົກທັບອອກຈາກເມືອງຮາໂຣເຊັດຮາກົວອີມໄປຍັງ ຫ້ວຍກີໂຊນ

14 ຝ່າຍນາງເດໂບຣາໄດ້ບອກບາຣາກວ່າ, "ຈົ່ງອອກໄປ ວັນນີ້ເປັນວັນທີ່ພຣະຜູ້ເປັນເຈົ້າຊົງໃຫ້ເຈົ້າຊະນະຊີເຊຣາພຣະອົງຊົງນຳຫນ້າເຈົ້າ" ດັ່ງນັ້ນ ບາຣາກຈຶ່ງນຳທະຫານສິບພັນຄົນລົງຈາກພູຕາໂບຣ໌ໄປຕໍ່ສູ້ຊີເຊຣາ

15 ພຣະຜູ້ເປັນເຈົ້າກໍຊົງບັນດານໃຫ້ຊີເຊຣາພ້ອມດ້ວຍກອງທະຫານແລະຣົດຮົບສັບສົນວຸ້ນວາຍກັນ ຊີເຊຣາຈຶ່ງໂດດອອກຈາກຣົດຮົບແລະແລ່ນຫນີໄປ

16 ສ່ວນບາຣາກກໍໄລ່ຕິດຕາມຣົດຮົບແລະກອງທະຫານໄປ ຈົນເຖິງເມືອງຮາໂຣເຊທຮາກົວອີມ ແລ້ວທະຫານທັງຫມົດຂອງຊີເຊຣາໄດ້ຖືກຂ້າໂດຍບໍ່ເຫລືອຈັກຄົນ

17 ສ່ວນຊີເຊຣາໄດ້ປົບຫນີໄປຍັງຕູບຜ້າເຕັນຂອງນາງຢາເອນເມັຽຂອງເຮເບີຊາວເກນິດ ທ່ານຜູ້ນີ້ພ້ອມທັງຄອບຄົວເຄີຍຜູກສຳພັນທະໄມຕຣີກັບຢາບິນກະສັດແຫ່ງຮາໂຊຣ໌ມາແລ້ວ

18 ນາງຢາເອນໄດ້ອອກມາພົບຊີເຊຣາແລະເວົ້າວ່າ, "ເຊີນທ່ານເຂົ້າມາທາງໃນແລະບໍ່ຕ້ອງຢ້ານຫຍັງດອກ" ແລ້ວຊີເຊຣາກໍເຂົ້າໄປ ນາງຢາເອນຈຶ່ງເອົາຜ້າມາປົກຄຸມຕົວໃຫ້

19 ຊີເຊຣາໄດ້ເວົ້າຕໍ່ນາງວ່າ, "ຂ້າພະເຈົ້າຂໍດື່ມນ້ຳແດ່ ເພາະວ່າຂ້າພະເຈົ້າກະຫາຍນ້ຳຫລາຍ" ນາງຢາເອນຈຶ່ງໄຂຖົງນ້ຳນົມອອກໃຫ້ດື່ມ ແລ້ວເຊື່ອງທ່ານໄວ້ອີກ

20 ແລ້ວຊີເຊຣາບອກນາງອີກວ່າ, “ຂໍໃຫ້ເຈົ້າອອກໄປຢືນຢູ່ປາກປະຕູຜ້າເຕັນນີ້ ຖ້າມີຄົນມາຖາມວ່າ ມີຄົນມາລີ້ຢູ່ນີ້ບໍ ໃຫ້ບອກເຂົາວ່າ ບໍ່ມີເດີ”

21 ຍ້ອນຄວາມອິດເມື່ອຍ ຊີເຊຣາຈຶ່ງນອນຫລັບສນິດ ຝ່າຍນາງຢາເອນກໍເອົາຄ້ອນຕີແລະຫລັກໄມ້ຜ້າເຕັນຍ່າງຄ່ອຍໆເຂົ້າໄປຂ້າທ່ານ ໂດຍຕອກໄມ້ຫລັກນັ້ນໃສ່ຂະໜັບຂອງຊີເຊຣາຈົນຊອດຮອດຂີ້ດິນ

22 ເມື່ອບາຣາກມາຊອກຫາຊີເຊຣາ ນາງຢາເອນກໍອອກໄປພົບທ່ານແລະເວົ້າວ່າ, “ເຊີນມາທາງນີ້ ຂ້າພະເຈົ້າຈະໃຫ້ທ່ານພົບຜູ້ທີ່ທ່ານກຳລັງຊອກຫາ” ດັ່ງນັ້ນ ທ່ານຈຶ່ງເຂົ້າໄປກັບນາງແລະພົບຊີເຊຣານອນຕາຍຢູ່ໃນດິນໂດຍມີຫລັກໄມ້ສຽບຫົວຢູ່

23 ໃນວັນນັ້ນ ພຣະເຈົ້າຊົງກະທຳໃຫ້ເຈົ້າຊີວິດຢາບິນທີ່ປົກຄອງພວກການາອານເສັຽໄຊໃຫ້ພວກອິສຣາເອນ

24 ຝ່າຍພວກອິສຣາເອນກໍເພີ້ມກຳລັງຕໍ່ສູ້ຢາບິນກະສັດການາອານຈົນເຖິງພວກເຂົາໄດ້ທຳລາຍພຣະອົງເສັຽ

## 5 ເພງໄຊຊະນະຂອງເດໂບຣາແລະບາຣາກ

The Song of Deborah

1 ໃນວັນນັ້ນ ນາງເດໂບຣາແລະບາຣາກ ຜູ້ເປັນບຸດຂອງອາບີໂນອາມໄດ້ຮ້ອງເພງວ່າ, “

2 ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ຊາວອິສຣາເອນເຕັມໃຈໃນການເລວເສີກ ພວກເຂົາຍິນດີຮັບອາສາສມັກ

3 ເຈົ້າຊີວິດທັງຫລາຍຈົ່ງຟັງເທີ້ນ ແລະເຈົ້າຂຸນມຸນນາຍຈົ່ງຟັງດ້ວຍ ຂ້າພະເຈົ້າຈະຮ້ອງເພງແລະເສບດົນຕຣີຖວາຍແດ່ພຣະຜູ້ເປັນເຈົ້າຂອງພວກອິສຣາເອນ

4 ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອພຣະອົງສະເດັດມາຈາກພູເຊອີຣ໌ ແລະສະເດັດອອກມາຈາກເຂດເມືອງເອໂດມນັ້ນ ແຜ່ນດິນກໍຫວັ່ນໄຫວ ແລະຝົນກໍຕົກລົງມາຈາກທ້ອງຟ້າ ຊຶ່ງເປັນນ້ຳທີ່ຢາດຍ້ອຍລົງມາຈາກກ້ອນຂີ້ເຝືອ

5 ພູທັງຫລາຍກໍເຈື່ອນລົງຕໍ່ພຣະພັກພຣະຜູ້ເປັນເຈົ້າຂອງພູຊານາອີ ແລະພຣະພັກພຣະຜູ້ເປັນເຈົ້າຂອງພວກອິສຣາເອນ

6 ໃນສມັຍຂອງຊັມກາຣ໌ບຸດຂອງອານັທ ແລະໃນສມັຍຂອງຢາເອນນັ້ນ ບໍ່ມີຍວດຍານພາຫະນະທ່ອງທ່ຽວໃນດິນແດນນີ້ ແລະຜູ້ທີ່ເຄີຍສັນຈອນໄປມາກໍທ່ຽວທາງໂຄ້ງ

7 ເດໂບຣາເອີຍ ສ່ວນຫົວເມືອງຕ່າງໆຂອງພວກອິສຣາເອນກໍຖືກປະປ່ອຍ ເປັນເມືອງຮ້າງເປົ່າຈົນເຖິງເຈົ້າມາມາເປັນເຫມືອນແມ່ຂອງອິສຣາເອນ

8 ເມື່ອພວກອິສຣາເອນໄດ້ເລືອກເອົາພຣະອົງໃຫມ່ ໄດ້ມີເສິກເສືອເກີດຂຶ້ນໃນແຜ່ນດິນ ແຕ່ວ່າໃນຈຳນວນພວກຜູ້ຊາຍອິສຣາເອນສີ່ສິບພັນຄົນນີ້ ບໍ່ມີຜູ້ໃດຖືແຜ່ນເຫລັກຕ້ານທານ ຫລືຖືຫອກ

9 ຈິດໃຈຂອງຂ້າພະເຈົ້າກໍຢູ່ກັບຜູ້ຄຸ້ມຄອງອິສຣາເອນ ແລະປະຊາຊົນທີ່ມີໃຈອາສາສມັກ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ

10 ພວກຂີ່ລໍຂາວ ພວກທີ່ນັ່ງຢູ່ເທິງອານລໍ ພ້ອມທັງຜູ້ທີ່ຍ່າງໄປມາ ຈົ່ງຄິດເຖິງເຣື່ອງນີ້

11 ຈົ່ງຟັງເທີ້ນ ສຽງໂຮ່ຮ້ອງຍິນດີຂອງຝູງຊົນທີ່ຢູ່ອ້ອມຮອບນ້ຳສ້າງນັ້ນ ໄດ້ກ່າວເຖິງໄຊຊະນະແຫ່ງພຣະຜູ້ເປັນເຈົ້າແລະໄຊຊະນະຂອງພວກອິສຣາເອນ ພວກໄພ່ພົນຂອງພຣະຜູ້ເປັນເຈົ້າກໍພາກັນຍ່າງລົງໄປຈາກເມືອງຂອງພວກເຂົາ

12 ຈົ່ງຕື່ນເຖີດ ນາງເດໂບຣາ ຈົ່ງຕື່ນເທີ້ນ ຈົ່ງຕື່ນເຖີດ ຈົ່ງຮ້ອງເພງ ຈົ່ງຕື່ນເທີ້ນ ບາຣາກບຸດຂອງອາບີໂນອາມເອີຍ ຈົ່ງລຸກຂຶ້ນ ນຳເອົາພວກຊະເລີຍຂອງເຈົ້າອອກໄປ

13 ແລ້ວຜູ້ທີ່ສັດຊື່ກໍມາຫາເຈົ້ານາຍຂອງເຂົາ ພວກໄພ່ພົນຂອງພຣະຜູ້ເປັນເຈົ້າກໍຟ້າວເຂົ້າມາສູ້ຮົບເຂົາ

14 ພວກເຂົາມາຈາກຕະກູນເອຟຣາອິມມາສູ່ຮ່ອມພູ ຕາມຫລັງພວກຕະກູນເບັນຢາມິນ ແລະປະຊາຊົນຂອງເຂົາ ສ່ວນພວກຜູ້ບັນຊາການນັ້ນມາຈາກມາຄີຣ໌ ແລະພວກນາຍທະຫານມາຈາກເຊບູລູນ

15 ຝ່າຍພວກຜູ້ນຳຂອງອິສຊາຄາກໍມານຳເດໂບຣາ ແລະຕະກູນອິສຊາຄາ ແລະບາຣາກກໍມາເຫມືອນກັນ ພວກ
ເຂົາໄດ້ຕິດຕາມບາຣາກລົງໄປໃນຮ່ອມພູ ແຕ່ວ່າຕະກູນຣູເບນໄດ້ແຕກແຍກກັນ ພວກເຂົາຈຶ່ງຕັດສິນໃຈມາບໍ່
ໄດ້
16 ເປັນຫຍັງພວກເຂົາຈຶ່ງຢູ່ນຳແຕ່ຝູງແກະ ແລະຟັງຄົນລ້ຽງສັດເອີ້ນຝູງແກະນັ້ນ ແມ່ນແທ້ ຕະກູນຣູເບນໄດ້
ແຕກແຍກກັນ ພວກເຂົາຈຶ່ງຕັດສິນໃຈມາບໍ່ໄດ້
17 ສ່ວນຕະກູນກາດນັ້ນໄດ້ພັກຢູ່ທາງທິດຕາເວັນອອກຂອງແມ່ນ້ຳຈໍແດນ ແລະຕະກູນດານກໍຢູ່ຕາມທົ່ງຫຍ້າ ຕະ
ກູນອາເຊີກໍຢູ່ຕາມຊາຍທະເລ ເຂົາບໍ່ຍອມຈາກບ່ອນສງົບຂອງເຂົາໄປ
18 ແຕ່ວ່າພວກເຊບູລູນ ແລະເນັຟທາລີໄດ້ສ່ຽງຊີວິດຢູ່ຕາມສນາມຮົບ
19 ດັ່ງນັ້ນ ພວກກະສັດກໍພາກັນມາຕໍ່ສູ້ ຢູ່ທີ່ຕາອານາກໃກ້ຫ້ວຍນ້ຳເມກິດໂດ ແມ່ນພວກກະສັດຊາວການາອານທີ່
ມາຕໍ່ສູ້ ແຕ່ວ່າພວກເຂົາບໍ່ໄດ້ຍຶດເອົາເງິນຄຳໄປນຳ
20 ດວງດາວທັງຫລາຍກໍຈາກທ້ອງຟ້າລົງມາຕໍ່ສູ້ ຄ້າຍກັບວ່າພວກມັນໄດ້ຍ້າຍຜ່ານທ້ອງຟ້າມາເພື່ອທຳເສິກຕໍ່ສູ້ຊີ
ເຊຣາ
21 ພວກສັດຕຣູໄດ້ຖືກນ້ຳກີໂຊນພັດອອກໄປ ຊຶ່ງເປັນສາຍນ້ຳຕັ້ງແຕ່ດັ້ງເດີມ ສ່ວນຂ້າພະເຈົ້າຕ້ອງຍ່າງໄປຈົນສຸດ
ກຳລັງ
22 ສ່ວນມ້າທັງຫລາຍກໍແລ່ນຫອບຫນີ ເລັບຕີນຂອງມັນກໍຢັນຂີ້ດິນໄປ
23 ທູດຂອງພຣະຜູ້ເປັນເຈົ້າກ່າວວ່າ, “ຈົ່ງສາບແຊ່ງເມືອງເມໂຣສ ຄຳສາບແຊ່ງຈົ່ງຕົກຖືກຜູ້ອາໄສຢູ່ໃນເມືອງນັ້ນ
ເພາະພວກເຂົາບໍ່ໄດ້ມາຊ່ອຍເຫລືອຝ່າຍພຣະຜູ້ເປັນເຈົ້າເຫມືອນດັ່ງພວກນັກຮົບທີ່ຕໍ່ສູ້ເພື່ອພຣະອົງ”
24 ນາງຢາເອນເມັຽຂອງເຮເບີຊາວເກນິດ ເປັນຍິງຜູ້ນຶ່ງທີ່ມີພຣະພອນຫລາຍກວ່າຫມູ່ ນາງມີພຣະພອນ
ຫລາຍກວ່າຜູ້ຍິງທຸກຄົນທີ່ຢູ່ໃນຕູບຜ້າເຕັນ
25 ເມື່ອຊີເຊຣາຂໍດື່ມນ້ຳ ນາງຢາເອນກໍເອົານ້ຳນົມໃຫ້ດື່ມແທນ ພ້ອມທັງນ້ຳນົມຂຸ້ນໃສ່ພາຊນະອັນສວຍງາມ
26 ນາງໄດ້ຖືເອົາຫລັກຜ້າເຕັນໄວ້ໃນມືເບື້ອງນຶ່ງ ແລະມືເບື້ອງນຶ່ງອີກກໍຖືໄມ້ຄ້ອນ ນາງຕີຊີເຊຣາຈົນຫົວແຕກ ແລະ
ແທງຂະຫມັບຈົນຊອດ
27 ສ່ວນຊີເຊຣາກໍລົ້ມລົງ ແລະນອນຢຽດທີ່ຕີນຂອງນາງ ທີ່ຕີນຂອງນາງຢາເອນບ່ອນທີ່ຊີເຊຣາລົ້ມລົງ ຊີເຊຣາໄດ້
ລົ້ມຕາຍຢູ່ໃນດິນບ່ອນນັ້ນ
28 ຝ່າຍແມ່ຂອງຊີເຊຣາກໍຫລຽວອອກມາທາງປ່ອງຢ້ຽມ ນາງຈອບເບິ່ງທາງເບື້ອງຫລັງຂອງຕານ່າງ ແລະເອີ້ນ
ຖາມວ່າ, “ເປັນຫຍັງຣົດຮົບຂອງຊີເຊຣາຈຶ່ງມາຊ້າແທ້ ເປັນຫຍັງມ້າຂອງເຂົາຈຶ່ງນານກັບມາແທ້”
29 ບັນດາສະຕຣີຜູ້ສລາດຂອງນາງຈຶ່ງຕອບນາງ ບໍ່ດອກ ນາງນຶກຕອບເອົາເອງວ່າ
30 “ເຂົາທັງຫລາຍຍັງບໍ່ພົບແລະຍັງບໍ່ແບ່ງຂອງທີ່ຍຶດມາໄດ້ຫລື ຍິງຄົນນຶ່ງຫລືສອງຄົນໄດ້ແກ່ຊາຍຄົນນຶ່ງ ສິ່ງຂອງ
ຍ້ອມສີທີ່ຍຶດມາເປັນຂອງຊີເຊຣາ ຂອງຍ້ອມສີທີ່ແສ່ວລວດລາຍ ຂອງຍ້ອມສີທີ່ແສ່ວລາຍສອງຫນ້າສຳລັບພັນ
ຄໍຂອງຂ້າເປັນຂອງທີ່ຍຶດ”
31 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໃຫ້ສັດຕຣູທັງຫລາຍຂອງພຣະອົງຕາຍໄປດັ່ງດຽວກັນນີ້ ແຕ່ວ່າຂໍໃຫ້ຜູ້ຕິດສນິດກັບ
ພຣະອົງສ່ອງແສງເຫມືອນດັ່ງຕາເວັນກຳລັງຂຶ້ນ” ຕໍ່ມາຄວາມສງົບສຸກກໍເກີດຂຶ້ນໃນປະເທດເປັນເວລາສີ່ສິບປີ

## 6 ຊົງເອີ້ນກິເດໂອນ

The Midianite Oppression

1 ພາຍຫລັງການນີ້ ພວກອິສຣາເອນໄດ້ກະທຳບາບຕໍ່ສູ້ພຣະຜູ້ເປັນເຈົ້າ ດັ່ງນັ້ນພຣະອົງຈຶ່ງຊົງມອບພວກເຂົາໄວ້
ໃນກຳມືຂອງພວກມີດີອານເປັນເວລາເຈັດປີ

2 ຝ່າຍພວກມີດີອານກໍມີກຳລັງເຫນືອກວ່າພວກເຂົາ ດັ່ງນັ້ນພວກເຂົາຈຶ່ງໄປລີ້ຢູ່ໃນຖໍ້າ ແລະໃນບ່ອນປອດພັຍ
ອື່ນຕາມຫນ່ອຍພູ
3 ທຸກເທື່ອທີ່ພວກອິສຣາເອນຫວ່ານເຂົ້າແລ້ວ ພວກມີດີອານພ້ອມທັງຊາວອາມາເລກ ແລະຊາວເຜົ່າຕ່າງໆທີ່ຢູ່
ຕາມຖິ່ນກັນດານກໍມາບຸກໂຈມຕີພວກເຂົາ ພວກເຫລົ່ານີ້ພາກັນຕັ້ງຄ້າຍພັກຢູ່ໃນປະເທດນັ້ນ
4 ພວກເຂົາທຳລາຍພືນລະປູກຕ່າງໆທາງທິດໃຕ້ຈົນເຖິງເຂດອ້ອມແອ້ມເມືອງກາຊາ ພວກເຂົາບໍ່ໄດ້ປະສິ່ງໃດ
ເຫລືອໄວ້ໃຫ້ພວກອິສຣາເອນເລີຍຕລອດທັງແກະງົວລໍທີ່ຈະລ້ຽງກໍບໍ່ມີ
5 ພວກນີ້ໄດ້ບຸກເຂົ້າມາທຳລາຍປະເທດອິສຣາເອນຢ່າງຫນາແຫນ້ນດັ່ງຝູງຕັກແຕນ ພ້ອມດ້ວຍຝູງສັດແລະຜ້າ
ເຕັນ ທັງຄົນແລະອູດຂອງພວກເຂົາກໍຫລາຍຈົນນັບບໍ່ໄດ້
6 ຍ້ອນພວກມີດີອານ ພວກອິສຣາເອນຈຶ່ງຕົກຢູ່ໃນຄວາມຂັດສົນຫລາຍ ດັ່ງນັ້ນພວກເຂົາຈຶ່ງພາກັນຮ້ອງຂໍຄວາມ
ຊ່ອຍເຫລືອຈາກພຣະຜູ້ເປັນເຈົ້າ
7 ເວລາທີ່ພວກອິສຣາເອນຮ້ອງທູນຂໍຕໍ່ພຣະຜູ້ເປັນເຈົ້າ ຍ້ອນການຮຸກຮານຂອງພວກມີດີອານນັ້ນ
8 ພຣະຜູ້ເປັນເຈົ້າກໍຊົງໃຊ້ຜູ້ປະກາດພຣະທັມຜູ້ນຶ່ງມາບອກພວກເຂົາວ່າ, “ພຣະອົງຜູ້ຊົງເປັນພຣະຜູ້ເປັນເຈົ້າຂອງ
ພວກອິສຣາເອນຊົງກ່າວດັ່ງນີ້ ເຮົາໄດ້ນຳເອົາພວກເຈົ້າອອກມາຈາກການເປັນທາດໃນປະເທດເອຢິບ
9 ໄດ້ຊ່ອຍຊີວິດຂອງພວກເຈົ້າອອກຈາກເງື້ອມມືພວກເອຢິບ ແລະອອກຈາກຜູ້ທີ່ຕໍ່ສູ້ພວກເຈົ້າຢູ່ທີ່ນີ້ ເຮົາໄດ້ໄລ່
ເຂົາຫນີອອກຈາກພວກເຈົ້າ ແລະໄດ້ມອບດິນແດນຂອງເຂົາໃຫ້ແກ່ພວກເຈົ້າ
10 ເຮົາໄດ້ບອກພວກເຈົ້າວ່າ ເຮົາແມ່ນພຣະຜູ້ເປັນເຈົ້າຂອງພວກເຈົ້າ ແລະພວກເຈົ້າບໍ່ຕ້ອງຂາບໄຫວ້ພຣະທັງ
ຫລາຍຂອງພວກອາໂມຣິດ ຊຶ່ງພວກເຈົ້າກຳລັງອາໄສຢູ່ໃນດິນແດນຂອງເຂົານີ້ ແຕ່ວ່າພວກເຈົ້າບໍ່ໄດ້ເຊື່ອຟັງ
ເຮົາເລີຍ”

**ຊົງເອີ້ນກີເດໂອນ**

The Call of Gideon

11 ວັນນຶ່ງ ທູດຂອງພຣະຜູ້ເປັນເຈົ້າໄດ້ມານັ່ງຢູ່ໃຕ້ຕົ້ນສົນໃກ້ບ້ານໂອຟຣາ ຊຶ່ງເປັນບ້ານຂອງໂຢອັສຜູ້ເປັນເຊື້ອ
ສາຍຂອງອາບີເອເຊີ ກີເດໂອນບຸດຂອງໂຢອັສກໍລີ້ຟາດເຂົ້າຢູ່ໃນບ່ອນບີບເອົານໍ້າອະງຸ່ນ ເພື່ອລີ້ພວກມີດີອານ
12 ທູດຂອງພຣະຜູ້ເປັນເຈົ້າໄດ້ປາກົດຕໍ່ເຂົາແລະເວົ້າວ່າ, “ເຈົ້າເປັນຄົນກ້າຫານ ພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບ
ເຈົ້າ”
13 ຝ່າຍກີເດໂອນຈຶ່ງເວົ້າຕໍ່ທູດອົງນັ້ນວ່າ, “ທ່ານເຈົ້າເອີຍ ຖ້າພຣະຜູ້ເປັນເຈົ້າສະຖິດຢູ່ກັບພວກເຮົາ ເປັນຫຍັງເຫດ
ຮ້າຍທັງຫມົດນີ້ຈຶ່ງເກີດຂຶ້ນແກ່ພວກເຮົາ ແລະການອັສຈັນຕ່າງໆທີ່ພວກປູ່ຍ່າຕາຍາຍໄດ້ເລົ່າໃຫ້ພວກເຮົາຟັງ
ນັ້ນເປັນຢ່າງໃດ ຄືການທີ່ພຣະອົງໄດ້ຊົງນຳຫນ້າພວກເຮົາທັງຫລາຍອອກມາຈາກປະເທດເອຢິບນັ້ນ ແຕ່ດຽວນີ້
ພຣະຜູ້ເປັນເຈົ້າຊົງປະຖິ້ມພວກເຮົາແລ້ວ ແລະໄດ້ມອບພວກເຮົາໄວ້ໃຕ້ອຳນາດພວກມີດີອານ”
14 ພຣະຜູ້ເປັນເຈົ້າຈຶ່ງຊົງສັ່ງຕໍ່ທ່ານວ່າ, “ເຈົ້າຈົ່ງໄປຊ່ອຍຊີວິດພວກອິສຣາເອນອອກຈາກອຳນາດຂອງພວກມີດີ
ອານ ດ້ວຍກຳລັງຂອງເຈົ້າເອງ ເຮົາຈະເປັນຜູ້ສົ່ງເຈົ້າໄປ“
15 ກີເດໂອນໄດ້ທູນຕອບວ່າ ຂ້າພຣະອົງຈະຊ່ອຍຊີວິດພວກອິສຣາເອນໄດ້ຢ່າງໃດ ເພາະວ່າເຊື້ອສາຍຂອງຂ້າ
ພຣະອົງອ່ອນແອກວ່າຫມູ່ໃນຕະກູນມານັສເຊ ແລະຂ້າພຣະອົງເອງກໍເປັນຄົນທີ່ຂາດຄວາມສຳຄັນໃນຄອບຄົວ
ຂ້າພຣະອົງ”
16 ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ທ່ານວ່າ, “ເຈົ້າສາມາດທຳສິ່ງນີ້ໄດ້ ເພາະເຮົາຈະສະຖິດຢູ່ນຳເຈົ້າ ເຈົ້າຈະທຳລາຍ
ພວກມີດີອານໄດ້ງ່າຍທີ່ສຸດ ຄ້າຍກັບວ່າພວກເຂົາມີພຽງຄົນດຽວເທົ່ານັ້ນ”
17 ກີເດໂອນໄດ້ທູນຕອບວ່າ, “ຖ້າພຣະອົງໂຜດເມດຕາຂ້າພຣະອົງ ຂໍໃຫ້ຂ້າພຣະອົງພິສູດເຫັນຄວາມຈິງວ່າ ແມ່ນ
ພຣະຜູ້ເປັນເຈົ້າແທ້ຈິງທີ່ຊົງສັ່ງໃຫ້ແກ່ຂ້າພຣະອົງ

18 ຂໍພຣະອົງຈົ່ງຢ່າຟ້າວຫນີຈາກບ່ອນນີ້ ຈົນກວ່າຂ້າພຣະອົງຈະນຳເອົາເຄື່ອງຖວາຍມາໃຫ້ແກ່ພຣະອົງ" ແລ້ວ
ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເຮົາຈະພັກຢູ່ທີ່ນີ້ຈົນກວ່າເຈົ້າຈະກັບມາ"
19 ຄັນແລ້ວກີເດໂອນກໍໄປຂ້າເອົາແບ້ຫນຸ່ມໂຕນຶ່ງຈັດແຈ່ງເປັນອາຫານ ແລະເຮັດເຂົ້າຈີ່ບໍ່ມີເຊື້ອດ້ວຍແປ້ງນຶ່ງເອ
ຟາ ທ່ານໄດ້ຈັດຊີ້ນໃສ່ກະຕ່າແລະນ້ຳແກງໃສ່ຫມໍ້ ແລ້ວນຳເອົາສິ່ງເຫລົ່ານີ້ມາຖວາຍພຣະອົງຢູ່ໃຕ້ຕົ້ນສົນໃຫ້
20 ຝ່າຍທູດອົງນັ້ນຈຶ່ງກ່າວແກ່ທ່ານວ່າ, "ຈົ່ງເອົາຊີ້ນແລະເຂົ້າຈີ່ວາງໄວ້ເທິງໂງ່ນຫີນ ແລ້ວຖອກນ້ຳແກງລົງໃສ່"
ກີເດໂອນກໍປະຕິບັດຕາມ
21 ທູດຂອງພຣະຜູ້ເປັນເຈົ້າຊົງເອົາປາຍໄມ້ເທົ້າຂອງຕົນແຕະຕ້ອງຊີ້ນແລະເຂົ້າຈີ່ນັ້ນ ໃນທັນໃດນັ້ນໄຟໄດ້ລຸກຂຶ້ນ
ຈາກໂງ່ນຫີນແລະໄຫມ້ຊີ້ນກັບເຂົ້າຈີ່ຈົນຫມົດ ຕໍ່ມາທູດຂອງພຣະຜູ້ເປັນເຈົ້າກໍຫາຍຕົວໄປ
22 ຝ່າຍກີເດໂອນກໍຮູ້ສຶກໃນໃຈວ່າ ທູດອົງນັ້ນເປັນທູດຂອງພຣະຜູ້ເປັນເຈົ້າແທ້ ທ່ານຈຶ່ງເວົ້າດ້ວຍຄວາມຢ້ານແລະ
ຕົກໃຈວ່າ, "ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ຂ້າພຣະອົງໄດ້ເຫັນທູດຂອງພຣະອົງຫນ້າຕໍ່ຫນ້າແລ້ວ"
23 ແຕ່ພຣະຜູ້ເປັນເຈົ້າຊົງບອກທ່ານວ່າ, "ບໍ່ເປັນຫຍັງດອກ ຢ່າສູ່ຢ້ານເຈົ້າຈະບໍ່ຕາຍ"
24 ແລ້ວກີເດໂອນໄດ້ສ້າງແທ່ນບູຊາໃຫ້ພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ ແລະໃສ່ຊື່ວ່າ "ພຣະຜູ້ເປັນເຈົ້າເປັນຄວາມສງົບ
ສຸກ" ແທ່ນບູຊານີ້ຢູ່ໃນບ້ານໂອຟຣາ ແລະເປັນຂອງຊາວອາບີເອເຊີຈົນເທົ່າເຖິງທຸກວັນນີ້
25 ໃນຄ່ຳຄືນຂອງວັນນຶ່ງ ພຣະຜູ້ເປັນເຈົ້າຊົງບອກທ່ານວ່າ, "ຈົ່ງເອົາງົວເຖິກຂອງບິດາເຈົ້າ ແລະງົວເຖິກໂຕອື່ນທີ່ມີ
ອາຍຸເຈັດປີ ພ້ອມທັງທຳລາຍແທ່ນບູຊາທີ່ບິດາເຈົ້າທຳໄວ້ເພື່ອພຣະບາອານ ແລ້ວຕັດຫລັກໄມ້ສັກສິດຢູ່ທາງ
ຂ້າງນັ້ນອອກ
26 ຈົ່ງສ້າງແທ່ນບູຊາຢ່າງແຫນ້ນຫນາໃຫ້ແກ່ພຣະຜູ້ເປັນເຈົ້າຂອງເຈົ້າຢູ່ເທິງຈອມໂພນນີ້ ແລ້ວເອົາງົວເຖິກໂຕ
ທີສອງເຜົາຖວາຍບູຊາເທິງແທ່ນນັ້ນ ໂດຍເອົາຫລັກໄມ້ສັກສິດທີ່ເຈົ້າຕັດລົງນັ້ນເຮັດຟືນ"
27 ຝ່າຍກີເດໂອນກໍເລືອກເອົາຄົນໃຊ້ສິບຄົນ ແລະປະຕິບັດຕາມພຣະຜູ້ເປັນເຈົ້າທີ່ຊົງບອກໄວ້ ທ່ານບໍ່ສາມາດທຳ
ກາງເວັນໄດ້ ເພາະຢ້ານຄົນໃນຄອບຄົວຂອງຕົນແລະປະຊາຊົນໃນເມືອງເຫັນ ສະນັ້ນ ທ່ານຈຶ່ງທຳໃນເວລາ
ກາງຄືນ

**ກີເດໂອນທຳລາຍແທ່ນບູຊາຂອງພຣະບາອານ**

Gideon Destroys the Altar of Baal

28 ເມື່ອຕື່ນເຊົ້າມາ ປະຊາຊົນໃນເມືອງນັ້ນໄດ້ລຸກແຕ່ເດິກ ພວກເຂົາໄດ້ເຫັນແທ່ນບູຊາຂອງພຣະບາອານ ແລະ
ເຫັນຫລັກໄມ້ສັກສິດຖືກທຳລາຍລົງ ແລ້ວໄດ້ເຫັນງົວເຖິກໄຫມ້ຢູ່ເທິງແທ່ນບູຊາທີ່ສ້າງຂຶ້ນໃຫມ່ນັ້ນ ພວກເຂົາ
ຈຶ່ງຖາມກັນວ່າ, "ແມ່ນໃຜທຳສິ່ງນີ້"
29 ເມື່ອພວກເຂົາສືບຖາມກໍພົບວ່າແມ່ນກີເດໂອນບຸດຊາຍຂອງໂຢອັສໄດ້ເປັນຜູ້ທຳສິ່ງນັ້ນ
30 ພວກເຂົາຈຶ່ງເວົ້າຕໍ່ໂຢອັສວ່າ, "ເອົາບຸດຂອງເຈົ້າອອກມານອກພີ້ ພວກເຮົາຈະຂ້າເຂົາຖິ້ມ ເພາະເຂົາເປັນຄົນ
ທຳລາຍແທ່ນບູຊາຂອງພຣະບາອານ ແລະຕັດຫລັກໄມ້ສັກສິດຢູ່ທີ່ທາງຂ້າງນັ້ນອອກ"
31 ແຕ່ໂຢອັສໄດ້ຕອບທຸກຄົນທີ່ພາກັນມາຟ້ອງນັ້ນວ່າ, "ພວກເຈົ້າມາຕໍ່ວ່າຂ້າພະເຈົ້າແທນພຣະບາອານບໍ ພວກ
ເຈົ້າປ້ອງກັນ  ພຣະບາອານບໍ ຖ້າວ່າຜູ້ໃດຕໍ່ວ່າແທນມັນ ຜູ້ນັ້ນຈະຖືກຂ້າຖິ້ມກ່ອນຮຸ່ງເຊົ້າ ຄັນວ່າພຣະບາອານ
ເປັນພຣະເຈົ້າ ຈົ່ງໃຫ້ມັນປ້ອງກັນຕົວມັນເອງ ເພາະເປັນແທ່ນບູຊາຂອງມັນທີ່ຖືກທຳລາຍລົງ"
32 ຈາກນັ້ນມາຄົນທັງຫລາຍກໍເອີ້ນກີເດໂອນວ່າ ເຢຣຸບບາອານ ເພາະທ່ານໄດ້ທຳລາຍແທ່ນບູຊາຂອງພຣະບາ
ອານແລະເວົ້າວ່າ, "ຈົ່ງໃຫ້ພຣະບາອານປ້ອງກັນຕົວມັນເອງ"
33 ແລ້ວພວກມີດີອານທຸກໆຄົນ ພ້ອມທັງຊາວອາມາເລກ ແລະເຜົ່າຕ່າງໆທີ່ຢູ່ຕາມຖິ່ນກັນດານ ກໍພາກັນຂ້າມແມ່
ນ້ຳຈໍແດນມາພ້ອມພຽງກັນແລ້ວຕັ້ງຄ້າຍພັກຢູ່ຮ່ອມພູ ຢີສເຣເອນ

34 ພຣະວິນຍານຂອງພຣະຜູ້ເປັນເຈົ້າໄດ້ສະຖິດຢູ່ນຳກິເດໂອນ ກິເດໂອນກໍເປົ່າແກເອີ້ນເອົາຝູງຊົນອາບີເອເຊີໃຫ້
ຕິດຕາມຕົນໄປ
35 ຕໍ່ມາ ທ່ານໄດ້ສົ່ງຄົນນຳຂ່າວໄປບອກທົ່ວທັງເຂດແດນຕະກູນມານັສເຊ ເຊບູລູນ ແລະເນັຟທາລີ ເພື່ອໃຫ້ພວກ
ເຫລົ່ານີ້ຕິດຕາມທ່ານໄປ ພວກເຂົາກໍຕິດຕາມທ່ານໄປ

The Sign of the Fleece

36 ຈາກນັ້ນ ກິເດໂອນໄດ້ທູນພຣະເຈົ້າວ່າ, “ພຣະອົງຊົງກ່າວວ່າ ພຣະອົງຕ້ອງການໃຫ້ຂ້າພຣະອົງຊ່ອຍຊີວິດພວກ
ອິສຣາເອນ
37 ສະນັ້ນ ຂ້າພຣະອົງຈະເອົາຂົນແກະວາງໄວ້ເທິງດິນ ບ່ອນທີ່ພວກຂ້າພຣະອົງຟາດເຂົ້າ ຖ້າວ່າມື້ເຊົ້າມານໍ້າ
ໝອກຕົກຖືກແຕ່ຂົນແກະເທົ່ານັ້ນ ແຕ່ດິນຍັງແຫ້ງຢູ່ຄືເກົ່າ ຂ້າພຣະອົງຈຶ່ງຈະຮູ້ວ່າ ພຣະອົງຊົງຕ້ອງການໃຫ້ຂ້າ
ພຣະອົງຊ່ອຍຊີວິດພວກອິສຣາເອນແທ້”
38 ແລ້ວເຫດການກໍເປັນຢ່າງນັ້ນແທ້ ເມື່ອກິເດໂອນລຸກມາແຕ່ເດິກ ໃນເຊົ້າວັນໃຫມ່ທ່ານກໍເອົາຂົນແກະນັ້ນມາ
ປັ້ນ ນໍ້າໄດ້ໄຫລອອກມາຈົນເຕັມຊາມ
39 ທ່ານຈຶ່ງທູນພຣະເຈົ້າອີກວ່າ, “ຂໍຢ່າຊົງພຣະພິໂຣດຂ້າພຣະອົງຖ້ອນ ຂໍໂຜດໃຫ້ຂ້າພຣະອົງໄດ້ເວົ້າຕື່ມອີກເປັນ
ເທື່ອສຸດທ້າຍ ຄືຂ້າພຣະອົງຈະທົດລອງເບິ່ງຂົນແກະອີກເທື່ອນຶ່ງ ໃນຄັ້ງນີ້ໃຫ້ຂົນແກະນັ້ນແຫ້ງຢູ່ ແຕ່ໃຫ້ນໍ້າ
ໝອກຕົກລົງໃສ່ແດ່ດິນເທົ່ານັ້ນ”
40 ໃນຄືນນັ້ນ ພຣະເຈົ້າໄດ້ຊົງກະທຳການນັ້ນ ໂດຍຊົງໃຫ້ຂົນແກະແຫ້ງ ແຕ່ໃຫ້ດິນເຕັມໄປດ້ວຍນໍ້າໝອກ

## 7 ກິເດໂອນຊະນະພວກມີດີອານ

Gideon Surprises and Routs the Midianites

1 ເຢຣຸບບາອານ (ຄືກິເດໂອນ) ພ້ອມດ້ວຍທະຫານທັງໝົດຂອງທ່ານໄດ້ລຸກແຕ່ເຊົ້າ ໄປຕັ້ງຄ້າຍພັກອາໄສຢູ່
ທາງບໍ່ນໍ້າຮາໂຣດ ສ່ວນຄ້າຍພັກຂອງພວກມີດີອານກໍຕັ້ງຢູ່ຮ່ອມພູທາງທິດເຫນືອໃກ້ໆພູໂມເຣ
2 ພຣະຜູ້ເປັນເຈົ້າຊົງບອກກິເດໂອນວ່າ, “ປະຊາຊົນທີ່ມານຳເຈົ້າມີຫລາຍໂພດ ເຮົາບໍ່ຕ້ອງການຫລານປານນັ້ນ
ເພື່ອເອົາ ຊະນະພວກມີດີອານ ເພາະເມື່ອໄຊຊະນະແລ້ວຢ້ານເຂົາອວດວ່າ ເຂົາຊະນະດ້ວຍກຳລັງຂອງຕົນ
ເອງ ໂດຍບໍ່ຄິດເຖິງການຊ່ອຍເຫລືອຂອງເຮົາ
3 ສະນັ້ນ ເຈົ້າຈົ່ງບອກປະຊາຊົນວ່າ ຖ້າຜູ້ໃດຢ້ານ ຈົ່ງກັບຄືນເມືອສາ ແລະໄປຈາກພູກິເລອາດ” ດັ່ງນັ້ນຈຶ່ງມີຄົນ
ກັບຄືນເມືອງສອງຫມື່ນສອງພັນຄົນ ແລະຍັງເຫລືອພຽງແຕ່ນຶ່ງຫມື່ນຄົນເທົ່ານັ້ນ
4 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ກິເດໂອນວ່າ, “ພວກນີ້ຍັງມີຢູ່ຫລາຍໂພດ ຈົ່ງພາເຂົາລົງໄປແຄມນໍ້າ ແລ້ວເຮົາຈະຄັດ
ເລືອກເຂົາໃຫ້ເຈົ້າຢູ່ທີ່ນັ້ນ ຖ້າເຮົາບອກຜູ້ໃດໄປກັບເຈົ້າ ເຂົາຈະໄປທັນທີ ຖ້າວ່າເຮົາບອກບໍ່ໃຫ້ຜູ້ໃດໄປກັບເຈົ້າ
ເຂົາກໍຈະບໍ່ໄປເດັດຂາດ”
5 ດັ່ງນັ້ນ ກິເດໂອນຈຶ່ງນຳຊາວອິສຣາເອນໄປແຄມນໍ້າ ແລ້ວພຣະຜູ້ເປັນເຈົ້າຊົງບອກກິເດໂອນວ່າ, “ຈົ່ງແຍກ
ພວກທີ່ດື່ມນໍ້າດ້ວຍລີ້ນຄືກັນກັບຫມາອອກຈາກພວກທີ່ຄຸເຂົ່າລົງດື່ມ”
6 ດັ່ງນັ້ນ ຈຳນວນຜູ້ທີ່ເອົາມືກອບນໍ້າຂຶ້ນມາເລັຽກິນມີຢູ່ສາມຮ້ອຍຄົນ ສ່ວນພວກທີ່ເຫລືອນັ້ນແມ່ນພວກທີ່ຄຸເຂົ່າ
ລົງດື່ມ
7 ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ກິເດໂອນວ່າ, “ເຮົາຈະຊ່ອຍຊີວິດເຈົ້າໄວ້ ແລະໃຫ້ເຈົ້າຊະນະພວກມີດີອານດ້ວຍ
ຄົນຈຳນວນສາມຮ້ອຍຄົນທີ່ກອບນໍ້າເລັຽກິນນັ້ນ ແລ້ວໃຫ້ພວກທີ່ຍັງເຫລືອກັບຄືນເມືອຫມົດ”

8 ກິເດໂອນກໍສັ່ງພວກອິສຣາເອນກັບຄືນເມືອຫມົດ ເວັ້ນໄວ້ແຕ່ພວກສາມຮ້ອຍຄົນເທົ່ານັ້ນທີ່ຍັງເຫລືອຢູ່ ພວກນີ້
ໄດ້ຈັດເອົາສະບຽງອາຫານແລະແກຂອງຕົນ ສ່ວນພວກມີດີອານໄດ້ຕັ້ງຄ້າຍພັກຢູ່ຮ່ອມພູທາງເບື້ອງລຸ່ມອິສຣາ
ເອນ
9 ໃນຄືນວັນນັ້ນ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ກິເດໂອນວ່າ, "ຈົ່ງບຸກໂຈມຕີຄ້າຍພວກເຂົາເທີນ ເຮົາຈະໃຫ້ເຈົ້າ
ຊະນະພວກເຂົາ
10 ແຕ່ຖ້າເຈົ້າບໍ່ກ້າລົງໄປຕໍ່ສູ້ ໃຫ້ເຈົ້າແລະຄົນໃຊ້ຂອງເຈົ້າຜູ້ຊື່ວ່າປຸຣາ ລົງໄປສືບເບິ່ງກ່ອນ ເຈົ້າຈະໄດ້ຍິນວ່າເຂົາ
ເວົ້າກັນຫຍັງແດ່
11 ແລ້ວເຈົ້າຈະກ້າຫານບຸກໂຈມຕີຄ້າຍນັ້ນ" ດັ່ງນັ້ນ ກິເດໂອນ ແລະຄົນໃຊ້ປຸຣາຈຶ່ງພາກັນລົງໄປຍັງເຂດແດນ
ຄ້າຍພັກຂອງສັດຕຣູ
12 ຝ່າຍພວກມີດີອານ ພວກອາມາເລກ ແລະຊາວເຜົ່າຕ່າງໆທີ່ຢູ່ຕາມຖິ່ນກັນດານ ໄດ້ຂຍາຍອອກໄປທາງຮ່ອມພູ
ເຫມືອນດັ່ງຝູງຕັກແຕນ ພວກເຂົາມີຝູງອູດຫລາຍເໝືອນກັບເມັດດິນຊາຍເທິງແຄມທະເລ
13 ເມື່ອກິເດໂອນມາເຖິງກໍໄດ້ຍິນຊາຍຜູ້ນຶ່ງເລົ່າຄວາມຝັນຂອງຕົນສູ່ຫມູ່ຟັງວ່າ, "ຂ້າພະເຈົ້າໄດ້ຝັນວ່າມີເຂົ້າຈີ່
ກ້ອນນຶ່ງທີ່ເຮັດດ້ວຍເຂົ້າເດືອຍກິ້ງເຂົ້າມາໃນຄ້າຍພັກຂອງເຮົາ ເຂົາຈີ່ກ້ອນນີ້ຕຳຜ້າເຕັນຂວ້ຳເພພັງລົງຫມົດ"
14 ຫມູ່ຂອງເຂົາຈຶ່ງຕອບວ່າ, "ອັນນີ້ຕ້ອງຫມາຍເຖິງດາບຂອງກິເດໂອນຊາວອິສຣາເອນ ຊຶ່ງເປັນບຸດຂອງໂຢອັສ
ຄົງບໍ່ຫມາຍເຖິງສິ່ງອື່ນໄປໄດ້ ພຣະເຈົ້າໄດ້ຊົງໂຜດໃຫ້ທ່ານຊະນະກອງທັບທັງຫມົດຂອງພວກເຮົາແລ້ວ"
15 ສ່ວນກິເດໂອນເມື່ອໄດ້ຍິນເຣື່ອງຄວາມຝັນພ້ອມທັງຄວາມຫມາຍ ທ່ານກໍຄຸເຂົ່າລົງຂາບໄຫວ້ພຣະເຈົ້າ ແລ້ວ
ທ່ານກໍກັບຄືນເມືອຫາຄ້າຍພັກຊາວອິສຣາເອນແລະເວົ້າວ່າ, "ຈົ່ງລຸກຂຶ້ນ ພຣະຜູ້ເປັນເຈົ້າຊົງປະທານໃຫ້ພວກ
ເຈົ້າຊະນະກອງທັບພວກມີດີອານແລ້ວ"
16 ຄັນແລ້ວ ທ່ານກໍແບ່ງພວກສາມຮ້ອຍຄົນນັ້ນອອກເປັນສາມຫມວດ ໂດຍເອົາແກແຈກໃຫ້ຄົນລະອັນພ້ອມທັງ
ໄຫໃສ່ກະບອງຜູ້ລະຫນ່ວຍ
17 ທ່ານໄດ້ບອກເຂົາວ່າ, "ຈົ່ງຄອຍເບິ່ງຂ້າພະເຈົ້າແລ້ວໃຫ້ເຮັດເຫມືອນກັນ ແລະເມື່ອຂ້າພະເຈົ້າໄປເຖິງຄ້າຍ
ດ່ານນອກແລ້ວ ຂ້າພະເຈົ້າເຮັດຢ່າງໃດກໍໃຫ້ເຮັດຢ່າງນັ້ນ
18 ຖ້າວ່າຂ້າພະເຈົ້າ ແລະຄນະຂອງຂ້າພະເຈົ້າພາກັນເປົ່າແກຂຶ້ນ ໃຫ້ພວກເຈົ້າເປົ່າແກຂອງພວກເຈົ້າຕອບໂລດ
ແລ້ວໃຫ້ທຸກຄົນທີ່ຢູ່ອ້ອມຄ້າຍທັງຫມົດ ຮ້ອງຂຶ້ນວ່າ " ເພື່ອພຣະຜູ້ເປັນເຈົ້າ ແລະເພື່ອກິເດໂອນ"
19 ຝ່າຍກິເດໂອນ ພ້ອມທັງພວກຂອງທ່ານຮ້ອຍຄົນ ກໍຮອດແຄມຄ້າຍໃນເວລາກ່ອນທ່ຽງຄືນ ຊຶ່ງເປັນເວລາປ່ຽນ
ຄົນຍາມໃຫມ່ ພວກເຂົາເປົ່າແກຂຶ້ນ ແລະທັບໄຫທີ່ພວກເຂົາຖືໄປນັ້ນ
20 ຫມົດທັງສາມຫມວດກໍເປົ່າແກຂຶ້ນ ແລະທັບໄຫຂອງຕົນ ມືຊ້າຍຂອງພວກເຂົາຖືກະບອງແລະມືຂວາຖືແກ
ພ້ອມທັງຮ້ອງວ່າ, "ດາບ ເພື່ອພຣະຜູ້ເປັນເຈົ້າ ແລະເພື່ອກິເດໂອນ"
21 ທະຫານອິສຣາເອນທຸກໆຄົນກໍຢືນຢັນປະຈຳຢູ່ບ່ອນຂອງຕົນອ້ອມຮອບຄ້າຍພັກນັ້ນ ສ່ວນທະຫານມີດີອານທັງ
ຫມົດໄດ້ແລ່ນຫນີໄປພ້ອມທັງຮ້ອງສຽງດັງສະຫນັ່ນ
22 ເມື່ອພວກສາມຮ້ອຍເປົ່າແກຂອງເຂົາຂຶ້ນ ພຣະຜູ້ເປັນເຈົ້າກໍບັນດານໃຫ້ຄົນຢູ່ໃນຄ້າຍພັກນັ້ນຈັບດາບຕໍ່ສູ້ກັນ
ແລະກັນ ພວກເຂົາພາກັນແລ່ນໄປທາງເມືອງເຊເຣຣາ ໄປເມືອງເບັດຊິດຕາ ແລະເມືອງອາເບນເມໂຮລາໃກ້
ບ້ານຕັບບັທ
23 ພວກອິສຣາເອນທີ່ມາຈາກຕະກູນເນັຟທາລີ ຕະກູນອາເຊີ ແລະທຸກໆຄົນທີ່ມາຈາກມານັສເຊໄດ້ອອກມາໄລ່
ຕິດຕາມພວກມີດີອານໄປ
24 ກິເດໂອນກໍສົ່ງຄົນນຳຂ່າວໄປບອກທົ່ວທັງເຂດພູເອຟຣາອິມວ່າ, "ຈົ່ງພາກັນມາຕໍ່ສູ້ພວກມີດີອານ ໃຫ້ພາກັນ
ໄປປະຈຳຢູ່ຕາມແຄມແມ່ນ້ຳຈໍແດນ ແລະຕາມທາງສາຍນ້ຳຕ່າງໆຈົນເຖິງເບັດບາຣາ

25 ພວກເຂົາຈັບຫົວໜ້າພວກມີດີອານໄດ້ສອງຄົນ ຄືໂອເຣັບ ແລະເຊເອັບ ແລ້ວຂ້າໂອເຣັບຢູ່ເທິງຫີນ
ດ່ານໂອເຣັບ ແລະຂ້າເຊເອັບຢູ່ບ່ອນບີບນ້ຳອະງຸ່ນ ຊື່ເຊເອັບ ແລ້ວພວກເຂົາກໍຂັບໄລ່ກວາດລ້າງພວກມີດີອານ
ຕໍ່ໄປ ພ້ອມທັງຖືເອົາຫົວຂອງໂອເຣັບ ແລະເຊເອັບໄປໃຫ້ກີເດໂອນຊຶ່ງຢູ່ທາງທິດຕາເວັນອອກຂອງແມ່ນ້ຳຈໍ
ແດນເບື້ອງນັ້ນ

## 8 ການເສັ່ງໄຊຄັ້ງສຸດທ້າຍຂອງພວກມີດີອານ

Gideon’s Triumph and Vengeance

1 ຄັນຕໍ່ມາ ພວກເອຟຣາອິມໄດ້ເວົ້າຕໍ່ກີເດໂອນວ່າ, “ເວລາໄປສູ້ຮົບພວກມີດີອານນັ້ນ ເປັນຫຍັງບໍ່ເອີ້ນເອົາພວກ
ເຮົາແດ່ ເປັນຫຍັງຈຶ່ງທຳກັບພວກເຮົາແບບນີ້” ພວກເຂົາຕໍ່ວ່າຕໍ່ຂານເຣື່ອງນີ້ຢ່າງແຂງແຮງ
2 ແຕ່ກີເດໂອນບອກເຂົາວ່າ, “ການໄຊຊະນະຂອງຂ້າພະເຈົ້ານັ້ນ ເມື່ອປຽບທຽບກັບສິ່ງທີ່ເຈົ້າທຳກໍບໍ່ມີຫຍັງຫມົດ
ແມ່ນແຕ່ການເລັກນ້ອຍທີ່ຊາວເອຟຣາອິມໄດ້ທຳ ກໍມີຄຸນຄ່າກວ່າທຸກສິ່ງທີ່ຂ້າພະເຈົ້າໄດ້ທຳມາ
3 ພຣະຜູ້ເປັນເຈົ້າຊົງມອບໂອເຣັບ ແລະເຊເອັບ ຜູ້ເປັນເຈົ້ານາຍຂອງຊາວມີດີອານໄວ້ໃນກຳມືຂອງພວກເຈົ້າ ສິ່ງ
ທີ່ຂ້າພະເຈົ້າໄດ້ທຳນັ້ນຈະປຽບທຽບກັບສິ່ງທີ່ພວກເຈົ້າທຳໄດ້ຢ່າງໃດ” ເມື່ອທ່ານເວົ້າດັ່ງນັ້ນແລ້ວພວກເຂົາກໍ
ເຊົາຄຽດ
4 ກີເດໂອນກັບສາມຮ້ອຍຄົນໄດ້ພາກັນໄປເຖິງແມ່ນ້ຳຈໍແດນ ແລ້ວກໍຂ້າມແມ່ນ້ຳນັ້ນໄປ ພວກເຂົາມີຄວາມອິດ
ເມື່ອຍອ່ອນແຮງລົງ ແຕ່ກໍຍັງຂັບໄລ່ພວກສັດຕຣູນັ້ນຫນີໄປໄດ້
5 ກີເດໂອນໄດ້ຮ້ອງຂໍຕໍ່ຊາວເມືອງຊຸກໂກດວ່າ, “ຂ້າພະເຈົ້າຂໍເຂົ້າໃຫ້ຄົນຂອງຂ້າພະເຈົ້າກິນແດ່ ເພາະເຂົາອິດ
ເມື່ອຍຫລາຍ ຂ້າພະເຈົ້າກຳລັງໄລ່ຕິດຕາມເຊບາແລະຊັນມູນນາ ເຈົ້າຊີວິດຂອງພວກມີດີອານຢູ່”
6 ແຕ່ພວກຜູ້ນຳຂອງພວກຊຸກໂກດເວົ້າວ່າ, “ເຫດ
ໃດພວກເຮົາຈຶ່ງຈະຕ້ອງເອົາອາຫານໃຫ້ທະຫານຂອງທ່ານກິນ ໃນເມື່ອທ່ານຍັງບໍ່ທັນຈັບເຊບາແລະຊັນມູນນາ
ໄດ້ເທື່ອ”
7 ດັ່ງນັ້ນ ກີເດໂອນຈຶ່ງເວົ້າວ່າ, “ດີແລ້ວ ເມື່ອໃດພຣະຜູ້ເປັນເຈົ້າຊົງມອບເຊບາ ແລະຊັນມູນນາໄວ້ໃນກຳມືຂອງ
ຂ້າພະເຈົ້າ ຂ້າພະເຈົ້າຈະເອົາຫວາຍທີ່ຍັງມີຫນາມແລະໄມ້ຫນາມມາຂ້ຽນພວກເຈົ້າ”
8 ຈາກນັ້ນ ກີເດໂອນກໍໄປຍັງເມືອງເປນູເອນ ແລ້ວຮ້ອງຂໍຕໍ່ຊາວເມືອງນັ້ນຢ່າງດຽວກັນ ຊາວເມືອງເປນູເອນກໍ
ຕອບຢ່າງດຽວກັນກັບຊາວເມືອງຊຸກໂກດ
9 ກີເດໂອນຈຶ່ງເວົ້າວ່າ, “ເວລາຂ້າພະເຈົ້າກັບຄືນມາຢ່າງປອດພັຍແລ້ວ ຂ້າພະເຈົ້າຈະທຳລາຍຫໍຄອຍນີ້ລົງ”
10 ຝ່າຍເຊບາ ແລະຊັນມູນນາ ພ້ອມທັງກອງທັບໄດ້ຢູ່ທີ່ກາຣ໌ໂກຣ໌ ກອງທັບຂອງເຜົ່າຕ່າງໆທີ່ມາຈາກຖິ່ນກັນ
ດານມີທະຫານນຶ່ງຫມື່ນຫ້າພັນຄົນ ເປັນກອງທັບຊາວຕາເວັນອອກທີ່ເຫລືອຢູ່ທັງຫມົດ ແລະມີນຶ່ງແສນສອງ
ຫມື່ນຄົນທີ່ຖືກຂ້າຕາຍ
11 ກີເດໂອນໄດ້ໄປຕາມເສັ້ນທາງແຄມຖິ່ນກັນດານ ຢູ່ທາງທິດຕາເວັນອອກຂອງໂນບາ ແລະໂຢກເບຮາ ແລ້ວບຸກ
ໂຈມຕີທະຫານເຫລົ່ານັ້ນຢ່າງບໍ່ທັນຮູ້ຕົວ
12 ຝ່າຍກະສັດທັງສອງຂອງຊາວມີດີອານ ຄືເຊບາແລະຊັນມູນນາກໍແລ່ນປົບຫນີ ແຕ່ກີເດໂອນໄລ່ຕິດຕາມແລະ
ຈັບທັງສອງຄົນມາໄດ້ ສ່ວນກອງທະຫານຂອງເຂົາກໍຕື່ນຕົກໃຈແລະແຕກກະຈັດກະຈາຍໄປ
13 ແລ້ວກີເດໂອນບຸດຂອງໂຢອັສກໍກັບມາຈາກເລວເສິກ ໄດ້ຜ່ານມາທາງເຮເຣສ
14 ທ່ານໄດ້ຈັບເອົາຊາຍຫນຸ່ມຜູ້ນຶ່ງຈາກເມືອງຊຸກໂກດ ແລະໄດ້ສອບຖາມເອົາເຣື່ອງຕ່າງໆນຳເຂົາ ຊາຍຫນຸ່ມຜູ້
ນັ້ນໄດ້ຈົດຊື່ພວກເຈົ້ານາຍ ແລະພວກເຖົ້າແກ່ເຈັດສິບຄົນຂອງເມືອງຊຸກໂກດໃຫ້ກີເດໂອນ

15 ແລ້ວກິເດໂອນໄດ້ໄປຫາພວກຊຸກໂກດແລະເວົ້າວ່າ, "ພວກເຈົ້າຈື່ເວລາທີ່ພວກເຈົ້າດູຫມິ່ນປມາດຂ້າພະເຈົ້າ
ຫລືບໍ ພວກເຈົ້າໄດ້ເວົ້າວ່າພວກເຈົ້າບໍ່ສາມາດເອົາອາຫານໃຫ້ພວກທະຫານທີ່ອ່ອນແຮງຂອງຂ້າພະເຈົ້າກິນ
ເພາະວ່າຂ້າພະເຈົ້າຈັບເຊບາ ແລະຊັນມູນນາບໍ່ທັນໄດ້ ແຕ່ດຽວນີ້ ພວກເຂົາຢູ່ນີ້ແລ້ວ"
16 ກິເດໂອນຈຶ່ງເອົາຫວາຍທີ່ມີຫນາມ ແລະໄມ້ຫນາມຈາກຖິ່ນກັນດານມາລົງໂທດຜູ້ນໍາເມືອງຊຸກໂກດ
17 ແລ້ວທໍາລາຍຫໍຄອຍທີ່ເປນູເອນແລະຂ້າຊາວເມືອງນັ້ນຖິ້ມ
18 ແລ້ວທ່ານໄດ້ຖາມເຊບາ ແລະຊັນມູນນາວ່າ, "ຄົນທີ່ພວກເຈົ້າຂ້ານັ້ນມີຮູບຮ່າງຢ່າງໃດ" ພວກເຂົາໄດ້ຕອບວ່າ,
"ຄືກັນກັບທ່ານ ພວກເຂົາທຸກໆຄົນຄືກັນກັບພຣະຣາຊກຸມມານ"
19 ກິເດໂອນຈຶ່ງຕອບວ່າ, "ພວກເຂົາເປັນອ້າຍນ້ອງລູກແມ່ດຽວກັບຂ້າພະເຈົ້າ ຂ້າພະເຈົ້າຂໍສາບານໃນພຣະນາມ
ພຣະຜູ້ເປັນເຈົ້າວ່າ ຖ້າພວກເຈົ້າບໍ່ໄດ້ຂ້າເຂົາ ຂ້າພະເຈົ້າຈະບໍ່ຂ້າພວກເຈົ້າ"
20 ທ່ານຈຶ່ງບອກເຢເທີບຸດຊາຍກົກຂອງທ່ານວ່າ, "ຈົ່ງໄປຂ້າພວກເຂົາເສັຽ" ແຕ່ວ່າເດັກຊາຍຄົນນັ້ນບໍ່ກ້າຖອດດາບ
ອອກ ເຂົາຢ້ານ ເພາະວ່າເຂົາຍັງເປັນເດັກນ້ອຍຢູ່
21 ແຕ່ເຊບາ ແລະຊັນມູນນາເວົ້າວ່າ, "ຈົ່ງມາຂ້າພວກເຮົາດ້ວຍຕົນເອງເທີນ ເພາະວ່າທ່ານເອງເປັນຜູ້ຊາຍເຕັມ
ໂຕຢູ່ແລ້ວ" ດັ່ງນັ້ນ ກິເດໂອນຈຶ່ງຂ້າເຊບາ ແລະຊັນມູນນາ ແລະເອົາຫລຽນຮູບເດືອນທີ່ເອ້ຄໍອູດໄປພ້ອມ

**ກິເດໂອນໄດ້ສ້າງຮູບພຣະ**

Gideon's Idolatry

22 ຫລັງຈາກນັ້ນ ພວກອິສຣາເອນໄດ້ເວົ້າຕໍ່ກິເດໂອນວ່າ, "ຂໍທ່ານພ້ອມທັງບຸດຊາຍແລະຫລານຂອງທ່ານ ຈົ່ງເປັນ
ຜູ້ຄຸ້ມຄອງພວກເຮົາເທີນ ເພາະວ່າທ່ານໄດ້ຊ່ອຍເຫລືອພວກເຮົາໃຫ້ພົ້ນຈາກເງື້ອມມືຂອງພວກມີດີອານ"
23 ກິເດໂອນຕອບວ່າ, "ຂ້າພະເຈົ້າແລະລູກຊາຍຂອງຂ້າພະເຈົ້າຈະບໍ່ເປັນຜູ້ຄຸ້ມຄອງຂອງພວກເຈົ້າ ແຕ່ວ່າແມ່ນພ
ຣະຜູ້ເປັນເຈົ້າເປັນຜູ້ຄຸ້ມຄອງພວກເຈົ້າ"
24 ກິເດໂອນເວົ້າຕໍ່ໄປວ່າ, "ຂໍໃຫ້ຂ້າພະເຈົ້າຂໍສິ່ງນຶ່ງຈາກພວກເຈົ້າ ຄືຈົ່ງເອົາຕຸ້ມຫູທີ່ພວກເຈົ້າຍຶດມາໄດ້ນັ້ນໃຫ້ຂ້າ
ພະເຈົ້າ" (ພວກມີດີອານຖືຕຸ້ມຫູຄໍາເພາະວ່າເຂົາເປັນຄົນທີ່ຢູ່ຕາມຖິ່ນກັນດານ)
25 ພວກເຂົາຕອບວ່າ, "ພວກເຮົາຍິນດີທີ່ຈະເອົາສິ່ງເຫລົ່ານີ້ໃຫ້ທ່ານ" ແລ້ວພວກເຂົາກໍເອົາຜ້າມາປູລົງ ແລະເອົາ
ຕຸ້ມຫູທີ່ຫ້ອນໂຮມໄດ້ມາວາງໄວ້ໃນຜ້ານັ້ນ
26 ຕຸ້ມຫູທີ່ກິເດໂອນຂໍມານັ້ນຊັ່ງໄດ້ນຶ່ງພັນເຈັດຮ້ອຍເຊເກລ ໂດຍບໍ່ໄດ້ໄລ່ສິ່ງອື່ນໆເຂົ້ານໍາເຊັ່ນ ເຄື່ອງເອ້ ສ້ອຍຄໍ
ເຄື່ອງນຸ່ງສີມ່ວງທີ່ເຈົ້າຊີວິດມີດີອານນຸ່ງຖື ແລະເຄື່ອງທີ່ຜູກເອ້ຄໍອູດດ້ວຍ
27 ແລ້ວກິເດໂອນໄດ້ສ້າງຮູບພຣະດ້ວຍເຄື່ອງເຫລົ່ານີ້ ແລະເອົາໄວ້ໃນເມືອງຂອງທ່ານທີ່ຊື່ວ່າ ໂອຟຣາ ພວກອິສ
ຣາເອນທຸກຄົນກໍພາກັນປະຖິ້ມພຣະເຈົ້າ ພວກເຂົາພາກັນນະມັສການຮູບພຣະນັ້ນທີ່ເມືອງໂອຟຣາ ການກະ
ທໍາເຊັ່ນນີ້ເປັນບ້ວງແຮ້ວສໍາລັບກິເດໂອນແລະຄອບຄົວ
28 ພວກມີດີອານໄດ້ພ່າຍແພ້ພວກອິສຣາເອນ ໂດຍສູນເສັຽທຸກຢ່າງໃນເວລາທີ່ກິເດໂອນຍັງມີຊີວິດຢູ່ນັ້ນ ພື້ນ
ແຜ່ນດິນກໍໄດ້ຮັບຄວາມສງົບສຸກຕລອດສີ່ສິບປີ

**ມໍຣະນະກັມຂອງກິເດໂອນ**

Death of Gideon

29 ຕໍ່ຈາກນັ້ນມາ ກິເດໂອນ (ເຢຣຸບບາອານ) ບຸດຂອງໂຢອັສກໍກັບຄືນເມືອຢູ່ເຮືອນຂອງຕົນ
30 ກິເດໂອນມີບຸດຊາຍເກີດຈາກສາຍໂລຫິດຂອງທ່ານເຈັດສິບຄົນ ເພາະທ່ານມີເມັຽຫລາຍຄົນ
31 ທ່ານຍັງມີເມັຽນ້ອຍອີກທີ່ເມືອງເຊເຄມ ເມັຽຜູ້ນີ້ມີບຸດຊາຍຄົນນຶ່ງຊື່ ອາບີເມເລກ
32 ກິເດໂອນບຸດຊາຍຂອງໂຢອັສໄດ້ເສັຽຊີວິດໄປໃນວັຍຊະຣາ ສ່ວນສົບຂອງທ່ານໄດ້ຝັງໄວ້ໃນອຸບໂມງຂອງໂຢອັ
ສບິດາຂອງທ່ານທີ່ເມືອງໂອຟຣາ ຊຶ່ງເປັນເມືອງຂອງຊາວອາບີເອເຊີ

33 ຫລັງຈາກກິເດໂອນໄດ້ເສັຽຊີວິດແລ້ວ ພວກອິສຣາເອນກໍຫັນຫນີອີກ ແລະຫລິ້ນຊູ້ກັບບັນດາພຣະບາອານ ຖື
ເອົາພຣະບາອານເບຣິດເປັນພຣະເຈົ້າຂອງພວກເຂົາ
34 ພວກເຂົາຫລົງລືມພຣະຜູ້ເປັນເຈົ້າຂອງພວກເຂົາ ຜູ້ຊົງຊ່ອຍເຂົາໃຫ້ພົ້ນຈາກສັດຕຣູທີ່ຢູ່ອ້ອມຮອບເຂົານັ້ນ
35 ພວກເຂົາບໍ່ໄດ້ສະແດງຄວາມເມດຕາຕໍ່ຄອບຄົວກິເດໂອນ ທີ່ເຄີຍສ້າງຄຸນງາມຄວາມດີໄວ້ກັບພວກອິສຣາເອນ

## 9 ອາບີເມເລກ

### Abimelech Attempts to Establish a Monarchy

1 ຢູ່ມາ ອາບີເມເລກບຸດຂອງເຢຣຸບບາອານ ໄດ້ໄປຫາພວກຍາດພີ່ນ້ອງຂອງແມ່ທີ່ເມືອງເຊເຄມ ແລ້ວເວົ້າກັບ
ເຂົາ ແລະກັບຄອບຄົວທີ່ບ້ານຂອງຕົນວ່າ,
2 "ພວກເຈົ້າຕ້ອງການຜູ້ໃດເປັນຜູ້ປົກຄອງພວກເຈົ້າ ຕ້ອງການລູກຊາຍທັງເຈັດສິບຄົນຂອງເຢຣຸບບາອານ ຫລື
ວ່າຄົນດຽວ ຈົ່ງເຂົ້າໃຈວ່າຂ້າພະເຈົ້າກໍເປັນເນື້ອຫນັງ ແລະກ້ອນເລືອດຂອງພວກເຈົ້າ"
3 ແລ້ວພວກພີ່ນ້ອງທາງແມ່ຂອງອາບີເມເລກໄດ້ໄປເວົ້າເຣື່ອງນີ້ຕໍ່ຊາວເຊເຄມແທນເຂົາ ດັ່ງນັ້ນຊາວຊີເຄມຈຶ່ງ
ຕັດສິນໃຈຮັບເອົາອາບີເມເລກເປັນຜູ້ປົກຄອງ ເພາະວ່າອາບີເມເລກເປັນເຊື້ອສາຍຂອງເຂົາ
4 ພວກເຂົາໄດ້ເອົາເງິນເຈັດສິບແຜ່ນອອກຈາກວິຫານຂອງພຣະບາອານເບຣິດໃຫ້ແກ່ອາບີເມເລກ ສ່ວນເອບີເມ
ເລກກໍເອົາເງິນນັ້ນຈ້າງພວກອັນຕະພານໄປນຳ
5 ເຂົາມຸ່ງຫນ້າໄປເຮືອນບິດາຂອງເຂົາທີ່ເມືອງໂອຟຣາ ແລະຂ້າລູກຊາຍເຈັດສິບຄົນຂອງເຢຣຸບບາອານຢູ່ເທິງກ
້ອນຫີນດຽວກັນ ໂຢທາມບຸດຊາຍຫລ້າຂອງເຢຣຸບບາອານໄດ້ລີ້ຢູ່ ສະນັ້ນຈຶ່ງບໍ່ໄດ້ຖືກຂ້າ
6 ແລ້ວເຊເຄມທຸກຄົນພ້ອມທັງຊາວເບັດມິນໂລ ກໍພາກັນໄປທີ່ຕົ້ນໄມ້ໃຫຍ່ອັນສັກສິດທີ່ເມືອງເຊເຄມ ເພື່ອແຕ່ງ
ຕັ້ງອາບີເມເລກເປັນເຈົ້າຊີວິດ

### The Parable of The Trees

7 ເມື່ອໂຢທາມໄດ້ຍິນເຣື່ອງນີ້ ເຂົາກໍໄປຢືນຢູ່ເທິງພູເກຣິຊິມ ແລະຮ້ອງໃສ່ເຂົາດ້ວຍສຽງດັ່ງວ່າ, "ຊາວເຊເຄມທັງ
ຫລາຍຈົ່ງຟັງຂ້າພະເຈົ້າ ແລະພຣະເຈົ້າອາດຈະຟັງພວກເຈົ້າ ຂ້າພະເຈົ້າຂໍເວົ້າປຽບທຽບວ່າ
8 ຄັ້ງນຶ່ງ ເມື່ອຕົ້ນໄມ້ທັງຫລາຍອອກໄປເລືອກເອົາເຈົ້າຊີວິດຂອງພວກມັນ ພວກມັນໄດ້ເວົ້າກັບຕົ້ນ
ຫມາກກອກວ່າ ຈົ່ງມາເປັນເຈົ້າຊີວິດຂອງພວກເຮົາເທີນ
9 ຕົ້ນຫມາກກອກກໍຕອບວ່າ ຖ້າເຮົາປົກຄອງພວກເຈົ້າ ເຮົາຈະຕ້ອງເສັຽນ້ຳມັນຂອງເຮົາທີ່ເຂົາໃຊ້ຖວາຍກຽດແກ່
ພຣະທັງຫລາຍແລະແກ່ມະນຸດ
10 ຕົ້ນໄມ້ທັງຫລາຍຈຶ່ງເວົ້າຕໍ່ຕົ້ນຫມາກເດື່ອວ່າ ຂໍໃຫ້ເຈົ້າມາເປັນເຈົ້າຊີວິດຂອງພວກເຮົາເທີນ
11 ແຕ່ຕົ້ນຫມາກເດື່ອຕອບວ່າ ຖ້າເຮົາປົກຄອງພວກເຈົ້າເຮົາຈະເສັຽຫມາກໄມ້ອັນຫອມຫວານຂອງເຮົາ
12 ດັ່ງນັ້ນ ຕົ້ນໄມ້ທັງຫລາຍຈຶ່ງເວົ້າຕໍ່ຕົ້ນອະງຸ່ນວ່າ ຂໍໃຫ້ເຈົ້າມາເປັນເຈົ້າຊີວິດຂອງເຮົາເທີນ
13 ແຕ່ຕົ້ນອະງຸ່ນຕອບວ່າ ຖ້າເຮົາປົກຄອງພວກເຈົ້າ ເຮົາຈະຕ້ອງເສັຽເຫລົ້າອະງຸ່ນທີ່ທຳໃຫ້ພຣະທັງຫລາຍ ແລະ
ມວນມະນຸດມີຄວາມສຸກ
14 ແລ້ວຕົ້ນໄມ້ທຸກຕົ້ນໄດ້ເວົ້າຕໍ່ກົກຫນາມວ່າ ຂໍໃຫ້ເຈົ້າມາເປັນເຈົ້າຊີວິດຂອງພວກເຮົາເທີນ
15 ກົກຫນາມໄດ້ຕອບວ່າ ຖ້າພວກເຈົ້າຕ້ອງການໃຫ້ເຮົາເປັນເຈົ້າຊີວິດຂອງພວກເຈົ້າແທ້ ເຊີນມາຊົ້ນຮົ່ມຂອງເຮົາ
ຖ້າວ່າພວກເຈົ້າບໍ່ມາໄຟຈະອອກມາຈາກຕົ້ນຫນາມ ແລ້ວໄຫມ້ຕົ້ນສົນທັງຫລາຍທີ່ຢູ່ເທິງພູປະເທດເລບານອນ
ນີ້"
16 ໂຢທາມຈຶ່ງເວົ້າຕໍ່ໄປອີກວ່າ, "ດຽວນີ້ພວກເຈົ້າໄດ້ແຕ່ງຕັ້ງອາບີເມເລກເປັນເຈົ້າຊີວິດດ້ວຍຄວາມຈິງໃຈບໍ ພວກ
ເຈົ້າຕອບສນອງຄວາມດີຂອງເຢຣຸບບາອານ ແລະຄອບຄົວຂອງທ່ານແບບນີ້ບໍ

17 ຈົ່ງຈຳໄວ້ວ່າພໍ່ຂອງຂ້າພະເຈົ້າໄດ້ຕໍ່ສູ້ເພື່ອພວກເຈົ້າ ທ່ານໄດ້ສ່ຽງຊີວິດເພື່ອຊ່ອຍພວກເຈົ້າໃຫ້ພົ້ນຈາກພວກມີດີອານ
18 ແຕ່ວັນນີ້ພວກເຈົ້າກັບມາຕໍ່ສູ້ຄອບຄົວພໍ່ຂອງຂ້າພະເຈົ້າ ພວກເຈົ້າຂ້າລູກຊາຍເຈັດສິບຄົນຂອງທ່ານຢູ່ເທິງຫີນກ້ອນດຽວ ແລະແຕ່ງຕັ້ງອາບີເມເລກ ລູກທີ່ເກີດຈາກຍິງຮັບໃຊ້ຂອງທ່ານເປັນເຈົ້າຊີວິດເມືອງເຊເຄມ ເພາະວ່າເຂົາເປັນເຊື້ອສາຍຂອງພວກເຈົ້າ
19 ຖ້າວ່າສິ່ງທີ່ພວກເຈົ້າກະທຳຕໍ່ເຢຣຸບບາອານເປັນຄວາມຈິງແລະສັດຊື່ແທ້ ຂໍໃຫ້ອາບີເມເລກຈົ່ງມີຄວາມສຸກຢູ່ກັບພວກເຈົ້າເທີ້ນ
20 ຖ້າບໍ່ເປັນດັ່ງນັ້ນ ຂໍໃຫ້ຄວາມໂຫດຮ້າຍດັ່ງໄຟທີ່ມາຈາກອາບີເມເລກທຳລາຍຊາວເຊເຄມກັບຊາວເບັດມີນໂລທຳລາຍອາບີເມເລກເຊັ່ນດຽວກັນ
21 ແລ້ວໂຢທາມກໍປົບໜີໄປ ເຂົາໄປອາໄສຢູ່ໃນເມືອງເບເອີ ເພາະວ່າເຂົາຢ້ານອາບີເມເລກອ້າຍຂອງເຂົາ

The Downfall of Abimelech

22 ອາບີເມເລກໄດ້ປົກຄອງອິສຣາເອນສາມປີ
23 ພຣະເຈົ້າຊົງໃຊ້ປີສາດຮ້າຍເຂົ້າສິງລະຫວ່າງອາບີເມເລກກັບຊາວເມືອງເຊເຄມ ຊາວເມືອງເຊເຄມກໍກະບົດຕໍ່ອາບີເມເລກ
24 ເພື່ອທາຣຸນກັມທີ່ເຂົາໄດ້ກະທຳຕໍ່ບຸດເຈັດສິບຄົນຂອງເຢຣຸບບາອານຈະສນອງ ແລະໂທດອັນເກີດຈາກການຂ້າຄົນເຫລົ່ານັ້ນຈະໄດ້ຕົກແກ່ອາບີເມເລກ ພີ່ນ້ອງຜູ້ໄດ້ປະຫານເຂົາແລະຕົກແກ່ຊາວເມືອງເຊເຄມ ຜູ້ເສີມກຳລັງມືອາບີເມເລກໃຫ້ຂ້າພີ່ນ້ອງຂອງຕົນ
25 ຊາວເມືອງເຊເຄມໄດ້ວາງຄົນຄອຍຊຸ່ມດັກໂຈມຕີອາບີເມເລກທີ່ເທິງຍອດພູ ເຂົາກໍປຸ້ນຄົນທັງປວງທີ່ຜ່ານໄປມາທາງນັ້ນ ແລະມີຄົນບອກອາບີເມເລກໃຫ້ຮູ້
26 ຝ່າຍກາອັນບຸດເອເບດກັບຍາດຂອງເຂົາເຂົ້າໄປໃນເມືອງເຊເຄມ ຊາວເຊເຄມໄວ້ເນື້ອເຊື່ອໃຈກາອັນ
27 ຈຶ່ງພາກັນອອກໄປໃນສວນອະງຸ່ນເກັບໝາກມາຢໍ່າ ທຳການລ້ຽງຂຶ້ນໃນວັດພຣະຂອງເຂົາ ເຂົາຮັບປະທານແລະດື່ມ ແລະແຊ່ງດ່າອາບີເມເລກ
28 ກາອັນບຸດເອເບດຈຶ່ງກ່າວວ່າ, “ອາບີເມເລກຄືໃຜ ແລະເຮົາຊາວເຊເຄມເປັນໃຜກັນຈຶ່ງຕ້ອງມາບົວລະບັດເຂົາບຸດຂອງເຢຣຸບບາອານ ແລະເຊບູນເຈົ້າໜ້າທີ່ຜູ້ຊ່ອຍກໍເຄີຍບົວລະບັດຄົນຮາໂມຣ໌ບິດາຂອງເຊເຄມບໍ່ແມ່ນຫລື ເຮົາຈະບົວລະບັດຜູ້ນັ້ນເຮັດຫຍັງ
29 ຖ້າຄົນເມືອງນີ້ຢູ່ໃຕ້ການປົກຄອງຂອງເຮົາ ເຮົາຈະຖອດອາບີເມເລກເສັຽ ເຮົາຈະທ້າອາບີເມເລກວ່າ “ຈົ່ງເພີ້ມກອງທັບຂອງທ່ານຂຶ້ນແລ້ວອອກມາເຖີດ”
30 ພໍເຊບູນເຈົ້າເມືອງໄດ້ຍິນຖ້ອຍຄຳຂອງກາອັນບຸດເອເບດກໍໃຈຮ້າຍ
31 ຈຶ່ງສົ່ງຜູ້ນຳຂ່າວໄປຫາອາບີເມເລກທີ່ເມືອງອາຣູມາ ວ່າ, “ກາອັນບຸດເອເບດແລະຍາດຂອງເຂົາມາທີ່ເມືອງເຊເຄມ ໄດ້ຍຸແຫຍ່ຊາວເມືອງນັ້ນໃຫ້ຕໍ່ສູ້ກັບທ່ານ
32 ບັດນີ້ຂໍທ່ານຈົ່ງລຸກຂຶ້ນໃນເວລາກາງຄືນ ທັງທ່ານແລະຄົນທີ່ຢູ່ກັບທ່ານ ໄປຊຸ່ມຄອຍຢູ່ໃນທົ່ງນາ
33 ຮຸ່ງເຊົ້າພໍດວງອາທິດຂຶ້ນ ທ່ານຈົ່ງລຸກຂຶ້ນແຕ່ເດິກ ບຸກຮຸກເຂົ້າເມືອງ ເມື່ອກາອັນກັບກອງທັບອອກມາຕໍ່ສູ້ກັບທ່ານ ທ່ານຈົ່ງກະທຳແກ່ເຂົາຕາມແຕ່ໂອກາດຈະອຳນວຍ”
34 ຝ່າຍອາບີເມເລກ ແລະກອງທັບທີ່ຢູ່ກັບທ່ານກໍລຸກຂຶ້ນໃນເວລາກາງຄືນ ແບ່ງອອກເປັນສີ່ກອງໄປຊຸ່ມຄອຍຕໍ່ສູ້ເມືອງເຊເຄມ
35 ກາອັນບຸດເອເບດກໍອອກໄປຢືນຢູ່ທີ່ທາງເຂົ້າປະຕູເມືອງ ອາບີເມເລກກໍລຸກຂຶ້ນພ້ອມກັບກອງທັບທີ່ຢູ່ກັບເຂົາອອກມາຈາກບ່ອນລີ້ທັນທີ

36 ເມື່ອກາອັນເຫັນກອງທັບ ຈຶ່ງເວົ້າກັບເຊບູນວ່າ, “ເບິ່ງແມ໋, ກອງທັບກຳລັງເຄື່ອນລົງມາຈາກຍອດພູ” ເຊບູນ
ຕອບວ່າ, “ທ່ານເຫັນເງົາພູເປັນຄົນໄປຕີ້”
37 ກາອັນເວົ້າຂຶ້ນອີກວ່າ, “ເບິ່ງແມ໋, ກອງທັບກຳລັງອອກມາຈາກທາງຕົ້ນໂອກຂອງໝໍຜີ”
38 ເຊບູນກໍກ່າວແກ່ກາອັນວ່າ, “ປາກຂອງທ່ານຢູ່ໃສດຽວນີ້ ທ່ານຜູ້ທີ່ກ່າວວ່າ “ອາບີເມເລກຄືໃຜ ທີ່ເຮົາຕ້ອງບົວ
ລະບັດ” ຄົນເຫລົ່ານີ້ເປັນຄົນທີ່ທ່ານໝິ່ນປມາດບໍ່ແມ່ນຫລື ຈົ່ງຍົກອອກໄປຕໍ່ສູ້ກັບເຂົາເຖີດ”
39 ກາອັນກໍຍ່າງນຳໜ້າກອງທັບຂອງເຊເຄມອອກໄປຕໍ່ສູ້ກັບອາບີເມເລກ
40 ອາບີເມເລກກໍຂັບໄລ່ກາອັນໜີໄປ ມີຄົນຖືກບາດເຈັບລົ້ມຕາຍເປັນຈຳນວນຫລວງຫລາຍ ຈົນເຖິງທາງເຂົ້າປະ
ຕູເມືອງ
41 ຝ່າຍອາບີເມເລກກໍອາໄສຢູ່ທີ່ອາຣູມາ ແລະເຊບູນກໍຂັບໄລ່ກາອັນກັບຍາດຂອງເຂົາອອກໄປ ບໍ່ໃຫ້ຢູ່ໃນເຊເຄມ
ຕໍ່ໄປ
42 ຮຸ່ງຂຶ້ນ ມີຊາວເມືອງອອກໄປໃນທົ່ງນາ ອາບີເມເລກກໍຮູ້ເຣື່ອງ
43 ທ່ານຈຶ່ງແບ່ງຄົນຂອງທ່ານອອກເປັນສາມກອງ ຊຸ່ມຄອຍຢູ່ທີ່ທົ່ງນາ ທ່ານມອງເບິ່ງ ຄົນອອກມາຈາກເມືອງ
ທ່ານຈຶ່ງລຸກຂຶ້ນປະຫານເຂົາ
44 ສ່ວນອາບີເມເລກກັບທະຫານທີ່ຢູ່ນຳກໍບຸກຣຸກໄປຢືນຢູ່ທາງເຂົ້າປະຕູເມືອງ ຝ່າຍທະຫານອີກສອງກອງກໍບຸກ
ເຂົ້າໂຈມຕີຄົນທັງໝົດທີ່ຢູ່ໃນທົ່ງນາປະຫານເສັຽ
45 ອາບີເມເລກໂຈມຕີເມືອງນັ້ນຕລອດວັນຮອດຄໍ່າ ຍຶດເມືອງນັ້ນໄດ້ ແລະຂ້າຟັນປະຊາຊົນທີ່ຢູ່ໃນເມືອງນັ້ນ ທັງ
ທຳລາຍເມືອງນັ້ນເສັຽ ແລ້ວກໍຫວ່ານເກືອລົງໄປ
46 ເມື່ອຊາວບ້ານຫໍເຊເຄມໄດ້ຍິນເຊັ່ນນັ້ນ ກໍໜີເຂົ້າໄປຢູ່ໃນປ້ອມ ໃນວັດຂອງພຣະເອນເບຣິດ
47 ມີຄົນໄປບອກອາບີເມເລກວ່າ ຊາວບ້ານຫໍເຊເຄມໄດ້ໄປໂຮມກັນຢູ່
48 ອາບີເມເລກກໍຂຶ້ນໄປເທິງພູຊັນໂມນ ທັງທ່ານກັບຄົນທີ່ຢູ່ນຳອາບີເມເລກຖືຂວານຕັດກິ່ງໄມ້ປ່າແບກມາ ທ່ານ
ຈຶ່ງບອກຄົນທີ່ຢູ່ນຳວ່າ, “ເຈົ້າເຫັນຂ້າພະເຈົ້າເຮັດຫຍັງ ຈົ່ງໄປເຮັດຢ່າງຂ້າພະເຈົ້າເຖີດ”
49 ດັ່ງນັ້ນຄົນທັງປວງກໍຕັດກິ່ງໄມ້ແບກຕາມອາບີເມເລກໄປສຸມໄວ້ໃນທີ່ປ້ອມ ແລ້ວກໍຈູດໄຟເຜົາປ້ອມນັ້ນ ຊາວ
ບ້ານຫໍຄອຍກໍຕາຍໝົດ ທັງຊາຍແລະຍິງປະມານນຶ່ງພັນຄົນ
50 ອາບີເມເລກໄປຍັງເມືອງເທເບສ ຕັ້ງຄ້າຍລ້ອມເມືອງເທເບສໄວ້ ແລະຍຶດເມືອງນັ້ນໄດ້
51 ແຕ່ໃນເມືອງມີຫໍຮົບແຫ່ງນຶ່ງ ປະຊາຊົນເມືອງນັ້ນກໍໜີໄປຢູ່ໃນຫໍທັງຜູ້ຊາຍແລະຜູ້ຍິງ ປິດປະຕູຂັງຕົນເອງເສັຽ
ເຂົາກໍຂຶ້ນໄປເທິງຫລັງຄາຫໍຮົບ
52 ອາບີເມເລກມາໂຈມຕີຫໍຮົບນີ້ ໄດ້ຕໍ່ສູ້ກັນ ຈົນເຂົ້າມາໃກ້ປະຕູຫໍຮົບໄດ້ ຈະເອົາໄຟເຜົາ
53 ມີຍິງຄົນນຶ່ງທີ່ຢູ່ເທິງຫລັງຄາໄດ້ໂຍນຫີນໂມ່ລົງໃສ່ຫົວອາບີເມເລກ ກະໂຫລກຫົວຂອງທ່ານແຕກ
54 ທ່ານຈຶ່ງຟ້າວຮ້ອງບອກຄົນໜຸ່ມທີ່ຖືອາວຸດຂອງທ່ານວ່າ, “ເອົາດາບຟັນເຮົາເສັຽ ເພື່ອຄົນຈະບໍ່ກ່າວວ່າ “ຜູ້ຍິງ
ຄົນນຶ່ງຂ້າເຂົາຕາຍ” ຊາຍໜຸ່ມຂອງທ່ານຄົນນັ້ນແທງທ່ານທະລຸຈົນເຖິງແກ່ຄວາມຕາຍ
55 ເມື່ອຄົນອິສຣາເອນເຫັນວ່າອາບີເມເລກເສັຽຊີວິດແລ້ວ ຄົນຕ່າງກໍກັບໄປບ່ອນຢູ່ຂອງຕົນ
56 ດັ່ງນີ້ແຫລະ ພຣະເຈົ້າຊົງສນອງຄວາມຊົ່ວທີ່ອາບີເມເລກໄດ້ກະທຳຕໍ່ບິດາຂອງຕົນທີ່ໄດ້ຂ້າພີ່ນ້ອງເຈັດສິບຄົນ
ຂອງຕົນ
57 ພຣະເຈົ້າຊົງກະທຳໃຫ້ຄວາມຊົ່ວຮ້າຍຂອງຊາວເຊເຄມກັບຕົກໃສ່ເທິງຫົວຂອງເຂົາທັງຫລາຍເອງ ຄຳສາບແຊ່ງ
ຂອງໂຢທາມບຸດເຢຣຸບບາອານກໍຕົກຢູ່ເທິງເຂົາທັງຫລາຍ

## 10 ໂທລາ ແລະຢາອີ

Tola And Jair

1 ຕໍ່ຈາກອາບີເມເລກມີຄົນຂຶ້ນມາຊ່ອຍກູ້ອິສຣາເອນຊື່ ໂທລາບຸດຊາຍຂອງປູວາຜູ້ເປັນບຸດຂອງໂດໂດ ຊາວເຜົ່າ
ອິສຊາຄາ ແລະເຂົາຢູ່ທີ່ເມືອງຊາມີຣ໌ ໃນພູດອຍເອຟຣາອິມ
2 ທ່ານປົກຄອງອິສຣາເອນຢູ່ເປັນເວລາຊາວສາມປີ ແລະທ່ານກໍເສັຽຊີວິດ ເຂົາຝັງສົບທ່ານໄວ້ທີ່ເມືອງຊາມີຣ໌
3 ຕໍ່ມາຢາອີຣ໌ຄົນກີເລອາດໄດ້ຂຶ້ນມາ ແລະທ່ານປົກຄອງອິສຣາເອນຢູ່ເປັນເວລາຊາວສອງປີ
4 ທ່ານມີບຸດສາມສິບຄົນ ຂີ່ລູກລໍສາມສິບໂຕ ແລະມີເມືອງຢູ່ສາມສິບຫົວເມືອງ ເອີ້ນວ່າເມືອງ ຮາວໂວດຢາອີ
ຈົນເຖິງທຸກວັນນີ້ຊຶ່ງຢູ່ໃນແຜ່ນດິນກີເລອາດ
5 ຢາອີຣ໌ກໍເສັຽຊີວິດຖືກຝັງໄວ້ທີ່ເມືອງ ການໂມນ

### ຄົນອັມໂມນບີບບັງຄັບຄົນອິສຣາເອນ

Oppression by the Ammonites

6 ຄົນອິສຣາເອນກໍກະທຳຊົ່ວໃນສາຍພຣະເນດພຣະເຈົ້າອີກ ໄປບົວລະບັດພຣະບາອານທັງຫລາຍແລະພວກພ
ຣະອັຊຕາຣ໌ ເຕສພຣະຂອງເມືອງຊີເຣັຽ (ອາຣາມ) ພຣະຂອງເມືອງຊີໂດນ ພຣະຂອງເມືອງໂມອາບ ພຣະ
ຂອງຄົນອັມໂມນ ພຣະຂອງຄົນຟີລິສຕິນ ແລະເຂົາທັງຫລາຍປະຖິ້ມພຣະເຈົ້າບໍ່ໄດ້ບົວລະບັດພຣະອົງ
7 ແລະພຣະພິໂຣດຂອງພຣະເຈົ້າກໍພຸ່ງຂຶ້ນຕໍ່ຄົນອິສຣາເອນ ຈຶ່ງຊົງຂາຍເຂົາໄວ້ໃນມືຂອງຄົນຟີລິສຕິນ ແລະໃນມື
ຂອງຄົນອັມໂມນ
8 ເຂົາໄດ້ຂົ່ມເຫັງແລະບີບບັງຄັບຄົນອິສຣາເອນໃນປີນັ້ນ ເຂົາໄດ້ບີບບັງຄັບຊາວອິສຣາເອນຟາກຕາເວັນອອກ
ຂອງແມ່ນ້ຳຈໍແດນໃນແຜ່ນດິນຂອງຄົນອາໂມຣິດ ຊຶ່ງຢູ່ໃນກີເລອາດສິບແປດປີ
9 ທັງຄົນອັມໂມນໄດ້ຂ້າມແມ່ນ້ຳຈໍແດນໄປຕໍ່ສູ້ກັບຢູດາແລະຕໍ່ສູ້ກັບເບັນຢາມິນ ແລະຕໍ່ສູ້ກັບເຊື້ອສາຍຂອງເອຟ
ຣາອິມ ດັ່ງນັ້ນອິສຣາເອນຈຶ່ງເດືອດຮ້ອນຢ່າງຍິ່ງ
10 ຄົນອິສຣາເອນຮ້ອງທຸກຕໍ່ພຣະເຈົ້າວ່າ, "ຂ້າພຣະອົງທັງຫລາຍໄດ້ກະທຳບາບຕໍ່ພຣະອົງ ເພາະວ່າຂ້າພຣະອົງ
ໄດ້ປະຖິ້ມ ພຣະເຈົ້າຂອງຂ້າພຣະອົງ ແລະບົວລະບັດບັນດາພຣະບາອານ"
11 ພຣະເຈົ້າສັ່ງກັບຄົນອິສຣາເອນວ່າ, "ເຮົາບໍ່ໄດ້ຊ່ອຍປົດປ່ອຍເຈົ້າໃຫ້ພົ້ນຈາກຊາວເອຢິບຈາກຄົນອາໂມຣິດຈ
າກຄົນອັມໂມນ ແລະຈາກຄົນຟີລິສຕິນຫລື
12 ທັງຄົນຊີໂດນ ຄົນອາມາເລກ ແລະຊາວມາໂອນໄດ້ບີບບັງຄັບເຈົ້າ ເຈົ້າໄດ້ຮ້ອງທຸກເຖິງເຮົາ ແລະເຮົາໄດ້ຊ່ອຍ
ເຈົ້າໃຫ້ພົ້ນມືຂອງເຂົາທັງຫລາຍ
13 ເຖິງປານນັ້ນເຈົ້າທັງຫລາຍຍັງໄດ້ປະຖິ້ມເຮົາ ແລະບົວລະບັດພຣະອື່ນ ສະນັ້ນເຮົາຈຶ່ງຈະບໍ່ຊ່ອຍກູ້ເຈົ້າທັງ
ຫລາຍອີກຕໍ່ໄປ
14 ຈົ່ງໄປຮ້ອງທຸກຕໍ່ພຣະຊຶ່ງເຈົ້າທັງຫລາຍໄດ້ເລືອກບົວລະບັດນັ້ນເຖີດ ໃຫ້ພຣະເຫລົ່ານັ້ນຊ່ອຍປົດປ່ອຍເຈົ້າໃນ
ຍາມທຸກເດືອດຮ້ອນນີ້"
15 ແລະຄົນອິສຣາເອນກາບທູນພຣະເຈົ້າວ່າ, "ຂ້າພຣະອົງທັງຫລາຍໄດ້ກະທຳບາບແລ້ວ ຂໍພຣະອົງຊົງກະທຳແກ່
ຂ້າພຣະອົງຕາມທີ່ພຣະອົງຊົງເຫັນຊອບ ຂ້າພຣະອົງຂໍອ້ອນວອນພຽງວ່າ ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນໃນວັນນີ້
ເຖີດ"
16 ດັ່ງນັ້ນເຂົາທັງຫລາຍຈຶ່ງເລີກຖືພຣະອື່ນ ແລະບົວລະບັດພຣະເຈົ້າ ຝ່າຍພຣະອົງຊົງເດືອດຮ້ອນພຣະທັຍດ້ວຍ
ຄວາມທຸກເຂັນຂອງອິສຣາເອນ
17 ຝ່າຍຄົນອັມໂມນກໍຖືກເອີ້ນໃຫ້ຈັບອາວຸດ ເຂົາໄດ້ຕັ້ງຄ້າຍໃນກີເລອາດ ແລະຄົນອິສຣາເອນກໍມາພ້ອມກັນຕັ້ງ
ຄ້າຍຢູ່ທີ່ມິສປາ

18 ແລະປະຊາຊົນ ຄືບັນດາຫົວໜ້າຂອງຄົນກີເລອາດເວົ້າກັນວ່າ, “ຜູ້ໃດທີ່ຈະເປັນຄົນແຣກທີ່ຈະເຂົ້າຕໍ່ສູ້ກັບຄົນ
ອັມໂມນ ຜູ້ນັ້ນຈະເປັນຫົວໜ້າຂອງຊາວກີເລອາດທັງໝົດ”

## 11 ເຢັຟທາຊ່ອຍປົດປ່ອຍອິສຣາເອນຈາກຄົນອັມໂມນ

Jephthah

1 ເຢັຟທາຄົນກີເລອາດເປັນທະຫານທີ່ເກັ່ງກ້າ ແຕ່ເປັນບຸດຂອງຍິງໂສເພນີ ກີເລອາດເປັນບິດາຂອງເຢັຟທາ
2 ເມັຽແທ້ຂອງກີເລອາດມີບຸດຊາຍຫລາຍຄົນ ແລະເມື່ອພວກບຸດເຫລົ່ານັ້ນໃຫຍ່ຂຶ້ນແລ້ວ ຈຶ່ງໄລ່ເຢັຟທາອອກໄປ
ເສັຽໂດຍກ່າວວ່າ, “ເຈົ້າຈະມີສ່ວນໃນມໍຣະດົກຂອງພໍ່ເຮົາບໍ່ໄດ້ ເພາະເຈົ້າເປັນລູກຂອງຍິງຄົນອື່ນ”
3 ເຢັຟທາຈຶ່ງໜີຈາກພີ່ນ້ອງຂອງຕົນໄປອາໄສຢູ່ໃນແຜ່ນດິນໂຕບ ພວກນັກເລງກໍມົວສຸມກັບເຢັຟທາ ແລະຕິດ
ຕາມເຂົາໄປທ່ຽວກໍ່ກວນ
4 ຕໍ່ມາພາຍຫລັງຄົນອັມໂມນໄດ້ທຳສົງຄາມກັບຄົນອິສຣາເອນ
5 ແລະເມື່ອຄົນອັມໂມນທຳສົງຄາມກັບອິສຣາເອນນັ້ນ ພວກຜູ້ໃຫຍ່ຂອງເມືອງກີເລອາດໄດ້ໄປເພື່ອຈະພາເຢັຟ
ທາມາຈາກແຜ່ນດິນໂຕບ
6 ເຂົາກ່າວແກ່ເຢັຟທາວ່າ, “ຈົ່ງມາເປັນຫົວໜ້າຂອງເຮົາ ເພື່ອເຮົາຈະໄດ້ຕໍ່ສູ້ກັບຄົນອັມໂມນ”
7 ແຕ່ເຢັຟທາກ່າວແກ່ພວກຜູ້ໃຫຍ່ຂອງກີເລອາດວ່າ, “ທ່ານບໍ່ໄດ້ກຽດຊັງຂ້າພະເຈົ້າ ແລະຂັບໄລ່ຂ້າພະເຈົ້າເສັຽຈ
າກເຊື້ອສາຍພໍ່ຂອງຂ້າພະເຈົ້າດອກຫລື ເມື່ອຍາມທຸກຍາກທ່ານຈະມາຫາຂ້າພະເຈົ້າເຮັດຫຍັງ
8 ພວກຜູ້ໃຫຍ່ຂອງກີເລອາດຈຶ່ງກ່າວແກ່ເຢັຟທາວ່າ, “ເຫດທີ່ເຮົາກັບມາຫາທ່ານໃນເທື່ອນີ້ ກໍດ້ວຍຕ້ອງການໃຫ້
ທ່ານໄປກັບເຮົາສູ້ຮົບກັບຄົນອັມໂມນ ແລ້ວມາເປັນຫົວໜ້າຂອງເຮົາທີ່ຈະປົກຄອງຊາວກີເລອາດທັງປວງ”
9 ເຢັຟທາຈຶ່ງກ່າວແກ່ພວກຜູ້ໃຫຍ່ຂອງກີເລອາດວ່າ, “ຖ້າທ່ານໃຫ້ຂ້າພະເຈົ້າກັບຄືນບ້ານເພື່ອທຳເສິກກັບຄົນອັມ
ໂມນ ແລະຖ້າພຣະຜູ້ເປັນເຈົ້າຊົງມອບເຂົາໄວ້ໃນມືຂ້າພະເຈົ້າ ຂ້າພະເຈົ້າຈະໄດ້ເປັນຫົວໜ້າຂອງທ່ານ”
10 ພວກຜູ້ໃຫຍ່ຂອງກີເລອາດຈຶ່ງຕອບເຢັຟທາວ່າ, “ພຣະຜູ້ເປັນເຈົ້າຊົງເປັນພຍານລະຫວ່າງເຮົາ ເຮົາຈະກະທຳ
ຕາມທີ່ທ່ານສັ່ງທຸກປະການ”
11 ເຢັຟທາຈຶ່ງໄປກັບພວກຜູ້ໃຫຍ່ຂອງກີເລອາດ ແລະປະຊາຊົນກໍຕັ້ງທ່ານໃຫ້ເປັນຫົວໜ້າ ແລະເປັນປະມຸກຂອງ
ເຂົາ ແລ້ວ ເຢັຟທາກໍກ່າວຄຳທີ່ຕົກລົງກັນທັງສິ້ນຕໍ່ພຣະຜູ້ເປັນເຈົ້າທີ່ເມືອງມີສປາ
12 ເຢັຟທາຈຶ່ງສົ່ງຜູ້ນຳຂ່າວໄປຍັງກະສັດຄົນອັມໂມນຖາມວ່າ, “ທ່ານມີເຣື່ອງຫຍັງກັບຂ້າພະເຈົ້າ ທ່ານຈຶ່ງຍົກມາຕໍ່
ສູ້ກັບແຜ່ນດິນຂອງຂ້າພະເຈົ້າ”
13 ກະສັດຄົນອັມໂມນຕອບຜູ້ນຳຂ່າວຂອງເຢັຟທາວ່າ, “ເພາະວ່າເມື່ອອິສຣາເອນອອກມາຈາກເອຢິບໄດ້ຍຶດ
ແຜ່ນດິນຂອງເຮົາໄປ ຕັ້ງແຕ່ແມ່ນ້ຳອາຣ໌ໂນນເຖິງແມ່ນ້ຳຢັບໂບກ ແລະເຖິງແມ່ນ້ຳຈໍແດນ ບັດນີ້ຂໍຄືນເມືອງ
ເຫລົ່ານັ້ນເສັຽໂດຍດີ”
14 ເຢັຟທາກໍສົ່ງຜູ້ນຳຂ່າວໄປຫາຄົນອັມໂມນອີກ
15 ໃຫ້ກ່າວວ່າ, “ເຢັຟທາກ່າວດັ່ງນີ້ວ່າ ອິສຣາເອນບໍ່ໄດ້ຍຶດແຜ່ນດິນຂອງໂມອາບ ຫລືແຜ່ນດິນຂອງຄົນອັມໂມນ
16 ແຕ່ເມື່ອອິສຣາເອນອອກຈາກເອຢິບ ເຂົາໄດ້ເດີນໄປທາງຖິ່ນກັນດານເຖິງທະເລແດງ ແລະມາເຖິງກາເດສ
17 ອິສຣາເອນຈຶ່ງສົ່ງຜູ້ນຳຂ່າວໄປຍັງກະສັດເອໂດມກ່າວວ່າ, “ຂ້າພະເຈົ້າຂໍອະນຸຍາດຍົກຜ່ານເມືອງຂອງທ່ານ
ໄປ” ແຕ່ກະສັດເອໂດມບໍ່ຟັງ ແລະກໍໄດ້ສົ່ງຄຳຂໍເຊັ່ນດຽວກັນໄປຍັງກະສັດເມືອງໂມອາບເໝືອນກັນ ແຕ່ທ່ານ
ກໍບໍ່ໄດ້ຕົກລົງ ດັ່ງນັ້ນອິສຣາເອນຈຶ່ງຄ້າງຢູ່ທີ່ກາເດສ

18 ແລ້ວເຂົາກໍເດີນໄປໃນຖິ່ນກັນດານອ້ອມແຜ່ນດິນໂມອາບ ແລະມາທາງດ້ານຕາເວັນອອກຂອງແຜ່ນດິນໂມ
ອາບ ແລະຕັ້ງຄ້າຍຢູ່ທີ່ຟາກເຫນືອຂອງແມ່ນ້ຳອາຣົໂນນ ແຕ່ເຂົາບໍ່ໄດ້ເຂົ້າໄປໃນເຂດແດນຂອງໂມອາບ ເພາະ
ວ່າແມ່ນ້ຳອາຣົໂນນເປັນເຂດແດນຂອງໂມອາບ
19 ອິສຣາເອນຈຶ່ງສົ່ງຜູ້ນຳຂ່າວໄປຫາຊີໂຮນກະສັດຄົນອາໂມຣິດ ກະສັດກຸງເຮສໂບນ ອິສຣາເອນຮຽນທ່ານວ່າ "ຂໍ
ໃຫ້ພວກຂ້າພະເຈົ້າໄດ້ຜ່ານແຜ່ນດິນຂອງທ່ານໄປຍັງປະເທດຂອງຂ້າພະເຈົ້າ"
20 ແຕ່ຊີໂຮນບໍ່ວາງໃຈທີ່ຈະໃຫ້ອິສຣາເອນໄດ້ຜ່ານເຂດແດນຂອງຕົນ ສະນັ້ນຊີໂຮນຈຶ່ງໄດ້ຮວບຮວມປະຊາຊົນ
ຂອງທ່ານ ຕັ້ງຄ້າຍຢູ່ທີ່ຢາຮັສ ແລະສູ້ຮົບກັບອິສຣາເອນ
21 ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນຊົງມອບຊີໂຮນ ແລະປະຊາຊົນທັງຫມົດຂອງທ່ານໄວ້ໃນມືອິສຣາ
ເອນ ເຂົາກໍຜ່າຍແພ້ໄປ ອິສຣາເອນຈຶ່ງຍຶດຄອງແຜ່ນດິນຂອງຄົນອາໂມຣິດຊຶ່ງເປັນຊາວເມືອງນັ້ນ
22 ເຂົາຍຶດເຂດແດນຂອງຄົນອາໂມຣິດຕັ້ງແຕ່ແມ່ນ້ຳອາຣົໂນນເຖິງແມ່ນ້ຳຢັບໂບກ ແລະຕັ້ງແຕ່ຖິ່ນກັນດານເຖິງ
ແມ່ນ້ຳຈໍແດນ
23 ດັ່ງນັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນຈຶ່ງຂັບໄລ່ຄົນອາໂມຣິດອອກເສັຽ ໃຫ້ອິສຣາເອນໄພ່ພົນຂອງ
ພຣະອົງເຂົ້າຍຶດຄອງ ຝ່າຍທ່ານຈະມາຖືເອົາເປັນກຳມະສິດເຊັ່ນນັ້ນຫລື
24 ທ່ານບໍ່ຖືກຳມະສິດສິ່ງຊຶ່ງພຣະເຄໂມສພຣະເຈົ້າຂອງທ່ານມອບໃຫ້ທ່ານຍຶດຄອງດອກຫລື ພຣະຜູ້ເປັນເຈົ້າພຣ
ະເຈົ້າຂອງເຮົາຂັບໄລ່ຜູ້ໃດໄປໃຫ້ພົ້ນຫນ້າເຮົາ ເຮົາກໍຍຶດຄອງທີ່ຂອງຜູ້ນັ້ນ
25 ຝ່າຍທ່ານຈະດີກວ່າບາລາກບຸດຂອງຊິບໂປຣ໌ກະສັດເມືອງໂມອາບຫລື ທ່ານເຄີຍແຂ່ງຂັນກັບອິສຣາເອນຫລື
ທ່ານເຄີຍຕໍ່ສູ້ກັບເຂົາທັງຫລາຍຫລື
26 ເມື່ອອິສຣາເອນອາໄສຢູ່ໃນກຸງເຮສໂບນແລະຊົນນະບົດຂອງກຸງນັ້ນ ແລະໃນເມືອງອາໂຣເອີ ແລະຊົນນະບົດ
ໃນເມືອງນັ້ນ ແລະຢູ່ໃນບັນດາຫົວເມືອງທີ່ຕັ້ງຢູ່ຕາມຝັ່ງແມ່ນ້ຳອາຣົໂນນເຖິງສາມຮ້ອຍປີ ເປັນຫຍັງທ່ານບໍ່ເອົ້ນ
ຄືນເສັຽພາຍໃນເວລານັ້ນ
27 ສະນັ້ນຂ້າພະເຈົ້າຈຶ່ງບໍ່ໄດ້ກະທຳຄວາມຜິດຕໍ່ທ່ານ ແຕ່ທ່ານໄດ້ກະທຳຄວາມຜິດຕໍ່ຂ້າພະເຈົ້າໃນການທີ່ທຳສົງ
ຄາມກັບຂ້າພະເຈົ້າ ຂໍພຣະຜູ້ເປັນເຈົ້າຊົງເປັນຜູ້ພິພາກສາລະຫວ່າງຄົນອິສຣາເອນແລະຄົນອັມໂມນໃນວັນນີ້"
28 ແຕ່ກະສັດຂອງຄົນອັມໂມນບໍ່ໄດ້ເຊື່ອຟັງໃນຄຳຂອງເຢັຟທາຊຶ່ງທ່ານສົ່ງໄປໃຫ້

Jephthah's Vow

29 ພຣະວິນຍານຂອງພຣະຜູ້ເປັນເຈົ້າກໍມາສະຖິດຢູ່ກັບເຢັຟທາ ທ່ານຈຶ່ງຍົກຜ່ານກິເລອາດ ແລະມານັສເຊ ແລະ
ຜ່ານມິສປາແຫ່ງກິເລອາດ ແລະຈາກມິສປາແຫ່ງກິເລອາດ ທ່ານຍົກຜ່ານຕໍ່ໄປເຖິງທີ່ຄົນອັມໂມນ
30 ແລະເຢັຟທາບົນຕໍ່ພຣະຜູ້ເປັນເຈົ້າວ່າ, "ຖ້າພຣະອົງຊົງມອບຄົນອັມໂມນໄວ້ໃນມືຂອງຂ້າພຣະອົງແລ້ວ
31 ຜູ້ໃດທີ່ອອກມາຈາກປະຕູເຮືອນຂອງຂ້າພຣະອົງເພື່ອຕ້ອນຮັບຂ້າພຣະອົງເມື່ອຂ້າພຣະອົງມີໄຊກັບມາຈາກຄົນ
ອັມໂມນນັ້ນ ຜູ້ນັ້ນຈະຕ້ອງເປັນຂອງຂອງພຣະຜູ້ເປັນເຈົ້າ ແລະຂ້າພຣະອົງຈະຖວາຍຜູ້ນັ້ນເປັນເຄື່ອງເຜົາບູຊາ"
32 ແລ້ວເຢັຟທາຈຶ່ງຍົກຂ້າມໄປສູ້ຮົບກັບຄົນອັມໂມນ ແລະພຣະຜູ້ເປັນເຈົ້າຊົງມອບເຂົາໄວ້ໃນມືຂອງທ່ານ
33 ທ່ານໄດ້ປະຫານເຂົາຈາກອາໂຣເອີຈົນເຖິງທີ່ໃກ້ໆເມືອງມິນນິທຮ່ວມຊາວຫົວເມືອງ ແລະໄກໄປຈົນເຖິງອາ
ເບນເກຣາມິມ ຜູ້ຄົນລົ້ມຕາຍຫລາຍ ຄົນອັມໂມນຈຶ່ງຫມົດອຳນາດຢູ່ໃຕ້ຄົນອິສຣາເອນ

**ບຸດສາວຂອງເຢັຟທາ**

Jephthah's Daughter

34 ແລ້ວເຢັຟທາກໍກັບມາບ້ານທີ່ມິສປາ ເບິ່ງແມ່, ບຸດຕຣີຂອງທ່ານຟ້ອນລຳອອກມາຕ້ອນຮັບທ່ານ ນາງເປັນບຸດຕ
ຣີຄົນດຽວ ນອກຈາກບຸດຕຣີຄົນນີ້ທ່ານບໍ່ມີບຸດຊາຍແລະບຸດຍິງເລີຍ

35 ເມື່ອທ່ານເຫັນນາງອອກມາແລ້ວ ທ່ານຈຶ່ງຈີກເສື້ອຜ້າຂອງທ່ານກ່າວວ່າ, “ໂອ ລູກເອີຍ ຫົວໃຈພໍ່ແທບຈະແຕກ
ຕາຍແລ້ວ ເປັນຫຍັງຈຶ່ງແມ່ນລູກທີ່ເຮັດໃຫ້ພໍ່ໄດ້ຮັບຄວາມເຈັບປວດເຊັ່ນນີ້ ເພາະພໍ່ໄດ້ອ້າປາກປົນຕໍ່ພຣະຜູ້
ເປັນເຈົ້າໄວ້ ຈະຄືນຄຳກໍບໍ່ໄດ້”
36 ນາງຈຶ່ງເວົ້າກັບພໍ່ວ່າ, “ພໍ່ເອີຍ ເມື່ອພໍ່ອອກປາກສັນຍາກັບພຣະຜູ້ເປັນເຈົ້າໄວ້ຢ່າງໃດ ຂໍພໍ່ກະທຳກັບຂ້ານ້ອຍ
ຢ່າງນັ້ນເຖີດ ເພາະພຣະຜູ້ເປັນເຈົ້າໄດ້ຊິງແກ້ແຄ້ນຄົນອັມໂມນສັດຕຣູເພື່ອພໍ່ແລ້ວ”
37 ນາງເວົ້າກັບບິດາຂອງນາງວ່າ, “ຂໍໃຫ້ຂ້ານ້ອຍຢ່າງນີ້ເຖີດ ຂໍປ່ອຍຂ້ານ້ອຍໄວ້ສອງເດືອນ ຂ້ານ້ອຍຈະໄດ້ອອກ
ຈາກບ້ານແລະລົງໄປເທິງພູ ຮ້ອງໄຫ້ຄໍ່າຄວນເຖິງຄວາມເປັນພົມມະຈາຣີຂອງຂ້ານ້ອຍ ຂ້ານ້ອຍກັບໝູ່ເພື່ອນ
ຂອງຂ້ານ້ອຍ”
38 ທ່ານຈຶ່ງຕອບວ່າ, “ໄປເຖີດ” ແລະທ່ານກໍປ່ອຍນາງໄປສອງເດືອນ ນາງກໍອອກໄປ ນາງແລະພວກໝູ່ເພື່ອນ
ຂອງນາງ ແລ້ວຮ້ອງໄຫ້ຄໍ່າຄວນເຖິງຄວາມເປັນພົມມະຈາຣີຂອງນາງສອງເດືອນ
39 ຢູ່ມາເມື່ອຄົບສອງເດືອນ ນາງກໍກັບມາຫາບິດາຂອງນາງ ແລະທ່ານກໍກະທຳກັບນາງຕາມທີ່ໄດ້ບົນໄວ້ ນາງຍັງ
ບໍ່ເຄີຍສົມສູ່ກັບຊາຍໃດເລີຍ
40 ແລະກໍເປັນທັມນຽມໃນອິສຣາເອນທີ່ບຸດສາວຊາວອິສຣາເອນໄປຮ້ອງໄຫ້ໄວ້ທຸກໃຫ້ບຸດຕຣີຂອງເຢັຟທາຄົນກີ
ເລອາດປີລະສີ່ວັນ

## 12 ເຢັຟທາແລະຄົນເອຟຣາອິມ

Intertribal Dissension

1 ຝ່າຍຄົນເອຟຣາອິມຖືກເອີ້ນໃຫ້ຈັບອາວຸດຂ້າມໄປເຖິງຊາໂຟນ ເວົ້າກັບເຢັຟທາວ່າ, “ເຫດໃດທ່ານຍົກຂ້າມໄປ
ຣົບຄົນອັມໂມນ ແຕ່ບໍ່ເອີ້ນເຮົາໄປນຳ ເຮົາຈະຈູດໄຟເຜົາເຮືອນທັບທ່ານເສັຽ”

2 ເຢັຟທາຈຶ່ງຕອບເຂົາວ່າ, “ຂ້າພະເຈົ້າກັບປະຊາຊົນເຮັດການເສິກໃຫຍ່ກັບພວກອັມໂມນ ເມື່ອຂ້າພະເຈົ້າເອີ້ນ
ທ່ານໃຫ້ຊ່ອຍທ່ານບໍ່ໄດ້ຊ່ອຍເຮົາໃຫ້ພົ້ນມືເຂົາ

3 ເມື່ອຂ້າພະເຈົ້າເຫັນວ່າທ່ານຈະບໍ່ຊ່ອຍຂ້າພະເຈົ້າແລ້ວ ຂ້າພະເຈົ້າກໍສ່ຽງຊີວິດຂອງຂ້າພະເຈົ້າຂ້າມໄປຣົບກັບ
ຄົນອັມໂມນ ແລະພຣະຜູ້ເປັນເຈົ້າຊົງມອບເຂົາໄວ້ໃນມືຂອງຂ້າພະເຈົ້າ ວັນນີ້ທ່ານຈະຂຶ້ນມາທຳເສິກກັບຂ້າ
ພະເຈົ້າດ້ວຍເຫດອັນໃດ”

4 ເຢັຟທາຈຶ່ງຮວບຮວມຊາວກີເລອາດສູ້ຣົບກັບຄົນເອຟຣາອິມ ຄົນກີເລອາດກໍປະຫານຄົນເອຟຣາອິມ ເພາະເຂົາ
ກ່າວວ່າ, “ເຈົ້າຊາວກີເລອາດ ເຈົ້າເປັນຄົນຫລົບໜີຂອງຊາວເອຟຣາອິມຖ້າມກາງຄົນເອຟຣາອິມແລະມານັສ
ເຊ”

5 ຊາວກີເລອາດກໍເຂົ້າຍຶດທ່າຂ້າມແມ່ນ້ຳຈໍແດນໄວ້ບໍ່ໃຫ້ຄົນເອຟຣາອິມຂ້າມ ເມື່ອຄົນເອຟຣາອິມທີ່ຫລົບໜີ
ຄົນໃດມາບອກວ່າ, “ຂໍໃຫ້ຂ້າມໄປແດ່” ຄົນກີເລອາດຈະຖາມເຂົາວ່າ, “ເຈົ້າເປັນຄົນເອຟຣາອິມບໍ” ເມື່ອເຂົາ
ຕອບວ່າ, “ບໍ່”

6 ເຂົາຈະບອກວ່າ, “ຈົ່ງເວົ້າຄຳວ່າ ຊິບໂບເລທ” ຄົນນັ້ນຈະວ່າ “ຊີບໂບເລທ” ເພາະຄົນເອຟຣາອິມຜັນສຽງບໍ່ຖືກ
ຕ້ອງ ເຂົາຈຶ່ງຈັບຄົນນັ້ນແລະຂ້າເສັຽທີ່ທ່າຂ້າມ ເມື່ອນັ້ນມີຄົນເອຟຣາອິມຕາຍສີ່ຫມື່ນສອງພັນຄົນ

7 ເຢັຟທາປົກຄອງອິສຣາເອນຢູ່ຫົກປີແລ້ວ ເຢັຟທາຊາວກີເລອາດກໍເສັຽຊີວິດ ແລະຖືກຝັງໄວ້ໃນຫົວເມືອງນຶ່ງໃນ
ກີເລອາດ

**ອິບຊານ ເອໂລນ ແລະອັບໂດນ**

Ibzan, Elon, and Abdon

8 ຕໍ່ຈາກເຢັຟທາມາຄື ອິບຊານແຫ່ງເບັດເລເຮັມໄດ້ປົກຄອງອິສຣາເອນ

9 ທ່ານມີບຸດຊາຍສາມສິບຄົນ ແລະບຸດສາວສາມສິບຄົນທ່ານໃຫ້ແຕ່ງງານກັບຄົນນອກເຜົ່າຂອງທ່ານ ແລະທ່ານ
ນຳບຸດສາວສາມສິບຄົນຂອງຄົນນອກເຜົ່າມາໃຫ້ແກ່ບຸດຊາຍຂອງທ່ານ ທ່ານປົກຄອງອິສຣາເອນຢູ່ເຈັດປີ
10 ແລ້ວອິບຊານກໍເສັຽຊີວິດ ຖືກຝັງໄວ້ທີ່ເບັດເລເຮັມ
11 ຕໍ່ຈາກທ່ານມາ ເອໂລນຄົນເຊບູລູນປົກຄອງອິສຣາເອນ ແລະທ່ານປົກຄອງອິສຣາເອນສິບປີ
12 ແລ້ວເອໂລນຄົນເຊບູລູນກໍເສັຽຊີວິດ ແລະຖືກຝັງໄວ້ທີ່ອັຍຢາໂລນໃນເຂດແດນຂອງເຜົ່າເຊບູລູນ
13 ຕໍ່ຈາກທ່ານມາ ອັບໂດນບຸດຮີນເລນຊາວປີຣາໂທນປົກຄອງອິສຣາເອນ
14 ທ່ານມີບຸດຊາຍສີ່ສິບຄົນ ແລະຫລານຊາຍສາມສິບຄົນ ຂີ່ລໍເຈັດສິບໂຕ ທ່ານປົກຄອງອິສຣາເອນຢູ່ແປດປີ
15 ແລ້ວອັບໂດນບຸດຮີນເລນຊາວປີຣາໂທນກໍເສັຽຊີວິດຖືກຝັງໄວ້ທີ່ປີຣາໂທນໃນເຂດແດນຂອງເອຟຣາອິມໃນພູ
ດອຍຂອງຄົນອາມາເລກ

## 13 ກຳເນີດຂອງແຊມຊັນ

The Birth of Samson

(ຈຊບ 6:1-21)

1 ພວກອິສຣາເອນໄດ້ທຳບາບຕໍ່ສູ້ພຣະຜູ້ເປັນເຈົ້າອີກ ພຣະອົງຈຶ່ງຊົງໃຫ້ພວກເຂົາຢູ່ໃຕ້ອຳນາດຂອງພວກຟີລິສ
ຕິນເປັນເວລາສີ່ສິບປີ
2 ມີຊາຍຄົນນຶ່ງຊື່ ມາໂນອາ ເຂົາມາຈາກເມືອງໂຊຣາ ເປັນຄົນໃນຕະກູນດານ ສ່ວນເມັຽຂອງເຂົານັ້ນເປັນຄົນບໍ່ມີ
ບຸດ
3 ທູດຂອງພຣະຜູ້ເປັນເຈົ້າຈຶ່ງປາກົດຕໍ່ນາງ ແລະເວົ້າວ່າ, “ເຈົ້າເປັນຄົນບໍ່ມີບຸດ ແຕ່ວ່າດຽວນີ້ເຈົ້າຈະຖືພາ ຈະໄດ້
ບຸດຊາຍ
4 ຈົ່ງລະວັງຢ່າດື່ມນ້ຳອະງຸ່ນ ຫລືເຫລົ້າ ແລະຢ່າກິນອາຫານທີ່ຫວງຫ້າມ
5 ເພາະວ່າເຈົ້າຈະຖືພາ ແລະຈະໄດ້ບຸດຊາຍ ນັບແຕ່ມື້ບຸດຊາຍເຈົ້າເກີດມາ ເຂົາຈະເປັນນາຊີຣີທີ່ອຸທິດຕົວແດ່ພ
ຣະເຈົ້າ ສະນັ້ນ ເຈົ້າຢ່າໄດ້ຕັດຜົມໃຫ້ເຂົາຈັກເທື່ອ ເຂົາຈະເປັນຄົນເລີ້ມຊ່ອຍກູ້ພວກອິສຣາເອນໃຫ້ພົ້ນຈາກ
ເງື້ອມມືຂອງພວກຟີລິສຕິນ”
6 ຄັນແລ້ວ ຍິງຄົນນັ້ນກໍໄປບອກຜົວຂອງຕົນວ່າ, “ຄົນຂອງພຣະເຈົ້າໄດ້ມາຫາຂ້ອຍ ທ່ານເປັນຫນ້າຢ້ານດັ່ງທູດ
ຂອງພຣະເຈົ້າ ຂ້ອຍເອງກໍບໍ່ໄດ້ຖາມເລີຍວ່າທ່ານມາຈາກໃສ ແລະທ່ານກໍບໍ່ໄດ້ບອກຊື່ຂອງທ່ານໃຫ້ຂ້ອຍຮູ້ຈັກ
7 ແຕ່ທ່ານໄດ້ບອກຂ້ອຍວ່າ ຂ້ອຍຈະຕ້ອງຖືພາແລະຈະໄດ້ບຸດຊາຍ ທ່ານຍັງໄດ້ບອກຂ້ອຍບໍ່ໃຫ້ດື່ມນ້ຳອະງຸ່ນ
ຫລືເຫລົ້າ ແລະຢ່າກິນອາຫານທີ່ຫວງຫ້າມ ເພາະເດັກນ້ອຍນັ້ນຈະເປັນຄົນນາຊີຣີທີ່ອຸທິດຕົວແດ່ພຣະເຈົ້າຕ
ລອດຊົ່ວຊີວິດຂອງເຂົາ”
8 ແລ້ວມາໂນອາກໍອ້ອນວອນຕໍ່ພຣະຜູ້ເປັນເຈົ້າວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂຜດສົ່ງຄົນຂອງພຣະອົງກັບ
ຄືນມາຫາພວກຂ້າພຣະອົງອີກ ແລະຂໍຊົງບອກພວກຂ້າພຣະອົງວ່າຈະທຳຢ່າງໃດກັບເດັກທີ່ຈະເກີດມານັ້ນ”
9 ສ່ວນພຣະເຈົ້າກໍຊົງກະທຳຕາມຄຳທີ່ມາໂນອາຂໍຮ້ອງ ຄືທູດຂອງພຣະອົງໄດ້ກັບຄືນມາຫາຍິງນັ້ນໃນຂນະທີ່
ນາງກຳລັງນັ່ງຢູ່ໃນທົ່ງນາ ແຕ່ໃນເວລານັ້ນ ມາໂນອາຜູ້ເປັນຜົວບໍ່ໄດ້ຢູ່ທີ່ນັ້ນນຳນາງ
10 ດັ່ງນັ້ນ ນາງຈຶ່ງແລ່ນໄປບອກຜົວຂອງນາງວ່າ, “ນີ້ແຫລະ ຜູ້ທີ່ມາຫາຂ້ອຍມື້ກ່ອນນັ້ນໄດ້ປາກົດຕໍ່ຂ້ອຍອີກ
ແລ້ວ”
11 ມາໂນອາຈຶ່ງລຸກຂຶ້ນຕາມເມັຽໄປ ເຂົາໄດ້ໄປຫາຊາຍຄົນນັ້ນ ແລະຖາມວ່າ, “ແມ່ນທ່ານນີ້ບໍ ທີ່ເປັນຜູ້ເວົ້າກັບຍິງ
ຄົນນີ້ຫລື” ຊາຍຄົນນັ້ນກໍຕອບວ່າ, “ແມ່ນແລ້ວ”
12 ມາໂນອາຈຶ່ງເວົ້າວ່າ, “ເມື່ອຄຳທີ່ທ່ານໄດ້ເວົ້ານັ້ນກາຍເປັນຄວາມຈິງແລ້ວ ເດັກນັ້ນຈະຕ້ອງປະພຶດຢ່າງໃດ
ແລະຈະເຮັດຫຍັງ”

13 ທູດຂອງພຣະຜູ້ເປັນເຈົ້າໄດ້ຕອບມາໂນອາວ່າ, “ເມັຽຂອງເຈົ້າຕ້ອງທຳທຸກຢ່າງຕາມທີ່ເຮົາໄດ້ບອກນາງນັ້ນຢ່າງ
ແນ່ນອນ
14 ນາງບໍ່ຕ້ອງດື່ມນໍ້າອະງຸ່ນ ຫລືເຫລົ້າ ແລະຢ່າກິນອາຫານທີ່ຫວງຫ້າມ ນາງຕ້ອງທຳທຸກສິ່ງຕາມທີ່ເຮົາໄດ້ບອກ
ນາງແລ້ວ”
15 ເນື່ອງຈາກມາໂນອາບໍ່ຮູ້ຈັກວ່າແມ່ນທູດຂອງພຣະຜູ້ເປັນເຈົ້າ ເຂົາຈຶ່ງເວົ້າກັບພຣະອົງວ່າ, “ກະລຸນາຢູ່ນີ້ກ່ອນ ຂໍ
ໃຫ້ຂ້າພະເຈົ້າທັງສອງເອົາແບ້ນ້ອຍມາຈັດແຈ່ງອາຫານໃຫ້ທ່ານຮັບປະທານເສັຽກ່ອນ”
16 ແຕ່ທູດອົງນັ້ນເວົ້າຕໍ່ເຂົາວ່າ, “ ຖ້າວ່າເຮົາຢູ່ນີ້ ເຮົາກໍຈະບໍ່ກິນອາຫານຂອງເຈົ້າ ແຕ່ຖ້າເຈົ້າຢາກຈັດແຈ່ງອາຫານ
ຈົ່ງເອົາແບ້ນັ້ນເຜົາຖວາຍບູຊາແດ່ພຣະຜູ້ເປັນເຈົ້າ”
17 ມາໂນອາຈຶ່ງເວົ້າຕໍ່ທູດອົງນັ້ນວ່າ, “ກະລຸນາບອກຊື່ຂອງທ່ານໃຫ້ເຮົາຮູ້ດ້ວຍ ຫາກເມື່ອໃດຄຳທີ່ທ່ານບອກນີ້
ກາຍເປັນຈິງ ເຮົາຈະໄດ້ຖວາຍກຽດແດ່ທ່ານ”
18 ທູດຂອງພຣະຜູ້ເປັນເຈົ້າໄດ້ຖາມເຂົາວ່າ, “ຊື່ຂອງເຮົາເປັນເຣື່ອງອັສຈັນ ເຈົ້າຢາກຮູ້ຈັກເຮັດຫຍັງ”
19 ແລ້ວມາໂນອາໄດ້ເອົາແບ້ຫນຸ່ມກັບເມັດເຂົ້າໃສ່ເທິງແທ່ນບູຊາຫີນຖວາຍແດ່ພຣະຜູ້ເປັນເຈົ້າຜູ້ຊົງກະທຳການອັ
ສຈັນ
20 ໃນຂນະທີ່ແປວໄຟກຳລັງລຸກຂຶ້ນຈາກແທ່ນບູຊາ ມາໂນອາແລະເມັຽກໍເຫັນທູດຂອງພຣະຜູ້ເປັນເຈົ້າຂຶ້ນໄປສູ່
ສວັນໃນແປວໄຟນັ້ນ ພວກເຂົາຈຶ່ງພາກັນຫມູບລົງດິນ
21 ມາໂນອາຮູ້ວ່າຊາຍນັ້ນແມ່ນທູດຂອງພຣະຜູ້ເປັນເຈົ້າແທ້ ຫລັງຈາກນັ້ນ ມາໂນອາກັບເມັຽຂອງເຂົາກໍບໍ່ເຫັນທູດ
ຂອງພຣະຜູ້ເປັນເຈົ້າອີກຕໍ່ໄປ
22 ແລ້ວມາໂນອາໄດ້ເວົ້າຕໍ່ເມັຽຂອງເຂົາວ່າ, “ພວກເຮົາຈະຕ້ອງຕາຍ ເພາະພວກເຮົາໄດ້ເຫັນພຣະເຈົ້າ”
23 ແຕ່ເມັຽຂອງເຂົາຕອບວ່າ, “ຖ້າພຣະຜູ້ເປັນເຈົ້າຊົງຕ້ອງການຂ້າພວກເຮົາ ພຣະອົງຄົງບໍ່ຍອມຮັບເອົາເຄື່ອງບູຊາ
ຂອງພວກເຮົາ ແລະຄົງບໍ່ໃຫ້ພວກເຮົາເຫັນສິ່ງທັງຫລາຍນີ້ ພຣະອົງຄົງບໍ່ບອກເຣື່ອງຢ່າງນີ້ໃຫ້ພວກເຮົາຮູ້ຈັກ
ດອກ”
24 ຕໍ່ມາ ຍິງຜູ້ນີ້ກໍໄດ້ບຸດຊາຍແລະໃສ່ຊື່ວ່າ ແຊມຊັນ ເດັກນີ້ກໍຈະເຣີນເຕີບໂຕຂຶ້ນ ແລະພຣະຜູ້ເປັນເຈົ້າກໍຊົງອວຍ
ພອນເຂົາ
25 ໃນຂນະທີ່ເຂົາຢູ່ໃນຄ້າຍພັກຊາວດານ ລະຫວ່າງເມືອງໂຊຣາກັບເມືອງເອສຕາໂອນ ພຣະວິນຍານຂອງພຣະຜູ້
ເປັນເຈົ້າໄດ້ຊົງທຳໃຫ້ເຂົາມີຈິດໃຈກະວົນກະວາຍ

## 14 ແຊມຊັນແລະຍິງສາວຊາວຕິມນາ

Samson’s Marriage

1 ແຊມຊັນໄດ້ລົງໄປໃນເມືອງຕິມນາ ໃນເມືອງນີ້ເຂົາສັງເກດເຫັນຍິງສາວຟີລິສຕິນຄົນນຶ່ງ
2 ເຂົາຈຶ່ງກັບຄືນມາເຮືອນແລະເວົ້າສູ່ພໍ່ແມ່ຟັງ “ຂ້ານ້ອຍໄດ້ສັງເກດເຫັນຍິງສາວຊາວຟີລິສຕິນຄົນນຶ່ງຢູ່ໃນເມືອງ
ຕິມນາ ຂ້ານ້ອຍຢາກແຕ່ງງານກັບນາງ ໄປສູ່ຂໍນາງໃຫ້ຂ້ານ້ອຍແດ່”
3 ແຕ່ພໍ່ແມ່ໄດ້ຕອບວ່າ, “ເປັນຫຍັງເຈົ້າຈຶ່ງຢາກໄປເອົາເມັຽຊາວຟີລິສຕິນ ຊຶ່ງພວກທີ່ບໍ່ໄດ້ຮັບພິທີຕັດ ເຈົ້າຊອກຫ
າຜູ້ສາວໃນເຊື້ອສາຍຂອງເຈົ້າເອງ ແລະໃນພວກປະຊາຊົນຂອງພວກເຮົານີ້ບໍ່ມີຊັ້ນບໍ” ແຕ່ແຊມຊັນບອກພໍ່ແມ່
ຂອງເຂົາວ່າ, “ຂ້ານ້ອຍພໍໃຈນຳນາງຜູ້ດຽວເທົ່ານັ້ນ ໄປສູ່ຂໍນາງມາໃຫ້ຂ້ານ້ອຍແດ່”
4 ສ່ວນພໍ່ແມ່ຂອງແຊມຊັນກໍບໍ່ໄດ້ຮູ້ຈັກວ່າ ແມ່ນພຣະຜູ້ເປັນເຈົ້າຊົງນຳພາແຊມຊັນທຳດັ່ງນີ້ ເພາະພຣະອົງຊົງຊ
ອກຫາໂອກາດຕໍ່ສູ້ກັບພວກຟີລິສຕິນຢູ່ ແລະໃນເວລານີ້ພວກອິສຣາເອນກໍຢູ່ໃຕ້ອຳນາດຂອງພວກຟີລິສຕິນ

5 ຕໍ່ມາ ແຊມຊັນໄດ້ລົງໄປເມືອງຕິມນາພ້ອມກັບພໍ່ແມ່ ເມື່ອພວກເຂົາໄປຮອດສວນອະງຸ່ນຂອງເມືອງນັ້ນ ມີສິງ
ໜຸ່ມໂຕນຶ່ງຮ້ອງກໍາຮາບເຂົ້າໃສ່ແຊມຊັນ
6 ແຕ່ພຣະວິນຍານຂອງພຣະຜູ້ເປັນເຈົ້າຊົງບັນດານໃຫ້ແຊມຊັນມີກໍາລັງຈີກສິງໂຕນັ້ນດ້ວຍມືເປົ່າ ເໝືອນດັ່ງ
ຈີກແບ້ໂຕນ້ອຍໆ ແຕ່ທ່ານບໍ່ໄດ້ບອກໃຫ້ພໍ່ແມ່ຮູ້ຈັກສິ່ງທີ່ທ່ານທໍານັ້ນ
7 ຄັນແລ້ວ ທ່ານກໍໄປລົມສາວຜູ້ນັ້ນ ແລະພໍໃຈໃນນາງຫລາຍ
8 ບໍ່ພໍເທົ່າໃດວັນຕໍ່ມາ ແຊມຊັນກໍກັບມາແຕ່ງງານກັບນາງ ໃນເວລານັ້ນທ່ານໄດ້ແວ່ອອກຈາກທາງໄປເບິ່ງ
ຊາກສິງທີ່ທ່ານໄດ້ຂ້ານັ້ນ ທ່ານກໍປະຫລາດໃຈ ເມື່ອໄດ້ເຫັນຮັງເຜິ້ງຢູ່ໃນຊາກສິງນັ້ນ
9 ທ່ານຈຶ່ງບີບເອົານໍ້າເຜິ້ງໃສ່ມືແລະກິນໄປຕາມທາງ ເມື່ອໄປຮອດພໍ່ແມ່ ທ່ານໄດ້ແບ່ງນໍ້າເຜິ້ງນັ້ນໃຫ້ທ່ານກິນນໍາ
ພໍ່ແມ່ຂອງທ່ານກໍກິນ ແຕ່ແຊມຊັນບໍ່ໄດ້ບອກພວກເຂົາເລີຍວ່າ ທ່ານໄດ້ເອົານໍ້າເຜິ້ງນັ້ນມາຈາກຊາກສິງ
10 ແລ້ວພໍ່ຂອງແຊມຊັນໄດ້ໄປບ້ານຂອງຍິງສາວນັ້ນ ແລະແຊມຊັນກໍຈັດການກິນລ້ຽງຂຶ້ນໃນທີ່ນັ້ນຕາມທໍານຽມ
ຂອງພວກຊາຍໜຸ່ມ
11 ເມື່ອພວກຟີລິສຕິນເຫັນທ່ານ ພວກເຂົາກໍເອົາຊາຍໜຸ່ມສາມສິບຄົນໄປຮ່ວມກັບທ່ານ
12 ແຊມຊັນໄດ້ເວົ້າຕໍ່ພວກເຂົາວ່າ, “ຂໍໃຫ້ພວກເຈົ້າທວາຍຈັກຂໍ້ນຶ່ງ ຖ້າພວກເຈົ້າທວາຍຄວາມໝາຍໄດ້ພາຍໃນ
ເຈັດວັນ ກ່ອນພິທີແຕ່ງງານນີ້ສິ້ນສຸດລົງ ຂ້າພະເຈົ້າຈະເອົາຜ້າປູນອນ ແລະເສື້ອຕົວຈົບງາມແນວລະສາມສິບ
ຕົວໃຫ້ແກ່ພວກເຈົ້າ
13 ຄັນຖ້າພວກເຈົ້າບອກບໍ່ໄດ້ ຂໍໃຫ້ພວກເຈົ້ານໍາເອົາສິ່ງຂອງຢ່າງດຽວກັນນີ້ມາໃຫ້ຂ້າພະເຈົ້າ” ພວກເຂົາຈຶ່ງເວົ້າຕໍ່
ແຊມຊັນວ່າ, “ຈົ່ງບອກຄໍາທວາຍນັ້ນມາ”
14 ແຊມຊັນຈຶ່ງເວົ້າວ່າ, “ມີອາຫານກໍເນື່ອງມາຈາກຜູ້ກິນ ມີຂອງອັນຫວານກໍເນື່ອງມາຈາກຜູ້ມີແຮງ“ ສາມວັນຕໍ່
ມາ ພວກເຂົາກໍຍັງຕີຄວາມໝາຍຂອງຄໍາທວາຍນັ້ນບໍ່ໄດ້
15 ໃນວັນທີສີ່ ພວກເຂົາໄດ້ເວົ້າຕໍ່ເມັຍຂອງແຊມຊັນວ່າ, “ຈົ່ງທໍາກົນອຸບາຍໃຫ້ຜົວຂອງເຈົ້າບອກຄວາມໝາຍຂອງ
ຄໍາທວາຍນັ້ນແກ່ພວກເຮົາແດ່ ຖ້າວ່າເຈົ້າບໍ່ຍອມປະຕິບັດ ພວກເຮົາຈະເຜົາເຮືອນຂອງພໍ່ເຈົ້າພ້ອມກັບເຈົ້າ
ດ້ວຍ ເຈົ້າທັງສອງໄດ້ເຊີນພວກເຮົາມາເພື່ອຈະທໍາໃຫ້ພວກເຮົາກາຍເປັນຄົນຈົນແມ່ນບໍ”
16 ເມັຍຂອງແຊມຊັນຈຶ່ງໄປຫາຜົວພ້ອມທັງຮ້ອງໄຫ້ແລະເວົ້າວ່າ, “ເຈົ້າບໍ່ໄດ້ຮັກຂ້ອຍ ເຈົ້າມີແຕ່ຊັງຂ້ອຍເທົ່ານັ້ນ
ເຈົ້າຕັ້ງຄໍາທວາຍໃຫ້ໝູ່ຂອງຂ້ອຍ ແລະບໍ່ໄດ້ບອກຄວາມໝາຍຂອງຄໍາທວາຍນັ້ນໃຫ້ແກ່ຂ້ອຍ” ແຊມຊັນໄດ້
ເວົ້າຕໍ່ເມັຍວ່າ, “ແມ່ນແຕ່ພໍ່ແມ່ຂອງຂ້ອຍກໍຍັງບໍ່ໄດ້ບອກທ່ານ ເຫດໃດຂ້ອຍຈຶ່ງຈະບອກເຈົ້າໄດ້”
17 ເມັຍຂອງແຊມຊັນຈຶ່ງຮ້ອງໄຫ້ອ້ອນເຣື່ອງນີ້ຢູ່ຕລອດເຈັດວັນຂອງການກິນລ້ຽງນັ້ນ ແຕ່ພໍຮອດວັນທີເຈັດ ແຊມ
ຊັນກໍບອກຄໍາຕອບແກ່ນາງ ເພາະວ່ານາງເປັນຄົນຂູ່ຊີຫລາຍ ແລ້ວນາງກໍນໍາເອົາຄໍາຕອບນັ້ນໄປບອກໝູ່ຂອງ
ຕົນ
18 ດັ່ງນັ້ນ ໃນວັນທີເຈັດກ່ອນແຊມຊັນເຂົ້າໄປນອນ ຊາວເມືອງນັ້ນຈຶ່ງເວົ້າຕໍ່ທ່ານວ່າ, “ບໍ່ມີສິ່ງໃດຈະຫວານ
ເໝືອນນໍ້າເຜິ້ງ ແລະບໍ່ມີສິ່ງໃດຈະແຮງກວ່າສິງ” ແຊມຊັນຈຶ່ງຕອບວ່າ, “ຖ້າວ່າພວກເຈົ້າບໍ່ເອົາງົວແມ່ຂອງ
ຂ້ອຍໄປໄຖນາ ພວກເຈົ້າກໍຈະບໍ່ສາມາດຕອບບັນຫານີ້ໄດ້”
19 ແລ້ວພຣະວິນຍານຂອງພຣະຜູ້ເປັນເຈົ້າໄດ້ຊົງບັນດານໃຫ້ແຊມຊັນມີກໍາລັງວັງຊາ ແລະເຂົາໄດ້ລົງໄປໃນເມືອງ
ອັສເກໂລນ ແລ້ວທ່ານໄດ້ຂ້າຍສາມສິບຄົນຢູ່ທີ່ນັ້ນ ພ້ອມທັງໄດ້ຍຶດເອົາເສື້ອຜ້າອັນຈົບງາມຂອງພວກເຂົາ
ທ່ານໄດ້ແຈກເສື້ອຜ້ານັ້ນໃຫ້ແກ່ຜູ້ທີ່ທວາຍໄດ້ ແລ້ວແຊມຊັນກໍກັບຄືນເມືອບ້ານ ແລະມີໃຈຮ້າຍໃນເຫດການທີ່
ເກີດຂຶ້ນນັ້ນ
20 ສ່ວນເມັຍຂອງທ່ານກໍໄດ້ຖືກຍົກໃຫ້ແກ່ເຈົ້າບ່າວປອມ

## 15 ແຊມຊັນຊະນະພວກຟີລິສຕິນ

Samson Defeats the Philistines

1 ຕໍ່ມາຄັ້ງນຶ່ງ ຊຶ່ງເປັນຍາມກ່ຽວເຂົ້າເບລ ແຊມຊັນໄດ້ໄປຢາມເມັຽ ແລະໄດ້ເອົາແບ້ນ້ອຍໂຕນຶ່ງໄປໃຫ້ນາງດ້ວຍ
ແຊມຊັນໄດ້ເວົ້າຕໍ່ພໍ່ເຖົ້າວ່າ, “ຂ້າພະເຈົ້າຊິໄປຫ້ອງເມັຽຂ້າພະເຈົ້າ” ແຕ່ພໍ່ເຖົ້າບໍ່ອະນຸຍາດໃຫ້ທ່ານໄປ
2 ພໍ່ເຖົ້າໄດ້ເວົ້າຕໍ່ແຊມຊັນວ່າ, “ເຮົາຄິດວ່າເຈົ້າຊັງນາງແລ້ວ ເຮົາຈຶ່ງຍົກນາງໃຫ້ແກ່ຫມູ່ຂອງເຈົ້າ ເຈົ້າເອົານ້ອງ
ສາວນາງແທນສາ ເພາະນ້ອງຂອງນາງກໍງາມກວ່ານາງອີກ”
3 ແຊມຊັນໄດ້ເວົ້າວ່າ, “ໃນເທື່ອນີ້ຂ້າພະເຈົ້າບໍ່ມີຄວາມຜິດ ຖ້າຂ້າພະເຈົ້າທຳຮ້າຍໃຫ້ພວກຟີລິສຕິນ”
4 ດັ່ງນັ້ນ ທ່ານຈຶ່ງໄປຈັບເອົາຫມາຈອກມາສາມຮ້ອຍໂຕ ແລ້ວມັດຫາງຂອງມັນຜູກຕິດກັນເປັນຄູ່ ແລະມັດກະ
ບອງໃສ່ນຳດ້ວຍ
5 ແລ້ວທ່ານໄດ້ໄຕ້ກະບອງ ແລະປ່ອຍຝູງຫມາຈອກນັ້ນເຂົ້າໄປໃນນາເຂົ້າເບລຂອງພວກຟີລິສຕິນ ໄຟໄດ້ໄຫມ້ບໍ່
ມີພຽງແຕ່ເຂົ້າເບລທີ່ເກັບກ່ຽວແລ້ວເທົ່ານັ້ນ ແຕ່ໄດ້ໄຫມ້ເຂົ້າເບລທີ່ຍັງຢູ່ໃນທົ່ງນາພ້ອມທັງສວນຫມາກກອກ
ແລະສວນອະງຸ່ນອີກ
6 ພວກຟີລິສຕິນຈຶ່ງຖາມກັນວ່າ, “ແມ່ນໃຜເປັນຜູ້ເຮັດດັ່ງນີ້” ແລ້ວພວກເຂົາກໍຮູ້ວ່າແມ່ນແຊມຊັນເປັນຜູ້ທຳ ເພາະ
ພໍ່ເຖົ້າຂອງທ່ານທີ່ເມືອງຕິມນາໄດ້ຍົກເມັຽຂອງແຊມຊັນໃຫ້ແກ່ຫມູ່ຂອງທ່ານ ພວກເຂົາຈຶ່ງໄປເຜົາຍິງຄົນນີ້ພ້ອ
ມທັງເຮືອນພໍ່ຂອງນາງ
7 ແຊມຊັນໄດ້ເວົ້າຕໍ່ພວກເຂົາວ່າ, “ເມື່ອພວກເຈົ້າທຳຢ່າງນີ້ຂ້າພະເຈົ້າຂໍສາບານວ່າ ຂ້າພະເຈົ້າຈະບໍ່ຍອມຈົນ
ກວ່າຂ້າພະເຈົ້າໄດ້ທຳຕອບຄືນ”
8 ແຊມຊັນໄດ້ຕໍ່ສູ້ເຂົາຢ່າງແຂງແຮງ ແລະໄດ້ຂ້າພວກເຂົາຫລາຍຄົນ ແລ້ວທ່ານກໍຫນີໄປລີ້ຢູ່ໃນຖ້ຳທີ່ຫນ້າຜາເອ
ຕາມ
9 ຕໍ່ມາ ພວກຟີລິສຕິນໄດ້ມາຕັ້ງຄ້າຍພັກຢູ່ໃນເຂດແຂວງຢູດາ ເພື່ອໂຈມຕີເມືອງ ເລຮີ
10 ພວກຢູດາຈຶ່ງຖາມເຂົາວ່າ, “ເປັນຫຍັງພວກເຈົ້າຈຶ່ງມາຮົບເລວກັບພວກເຮົາ” ພວກເຂົາຕອບວ່າ, “ພວກເຮົາມາ
ຈັບແຊມຊັນໄປຂັງຄຸກ ພວກເຮົາຈະທຳຕໍ່ທ່ານເຫມືອນທ່ານໄດ້ທຳຕໍ່ພວກເຮົາ”
11 ແລ້ວຊາວຢູດາສາມພັນຄົນກໍພາກັນໄປຍັງຖ້ຳທີ່ຫນ້າຜາເອຕາມນັ້ນ ແລະເວົ້າຕໍ່ແຊມຊັນວ່າ, “ທ່ານຮູ້ບໍ່ວ່າ
ພວກເຮົາຢູ່ໃຕ້ອຳນາດຂອງພວກຟີລິສຕິນ ເປັນຫຍັງທ່ານຈຶ່ງທຳຕໍ່ພວກເຮົາແບບນີ້” ແຊມຊັນກໍຕອບວ່າ, “ຂ້າ
ພະເຈົ້າທຳຕໍ່ພວກຟີລິສຕິນກໍຍ້ອນວ່າພວກເຂົາໄດ້ທຳຕໍ່ຂ້າພະເຈົ້າກ່ອນ”
12 ພວກເຂົາຈຶ່ງບອກແຊມຊັນວ່າ, “ພວກເຮົາມານີ້ເພື່ອຈັບມັດເອົາທ່ານສົ່ງໄປໃຫ້ພວກຟີລິສຕິນ” ແຊມຊັນກໍເວົ້າ
ຂຶ້ນວ່າ, “ພວກເຈົ້າສາບານກັບຂ້ອຍກ່ອນວ່າ ພວກເຈົ້າຈະບໍ່ທຳຮ້າຍຂ້ອຍ”
13 ພວກເຂົາໄດ້ຕອບວ່າ, “ພວກເຮົາຂໍສາບານວ່າຈະບໍ່ທຳຮ້າຍທ່ານ ພຽງແຕ່ມາມັດທ່ານສົ່ງໄປໃຫ້ພວກເຂົາເທົ່າ
ນັ້ນ” ແລ້ວພວກເຂົາກໍມັດແຊມຊັນດ້ວຍເຊືອກໃຫມ່ສອງເສັ້ນ ແລະພາທ່ານໄປຈາກຫນ້າຜານັ້ນ
14 ເມື່ອມາເຖິງເມືອງເລຮີ ພວກຟີລິສຕິນກໍແລ່ນມາພ້ອມທັງຮ້ອງສຽງດັງໃສ່ທ່ານ ແຕ່ພຣະວິນຍານຂອງພຣະຜູ້
ເປັນເຈົ້າໄດ້ຊົງບັນດານໃຫ້ທ່ານມີແຮງຂຶ້ນ ແຊມຊັນຈຶ່ງທຸດເຊືອກທີ່ມັດແຂນແລະມືຂອງທ່ານນັ້ນຂາດອອກ
ເຫມືອນກັບວ່າໄຟໄດ້
ໄຫມ້ເສັ້ນດ້າຍ
15 ແລ້ວແຊມຊັນໄດ້ເຫັນກະດູກຄາງລໍທີ່ຍັງໃຫມ່ຢູ່ ທ່ານຈຶ່ງຢື້ມືລົງຈັບເອົາ ແລະໄດ້ໃຊ້ກະດູກຄາງລໍນັ້ນຂ້າພວກ
ຟີລິສຕິນຕາຍໄປນຶ່ງພັນຄົນ
16 ດັ່ງນັ້ນ ແຊມຊັນຈຶ່ງຮ້ອງເພງວ່າ, “ຂ້າພະເຈົ້າໄດ້ຂ້ານຶ່ງພັນຄົນດ້ວຍກະດູກຄາງລໍອັນນີ້ ຂ້າພະເຈົ້າໄດ້ກອງເຂົາ
ໄວ້ເປັນກອງໆ ຍ້ອນກະດູກຄາງລໍອັນນີ້”

17 ຫລັງຈາກນັ້ນ ແຊມຊັນກໍແກວ່ງກະດູກລໍຖິ້ມ ບ່ອນນັ້ນຈຶ່ງມີຊື່ເອີ້ນວ່າ ພູກະດູກຄາງລໍ (ຣາມັທເລຮີ
18 ຕໍ່ມາ ແຊມຊັນໄດ້ຫິວນໍ້າຫລາຍ ທ່ານຈຶ່ງຮ້ອງທູນຕໍ່ພຣະຜູ້ເປັນເຈົ້າວ່າ, “ພຣະອົງຊົງປະທານໄຊຊະນະອັນຍິ່ງ
ໃຫຍ່ໃຫ້ແກ່ຂ້າພຣະອົງ ດຽວນີ້ ຂ້າພຣະອົງຫິວນໍ້າຈະຕາຍຢູ່ແລ້ວ ແລະຈະໃຫ້ຂ້າພຣະອົງຕົກຢູ່ໃນກຳມືຂອງ
ພວກຟີລິສຕິນທີ່ຍັງບໍ່ທັນໄດ້ຮັບພິທີຕັດຢ່າງນັ້ນບໍ”
19 ຄັນແລ້ວພຣະເຈົ້າກໍຊົງບັນດານໃຫ້ມີນໍ້າອອກບໍ່ໃນຂຸມນຶ່ງທີ່ເມືອງເລຮີ ແຊມຊັນຈຶ່ງດື່ມແລະຮູ້ສຶກສະບາຍໃຈ
ຫລາຍກວ່າເກົ່າ ດັ່ງນັ້ນທ່ານຈຶ່ງເອີ້ນບໍ່ນໍ້ານັ້ນວ່າ ເອນຮັກໂກເຣ ຊຶ່ງຍັງມີຢູ່ໃນເມືອງ ເລຮີ ຈົນເທົ່າທຸກວັນນີ້
20 ໃນລະຫວ່າງພວກອິສຣາເອນ ຢູ່ໃຕ້ອຳນາດຂອງພວກຟີລິສຕິນນັ້ນ ແຊມຊັນໄດ້ປົກຄອງພວກອິສຣາເອນຢູ່
ເປັນເວລາຊາວປີ

## 16 ແຊມຊັນ ແລະເດລີລາ

Samson and Delilah

1 ຕໍ່ມາ ແຊມຊັນໄດ້ຈາກເມືອງ ເລຮີໄປຍັງເມືອງກາຊາ ຢູ່ໃນເມືອງນີ້ທ່ານໄດ້ພົບກັບຍິງໂສເພນີຄົນນຶ່ງ ທ່ານຈຶ່ງ
ເຂົ້າໄປນອນນຳຍິງນັ້ນ
2 ເມື່ອຊາວກາຊາຮູ້ວ່າແຊມຊັນຢູ່ໃນທີ່ນັ້ນ ພວກເຂົາກໍພາກັນມາອ້ອມແລະຄອຍຖ້າທ່ານຢູ່ປະຕູເມືອງຕລອດ
ຄືນ ພວກເຂົາພາກັນງຽບຢູ່ຕລອດທັງຄືນແລະຄິດວ່າ “ພວກເຮົາຈິ່ງຄອຍຖ້າຈົນເຖິງມື້ອື່ນເຊົ້າ ແລະຕ້ອງຂ້າ
ເຂົາຖິ້ມ”
3 ແຕ່ແຊມຊັນໄດ້ນອນຢູ່ບ່ອນນັ້ນຮອດຕອນທ່ຽງຄືນເທົ່ານັ້ນ ທ່ານກໍລຸກດຶງປະຕູເມືອງພ້ອມທັງບານ ວົງ ແລະ
ໄລປະຕູອອກ ແລ້ວແບກໄປທີ່ຍອດພູຢູ່ໃກ້ເມືອງ ເຮໂບຣນ
4 ຫລັງຈາກນັ້ນ ແຊມຊັນກໍມີຄວາມຮັກໄຄ່ກັບຍິງຄົນນຶ່ງທີ່ຮ່ອມພູໂຊເຣກ ຊື່ ນາງເດລີລາ
5 ພວກຜູ້ນຳຟີລິສຕິນຈຶ່ງໄປຫາຍິງຄົນນັ້ນເວົ້າວ່າ, “ໃຫ້ເຈົ້າທຳກົນອຸບາຍຖາມແຊມຊັນວ່າ ເປັນຫຍັງເຂົາຈຶ່ງມີ
ແຮງແທ້ ພວກເຮົາຈະຊະນະແລະຈັບເຂົາໄດ້ດ້ວຍວິທີໃດ ແລ້ວພວກເຮົາທຸກຄົນຈະເອົາເງິນໃຫ້ເຈົ້າຜູ້ລະ
ພັນນຶ່ງຮ້ອຍແຜ່ນ”
6 ດັ່ງນັ້ນ ນາງເດລີລາຈຶ່ງເວົ້າຕໍ່ແຊມຊັນວ່າ, “ກະຣຸນາບອກໃຫ້ຂ້ອຍຮູ້ແດ່ວ່າ ເປັນຫຍັງເຈົ້າຈຶ່ງມີກຳລັງວັງຊາ
ຫລາຍແທ້ ຖ້າວ່າມີຄົນໃດຄົນນຶ່ງຕ້ອງການມັດເຈົ້າແລະເຮັດໃຫ້ເຈົ້າເສັຽທ່າ ເຂົາຈະຕ້ອງເຮັດຢ່າງໃດ
7 ແຊມຊັນກໍຕອບວ່າ, “ຖ້າວ່າພວກເຂົາມັດຂ້ອຍດ້ວຍເຊືອກຫນ້າທະນູໃຫມ່ໆເຈັດເສັ້ນທີ່ຍັງບໍ່ທັນແຫ້ງ ຂ້ອຍຈະ
ກາຍເປັນຄົນອ່ອນແອເຫມືອນດັ່ງຄົນອື່ນໆ”
8 ເມື່ອຮູ້ດັ່ງນັ້ນພວກຜູ້ນຳຟີລິສຕິນກໍນຳເອົາເຊືອກຫນ້າທະນູທີ່ຍັງໃຫມ່ແລະຍັງບໍ່ທັນແຫ້ງເຈັດເສັ້ນມາໃຫ້ເດລີ
ລາ
9 ນາງຈຶ່ງໃຫ້ຄົນພວກນຶ່ງຄອຍຖ້າຢູ່ໃນຫ້ອງອື່ນ ສ່ວນນາງເອງໄດ້ເອົາເຊືອກນັ້ນຜູກແຊມຊັນ ແລ້ວນາງກໍຮ້ອງ
ບອກແຊມຊັນວ່າ, “ແຊມຊັນພວກຟີລິສຕິນມາ” ແຕ່ແຊມຊັນໄດ້ທຸດເຊືອດນັ້ນຂາດເຫມືອນດັ່ງໄຟໄຫມ້ເສັ້ນ
ດ້າຍ ດ້ວຍເຫດນີ້ພວກຟີລິສຕິນຈຶ່ງຍັງບໍ່ຮູ້ຂໍ້ເລິກລັບກ່ຽວກັບກຳລັງພາຍໃນຂອງທ່ານ
10 ຕໍ່ມາ ນາງເດລີລາໄດ້ເວົ້າຕໍ່ແຊມຊັນອີກວ່າ, “ເຈົ້າໄດ້ລໍ້ລວງຂ້ອຍແລະເວົ້າຕົວະຂ້ອຍ ສະນັ້ນ ຂໍໃຫ້ເຈົ້າບອກ
ຂ້ອຍແດ່ວ່າເຂົາຈະຕ້ອງມັດເຈົ້າດ້ວຍວິທີໃດ”
11 ແຊມຊັນຈຶ່ງບອກນາງວ່າ, “ຖ້າເຂົາມັດຂ້ອຍດ້ວຍເຊືອກໃຫມ່ທີ່ຍັງບໍ່ທັນໃຊ້ ຂ້ອຍຈະເປັນຄົນອ່ອນແອເຫມືອນ
ຄົນອື່ນໆ”
12 ນາງເດລີລາຈຶ່ງເອົາເຊືອກໃຫມ່ນັ້ນມາມັດທ່ານແລະຮ້ອງຂຶ້ນວ່າ, “ແຊມຊັນ ພວກຟີລິສຕິນມາ” ແຊມຊັນກໍທຸດ
ເຊືອກນັ້ນຂາດອອກເຫມືອນທຸດເສັ້ນດ້າຍ ສ່ວນພວກທີ່ຄອຍຖ້ານັ້ນໄດ້ຢູ່ໃນຫ້ອງອື່ນ

13 ແລ້ວນາງເດລີລາໄດ້ເວົ້າຕໍ່ແຊມຊັນວ່າ, “ເຈົ້າຍັງລໍ້ລວງຂ້ອຍແລະຕົວະຂ້ອຍອີກຢູ່ ຂໍເຈົ້າຈົ່ງບອກຂ້ອຍວ່າ ເຂົາ
ຈະມັດເຈົ້າດ້ວຍສິ່ງໃດ” ແຊມຊັນຈຶ່ງບອກນາງວ່າ, “ຖ້າວ່າເຈົ້າເອົາຜົມຂອງຂ້ອຍເຈັດປອຍໄປຕ່ຳໃນຫູກແລະ
ຖືກຟືມໃຫ້ແໜ້ນ ແລ້ວຂ້ອຍຈະກາຍເປັນຄົນອ່ອນແອເໝືອນດັ່ງຄົນອື່ນ”
14 ນາງເດລີລາຈຶ່ງກ່ອມແຊມຊັນນອນ ແລ້ວເອົາຜົມຂອງແຊມຊັນເຈັດປອຍໄປຕ່ຳໃນຫູກແລະຖືກຟືມໃຫ້ແໜ້ນ
ນາງຮ້ອງຂຶ້ນວ່າ, “ແຊມຊັນ ພວກຟີລິສຕິນມາ” ແຊມຊັນກໍລຸກຂຶ້ນຖອດຟືມແລະດຶງເຄືອຫູກອອກໝົດ
15 ດັ່ງນັ້ນ ນາງເດລີລາຈຶ່ງເວົ້າຕໍ່ແຊມຊັນວ່າ, “ເປັນຫຍັງເຈົ້າຈຶ່ງເວົ້າວ່າເຈົ້າຮັກຂ້ອຍ ໃນເມື່ອຈິດໃຈຂອງເຈົ້າບໍ່ໄດ້
ຜູກພັນຢູ່ກັບຂ້ອຍ ເຈົ້າໄດ້ລໍ້ລວງຂ້ອຍສາມເທື່ອແລ້ວ ແລະເຈົ້າຍັງບໍ່ທັນບອກຂ້ອຍເລີຍວ່າ ດ້ວຍເຫດໃດເຈົ້າ
ຈຶ່ງມີແຮງຫລາຍແທ້”
16 ນາງເດລີລາໄດ້ຖາມຢູ່ທຸກມື້ ຈົນແຊມຊັນເບື່ອໜ່າຍ ແລະຢາກຈະຕາຍເສັຽຍ້ອນການຮົບກວນຂອງນາງ
17 ຜົນສຸດທ້າຍແຊມຊັນກໍບອກນາງຕາມຄວາມຈິງວ່າ, “ຂ້ອຍບໍ່ເຄີຍຕັດຜົມຈັກເທື່ອ ຖ້າຂ້ອຍຕັດຜົມ ຂ້ອຍຈະ
ຕ້ອງສູນເສັຽກຳລັງວັງຊາ ແລະຈະກາຍເປັນຄົນອ່ອນແອເໝືອນດັ່ງຄົນອື່ນໆ
18 ເມື່ອນາງເດລີລາແນ່ໃຈວ່າແຊມຊັນໄດ້ບອກຄວາມຈິງ ນາງກໍສົ່ງຂ່າວໄປບອກພວກຜູ້ນຳຟີລິສຕິນວ່າ, “ເຊີນ
ກັບມາອີກເທື່ອນຶ່ງ ເພາະແຊມຊັນໄດ້ບອກຄວາມຈິງໃຫ້ແກ່ຂ້ອຍແລ້ວ” ພວກເຂົາຈຶ່ງພາກັນມາພ້ອມທັງຖືເງິນ
ມານຳດ້ວຍ
19 ນາງເດລີລາໄດ້ກ່ອມແຊມຊັນນອນເທິງຕັກຂອງນາງແລະເອີ້ນໃຫ້ຜູ້ນຶ່ງມາຕັດຜົມຂອງທ່ານອອກເຈັດປອຍ
ແລ້ວນາງໄດ້ຊຸກໃຫ້ແຊມຊັນຕື່ນ ແຕ່ທ່ານບໍ່ມີເຫື່ອແຮງເສັຽແລ້ວ
20 ນາງເດລີລາຈຶ່ງຮ້ອງຂຶ້ນວ່າ, “ແຊມຊັນ ພວກຟີລິສຕິນມາ” ແຊມຊັນໄດ້ລຸກຂຶ້ນແລະຄິດວ່າ “ຂ້ອຍຈະຕ້ອງໄປ
ໄດ້ສະບາຍເໝືອນດັ່ງແຕ່ກ່ອນ” ທ່ານບໍ່ຮູ້ເລີຍວ່າພຣະຜູ້ເປັນເຈົ້າບໍ່ຊົງສະຖິດຢູ່ກັບທ່ານ
21 ຕໍ່ມາ ພວກຟີລິສຕິນໄດ້ຈັບແຊມຊັນ ແລະເຈາະໜ່ວຍຕາທັງສອງຂອງທ່ານອອກ ພວກເຂົາໄດ້ນຳທ່ານໄປ
ເມືອງກາຊາ ແລະເອົາໂສ້ທອງຜູກທ່ານໄວ້ ທ່ານຖືກບັງຄັບໃຫ້ໂມ້ແປ້ງຢູ່ໃນຄຸກ
22 ສ່ວນຜົມຂອງທ່ານໄດ້ເລີ້ມປົ່ງຂຶ້ນຄືນອີກ

**ມໍຣະນະກັມຂອງແຊມຊັນ**

Samson’s Death

23 ພວກຟີລິສຕິນໄດ້ພາກັນສເລີມສລອງງານຖວາຍບູຊາແກ່ພຣະດາໂກນຂອງພວກເຂົາຄັ້ງຍິ່ງໃຫຍ່ ພວກເຂົາ
ຮ້ອງເພງສັຣເສີນວ່າ, “ພຣະເຈົ້າຂອງພວກເຮົາໄດ້ໃຫ້ພວກເຮົາຊະນະແຊມຊັນ ຜູ້ເປັນສັດຕຣູຂອງພວກເຮົາ”
24 ເມື່ອປະຊາຊົນຫລຽວເຫັນແຊມຊັນ ພວກເຂົາກໍຮ້ອງເພງສັຣເສີນພຣະເຈົ້າຂອງເຂົາວ່າ, “ພຣະເຈົ້າຂອງພວກ
ເຮົາໄດ້ໃຫ້ພວກເຮົາຊະນະສັດຕຣູຂອງພວກເຮົາ ຊຶ່ງເປັນຜູ້ທຳລາຍພືນແຜ່ນດິນແລະຂ້າພວກເຮົາຫລາຍຄົນ”
25 ພວກເຂົາພາກັນຊົມຊື່ນຍິນດີດ້ວຍກັນ ແລະເວົ້າວ່າ, “ຈົ່ງເອີ້ນແຊມຊັນມາ ແລ້ວບັງຄັບໃຫ້ເຂົາເຮັດຕລົກໃຫ້
ເຮົາເບິ່ງ” ເມື່ອພວກເຂົາໄດ້ພາແຊມຊັນອອກມາຈາກຄຸກ ແຊມຊັນກໍທຳໃຫ້ເຂົາເບິ່ງ ແລະພວກເຂົາໄດ້ໃຫ້
ແຊມຊັນຢືນຢູ່ລະຫວ່າງກາງເສົາເຮືອນ
26 ແຊມຊັນໄດ້ເວົ້າຕໍ່ເດັກນ້ອຍຜູ້ຈູງມືທ່ານມານັ້ນວ່າ, “ຈົ່ງພາຂ້ອຍໄປຢືນຢູ່ແປະເສົາຄ້ຳຫໍໂຮງນີ້ແດ່ ເພາະຂ້ອຍ
ຢາກອີງເສົາ”
27 ໃນເວລານັ້ນ ຫໍໂຮງໄດ້ເຕັມໄປດ້ວຍປະຊາຊົນທັງຊາຍແລະຍິງ ພວກຜູ້ນຳຟີລິສຕິນທຸກໆຄົນກໍຢູ່ໃນທີ່ນັ້ນ ຢູ່
ເທິງຫລັງຄາພຽງກໍມີປະຊາຊົນທັງຊາຍແລະຍິງປະມານສາມພັນຄົນ ຊຶ່ງພວກເຂົາກຳລັງຈ້ອງເບິ່ງແຊມຊັນເຮັດ
ຕລົກຢູ່

28 แຊມຊັນອ້ອນວອນພຣະຜູ້ເປັນເຈົ້າວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໂຜດຈື່ຈຳຂ້າພຣະອົງ ຂໍພຣະອົງຈົ່ງຊົງປະ
ທານກຳລັງວັງຊາໃຫ້ຂ້າພຣະອົງອີກແດ່ພຽງເທື່ອນຶ່ງເທື່ອດຽວເທົ່ານັ້ນ ເພາະຂ້າພຣະອົງຄຽດຍ້ອນເຂົາເຈາະຕາ
ສອງເບື້ອງຂອງຂ້າ
ພຣະອົງອອກ ຂ້າພຣະອົງຈະລ້າງແຄ້ນພວກຟີລິສຕິນ”
29 ແຊມຊັນກໍເອົາມືສອງເບື້ອງຄ້ຳເສົາກາງສອງເສົາທີ່ຄ້ຳຫໍໂຮງນັ້ນ
30 ແລ້ວທ່ານໄດ້ທຸ້ມເທກຳລັງຂອງທ່ານຊຸກເສົາທັງສອງນັ້ນ ພ້ອມກັບຮ້ອງຂຶ້ນວ່າ, “ຂໍໃຫ້ຂ້າພຣະອົງຕາຍພ້ອມ
ກັບຊາວເມືອງຟີລິສຕິນນີ້ເທີ້ນ” ທ່ານຊຸກເສົານັ້ນໝົດແຮງຂອງທ່ານ ຈົນຫໍໂຮງໄດ້ເຈື່ອນລົງທັບພວກຜູ້ນຳ
ແລະຄົນອື່ນທຸກໆຄົນ ແຊມຊັນໄດ້ຂ້າຄົນໃນເວລາທ່ານເສັຽຊີວິດນີ້ຫລາຍກວ່າຄາວທ່ານຍັງມີຊີວິດຢູ່
31 ພວກຍາດພີ່ນ້ອງແລະຄອບຄົວຂອງແຊມຊັນ ໄດ້ພາກັນມາເອົາສົບທ່ານກັບຄືນເມືອ ແລ້ວເອົາໄປຝັງໄວ້ໃນ
ບ່ອນຝັງສົບຂອງມາໂນອາບິດາຂອງທ່ານ ຢູ່ລະຫວ່າງເມືອງໂຊຣາ ແລະເມືອງເອສຕາໂອນ ແຊມຊັນໄດ້ປົກ
ຄອງອິສຣາເອນຢູ່ເປັນເວລາຊາວປີ

## 17 ມີກາໄຫວ້ຮູບເຄົາຣົບ

Micah and the Levite

1 ມີຊາຍຄົນນຶ່ງເປັນຊາວພູດອຍເອຟຣາອິມ ຊື່ ມີກາ
2 ເຂົາເວົ້າກັບມານດາຂອງເຂົາວ່າ, “ເງິນນຶ່ງພັນນຶ່ງຮ້ອຍແຜ່ນ ຊຶ່ງມີຄົນລັກໄປຈາກແມ່ ແລະແມ່ກໍໄດ້ສາບແຊ່ງ
ແລະເວົ້າເຂົ້າຫູຂ້ອຍນັ້ນ ເບິ່ງແມ, ເງິນນັ້ນຢູ່ທີ່ຂ້ອຍ ຂ້ອຍເອົາໄປເອງ” ມານດາຈຶ່ງເວົ້າວ່າ, “ຂໍພຣະຜູ້ເປັນເຈົ້າ
ຊົງອວຍພຣະພອນ
ໃຫ້ລູກຂອງແມ່ເທີ້ນ”
3 ເຂົາຈຶ່ງນຳເງິນພັນນຶ່ງຮ້ອຍແຜ່ນນັ້ນມາຄືນໃຫ້ແກ່ມານດາ ແລະມານດາຂອງເຂົາເວົ້າວ່າ, “ເງິນຈຳນວນນີ້ແມ່ຂໍ
ຖວາຍແດ່ພຣະຜູ້ເປັນເຈົ້າເພື່ອລູກໃຫ້ທຳເປັນຮູບແກະສລັກ ແລະຮູບຫລໍ່ ແມ່ຈຶ່ງຄືນໃຫ້ແກ່ເຈົ້າ”
4 ເມື່ອມີກາຄືນເງິນໃຫ້ແກ່ມານດາແລ້ວ ມານດາກໍນຳເງິນສອງຮ້ອຍແຜ່ນມອບໃຫ້ກັບຊ່າງເງິນ ທຳເປັນຮູບແກະ
ສລັກ ແລະຮູບຫລໍ່ ຮູບນັ້ນຢູ່ໃນບ້ານຂອງມີກາ
5 ມີກາຄົນນີ້ມີເຮືອນພຣະຫລັງນຶ່ງ ເຂົາທຳຮູບເອໂຟດ ແລະຮູບພຣະ ແລະແຕ່ງຕັ້ງໃຫ້ບຸດຄົນນຶ່ງຂອງເຂົາເປັນ
ປະໂຣຫິດ
6 ໃນສມັຍນັ້ນຍັງບໍ່ມີກະສັດໃນອິສຣາເອນ ທຸກຄົນກໍກະທຳຕາມໃຈມັກຂອງຕົນ
7 ມີຊາຍໜຸ່ມຄົນນຶ່ງຊາວບ້ານເບັດເລເຮັມໃນຢູດາ ຕະກູນຢູດາ ເປັນພວກເລວີ ອາໄສຢູ່ທີ່ນັ້ນ
8 ຊາຍນັ້ນຍ່າງອອກຈາກບ້ານເບັດເລເຮັມໃນຢູດາ ທ່ຽວຊອກຫາບ່ອນເພື່ອພັກອາໄສ ເມື່ອເຂົາເດີນທາງໄປນັ້ນ
ກໍມາເຖິງພູດອຍເອຟຣາອິມເຖິງບ້ານຂອງມີກາ
9 ມີກາຈຶ່ງເວົ້າກັບເຂົາວ່າ, “ທ່ານມາຈາກໃສ” ເຂົາຕອບວ່າ, “ຂ້າພະເຈົ້າເປັນພວກເລວີຊາວບ້ານເບັດເລເຮັມໃນ
ຢູດາ ຂ້າພະເຈົ້າເດີນທາງທ່ຽວຊອກຫາທີ່ພັກອາໄສ
10 ມີກາຈຶ່ງກ່າວແກ່ເຂົາວ່າ, “ຈົ່ງຢູ່ກັບຂ້າພະເຈົ້າເຖີດ ເປັນຢ່າງບິດາແລະປະໂຣຫິດຂອງຂ້າພະເຈົ້າກໍແລ້ວກັນ
ຂ້າພະເຈົ້າຈະຈ່າຍເງິນໃຫ້ປີລະສິບແຜ່ນ ພ້ອມທັງເຄື່ອງນຸ່ງແລະອາຫານການກິນ” ເລວີຄົນນັ້ນຈຶ່ງເຂົ້າໄປ
11 ເລວີຄົນນັ້ນກໍພໍໃຈທີ່ຈະຢູ່ກັບຊາຍຄົນນັ້ນ ແລະຊາຍໜຸ່ມຄົນນັ້ນກໍເປັນເໝືອນລູກຂອງເຂົາ
12 ມີກາກໍແຕ່ງຕັ້ງເລວີຄົນນັ້ນໃຫ້ ແລະຊາຍໜຸ່ມຄົນນັ້ນກໍເປັນປະໂຣຫິດຂອງເຂົາ ແລະຢູ່ໃນບ້ານຂອງມີກາ
13 ມີກາກ່າວວ່າ, “ບັດນີ້ ຂ້າພະເຈົ້າຮູ້ແລ້ວວ່າ ພຣະຜູ້ເປັນເຈົ້າຈະຊົງໃຫ້ຂ້າພະເຈົ້າຮັ່ງມີເປັນດີ ເພາະວ່າຂ້າພະ
ເຈົ້າມີເລວີຄົນນຶ່ງເປັນປະໂຣຫິດ”

## 18 ມີກາແລະຄົນເຜົ່າດານ

The Migration of Dan

1 ໃນສມັຍນັ້ນບໍ່ມີກະສັດໃນອິສຣາເອນ ແລະໃນສມັຍນັ້ນຄົນເຜົ່າດານຍັງຫ່ງວຊອກຫາທີ່ດິນອັນຈະເປັນມໍຣະ
ດົກຂອງຕົນເພື່ອຈະໄດ້ພັກອາໄສ ເພາະຈົນບັດນັ້ນແລ້ວມໍຣະດົກໃນຫມູ່ຄົນເຜົ່າອິສຣາເອນຍັງບໍ່ຕົກແກ່ເຂົາ
2 ດັ່ງນັ້ນຄົນເຜົ່າດານຈຶ່ງສົ່ງຄົນຫ້າຄົນ ຈາກຈຳນວນທັງຫມົດເປັນຊາຍສະກັນໃນຕະກູນຂອງຕົນມາຈາກໂຊຣາ
ແລະຈາກເອສຕາໂອນ ໄປສອດແນມເບິ່ງແຜ່ນດິນ ແລະສຳຣວດເບິ່ງແຜ່ນດິນນັ້ນ ແລະເຂົາທັງຫລາຍເວົ້າແກ່
ເຂົາວ່າ, “ຈົ່ງໄປ ກວດເບິ່ງແຜ່ນດິນນັ້ນ” ເຂົາກໍມາເຖິງພູດອຍເອຟຣາອິມ ເຖິງບ້ານຂອງມີກາແລະອາໄສຢູ່ທີ່
ນັ້ນ
3 ເມື່ອເຂົາຢູ່ໃກ້ບ້ານຂອງມີກາ ເຂົາກໍຈຳສຽງເລວີຫນຸ່ມຄົນນັ້ນໄດ້ ຈຶ່ງແວະເຂົ້າໄປຖາມວ່າ, “ໃຜພາທ່ານມາທີ່ນີ້”
4 ເຂົາຕອບຄົນເຫລົ່ານັ້ນວ່າ, “ມີກາທຳແກ່ຂ້າພະເຈົ້າ ຢ່າງນີ້ ຢ່າງນີ້ ເຂົາຈ້າງຂ້າພະເຈົ້າ ຂ້າພະເຈົ້າຈຶ່ງເປັນປະ
ໂຣຫິດຂອງເຂົາ”
5 ຄົນເຫລົ່ານັ້ນກໍເວົ້າກັບເຂົາວ່າ, “ໄດ້ໂຜດທູນຖາມພຣະເຈົ້າໃຫ້ແດ່ ເພື່ອເຮົາຈະຮູ້ວ່າທາງທີ່ເຮົາຈະອອກເດີນ
ໄປນີ້ຈະສຳເຣັດຫລືບໍ່” ປະໂຣຫິດນັ້ນຈຶ່ງຕອບເຂົາທັງຫລາຍວ່າ,
6 “ຈົ່ງໄປເປັນສຸກເຖີດ ຫົນທາງທີ່ທ່ານໄປຈະຢູ່ພາຍໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ”
7 ຊາຍທັງຫ້າຄົນກໍຈາກໄປເຖິງເມືອງລາອິສ ເຫັນປະຊາຊົນທີ່ຢູ່ທີ່ເມືອງນັ້ນເຫັນຊາວເມືອງຢູ່ຢ່າງສະບາຍຕາມນິ
ສັຍຄົນຊີໂດນ ຢ່າງສງົບ ບໍ່ຫວາດລະແວງສິ່ງໃດ ບໍ່ຂາດຫຍັງຊຶ່ງຢູ່ໃນໂລກນີ້ ເປັນຄົນມີຊັບສິນ ເຂົາຢູ່ຫ່າງໄກ
ຈາກຄົນຊີໂດນ ບໍ່ມີເຣື່ອງກ່ຽວຂ້ອງກັບຄົນອື່ນເລີຍ
8 ເມື່ອຄົນທັງຫ້າກັບມາເຖິງຍາດພີ່ນ້ອງທີ່ໂຊຣາ ແລະເອສຕາໂອນຍາດພີ່ນ້ອງຈຶ່ງຖາມເຂົາວ່າ, “ເຈົ້າເວົ້າຫຍັງ”
9 ເຂົາຕອບວ່າ, “ຈົ່ງລຸກຂຶ້ນ ໃຫ້ເຮົາໄປຣົບກັບເຂົາເຖີດເພາະເຮົາໄດ້ເຫັນແຜ່ນດິນນັ້ນແລ້ວ ແລະເບິ່ງແມ໋, ເປັນ
ແຜ່ນດິນດີແທ້ໆ ທ່ານທັງຫລາຍຈະບໍ່ເຮັດຫຍັງເລີຍຫລື ຢ່າຊັກຊ້າທີ່ຈະໄປກັນແລະເຂົ້າຍຶດຄອງແຜ່ນດິນນັ້ນ
10 ເມື່ອທ່ານທັງຫລາຍໄປແລ້ວຈະພົບປະຊາຊົນທີ່ບໍ່ຫວາດລະແວງສິ່ງໃດ ແຜ່ນດິນກໍກວ້າງຂວາງ
ພຣະຜູ້ເປັນເຈົ້າຊົງມອບໄວ້ໃນມືຂອງທ່ານທັງຫລາຍແລ້ວ ເປັນສະຖານທີ່ຊຶ່ງບໍ່ຂາດສິ່ງໃດທີ່ມີໃນໂລກ”
11 ຄົນເຜົ່າດານຫົກຮ້ອຍຄົນພ້ອມດ້ວຍເຄື່ອງອາວຸດທຳສົງຄາມຍົກທັບອອກຈາກ ໂຊຣາ ແລະເອສຕາໂອນ
12 ເຂົາທັງຫລາຍຍົກຂຶ້ນໄປຕັ້ງຄ້າຍຢູ່ທີ່ກີຣິອາດເຢອາຣີມໃນຢູດາເພາະເຫດນີ້ເຂົາຈຶ່ງເອີ້ນທີ່ນັ້ນວ່າ “ມາຮາເນ
ດານ” ຈົນເທົ່າທຸກວັນນີ້ ເບິ່ງແມ, ເມືອງນີ້ຢູ່ທາງທິດຕາເວັນຕົກຂອງກີຣິອາດເຢອາຣີມ
13 ເຂົາກໍຜ່ານຈາກທີ່ນັ້ນໄປເຖິງພູດອຍເອຟຣາອິມມາເຖິງບ້ານຂອງມີກາ
14 ແລ້ວຊາຍທັງຫ້າຄົນທີ່ໄປສອດແນມເບິ່ງເມືອງ ລາອິສ ກໍບອກແກ່ພີ່ນ້ອງຂອງຕົນວ່າ, “ທ່ານຮູ້ບໍ່ວ່າໃນບ້ານ
ເຫລົ່ານີ້ມີຮູບເອໂຟດ ຮູບພຣະ ຮູບແກະສລັກ ແລະຮູບຫລໍ່ ສະນັ້ນຂໍໄຕ່ຄວນເບິ່ງວ່າ ທ່ານທັງຫລາຍຈະທຳປະ
ການໃດ”
15 ເຂົາທັງຫລາຍກໍແວະເຂົ້າບ້ານຂອງເລວີຫນຸ່ມຄົນນັ້ນ ຄືທີ່ບ້ານຂອງມີກາຖາມເບິ່ງທຸກສຸກຂອງເຂົາ
16 ຝ່າຍຄົນເຜົ່າດານທັງຫົກຮ້ອຍຄົນຖືກອາວຸດທຳສົງຄາມຢືນຢູ່ທີ່ທາງເຂົ້າປະຕູຮົ້ວ
17 ຊາຍທັງຫ້າຄົນທີ່ອອກໄປສອດແນມເບິ່ງບ້ານເມືອງກໍເດີນເຂົ້າໄປນຳເອົາຮູບແກະສລັກ ຮູບເອໂຟດ ຮູບພຣະ
ແລະຮູບຫລໍ່ໄປ ຝ່າຍປະໂຣຫິດກໍຢືນຢູ່ທີ່ທາງເຂົ້າປະຕູຮົ້ວກັບທະຫານຖືອາວຸດທຳສົງຄາມຫົກຮ້ອຍຄົນນັ້ນ
18 ເມື່ອຄົນເຫລົ່ານີ້ເຂົ້າໄປໃນບ້ານຂອງມີກາ ນຳເອົາຮູບແກະສລັກ ຮູບເອໂຟດ ຮູບພຣະ ແລະຮູບຫລໍ່ນັ້ນ ປະໂຣ
ຫິດຖາມເຂົາວ່າ, “ນັ້ນທ່ານເຮັດຫຍັງ”

19 ຄົນເຫລົ່ານັ້ນຈຶ່ງຕອບເຂົາວ່າ, "ຢ່າປາກ ຈົ່ງມາກັບພວກເຮົາເຖີດ ມາເປັນບິດາແລະປະໂຣຫິດຂອງເຮົາ ຈະ
ເປັນປະໂຣຫິດໃນບ້ານຂອງຊາຍຄົນດຽວດີ ຫລືວ່າຈະເປັນປະໂຣຫິດຂອງເຜົ່ານຶ່ງ ແລະຕະກູນນຶ່ງໃນອິສຣາ
ເອນດີ"
20 ໃຈຂອງປະໂຣຫິດກໍຍິນດີ ເຂົາຈຶ່ງເອົາຮູບເອໂຟດ ຮູບພຣະ ແລະຮູບແກະສລັກ ຍ່າງໄປໃນຫມູ່ປະຊາຊົນ
21 ແລ້ວເຂົາກໍກັບອອກເດີນທາງໄປ ໃຫ້ເດັກ ທັງຝູງສັດ ແລະສິ່ງຂອງເດີນໄປຂ້າງຫນ້າ
22 ເມື່ອໄປຫ່າງຈາກບ້ານມີກາແລ້ວ ຄົນທີ່ຢູ່ໃນບ້ານໃກ້ຄຽງກັບບ້ານຂອງມີກາກໍຮ່ອມຕິດຕາມ ໄປທັນຄົນເຜົ່າ
ດານ
23 ຈຶ່ງຮ້ອງເອີ້ນຄົນເຜົ່າດານ ເຂົາກໍຫັນກັບມາເວົ້າກັບມີກາວ່າ, "ເປັນຫຍັງເຈົ້າຈຶ່ງຍົກຄົນມາຫລາຍປານນີ້"
24 ເຂົາຕອບວ່າ, "ທ່ານທັງຫລາຍນຳພຣະຂອງຂ້າພະເຈົ້າ ຊຶ່ງຂ້າພະເຈົ້າສ້າງຂຶ້ນ ແລະນຳປະໂຣຫິດອອກມາເສັຽ
ຂ້າພະເຈົ້າຈະມີສິ່ງໃດເຫລືອຢູ່ ທ່ານທັງຫລາຍຍັງຈະມາຖາມຂ້າພະເຈົ້າອີກວ່າ ມີເຣື່ອງຫຍັງ"
25 ຄົນເຜົ່າດານຈຶ່ງຕອບເຂົາວ່າ, "ຢ່າໃຫ້ເຮົາໄດ້ຍິນສຽງຂອງເຈົ້າເລີຍ ຢ້ານວ່າຄົນມັກໃຈຮ້າຍຈະທຳລາຍເຈົ້າ
ເຈົ້າແລະຄອບຄົວຂອງເຈົ້າກໍຈະເສັຽຊີວິດຫມົດ
26 ຝ່າຍຄົນເຜົ່າດານກໍຍ່າງຕໍ່ໄປ ເມື່ອມີກາເຫັນວ່າເຂົາເຫລົ່ານັ້ນມີກຳລັງຫລາຍກວ່າຈຶ່ງຫັນກັບຄືນເດີນທາງໄປ
ບ້ານຂອງຕົນ

The Danites settle in Laish

27 ຄົນເຜົ່າດານນຳເອົາສິ່ງທີ່ມີກາສ້າງຂຶ້ນ ແລະນຳປະໂຣຫິດຊຶ່ງເປັນຂອງເຂົາມານຳ ກໍເດີນທາງມາເຖິງ ລາອິສ
ມາເຖິງປະຊາຊົນທີ່ຢູ່ຢ່າງສງົບ ແລະບໍ່ຫວາດລະແວງສິ່ງໃດ ຈຶ່ງປະຫານຄົນເຫລົ່ານັ້ນດ້ວຍຄົມດາບແລະເອົາ
ໄຟເຜົາເມືອງເສັຽ
28 ບໍ່ມີຜູ້ໃດມາຊ່ອຍເຫລືອ ເພາະເຂົາຢູ່ໄກຈາກເມືອງຊີໂດນ ແລະບໍ່ໄດ້ທຳການກ່ຽວຂ້ອງກັບຄົນອື່ນ ຢູ່ໃນຮ່ອມພູ
ຊຶ່ງຢູ່ໃກ້ກັບເມືອງເບັດເຣໂຮບ ຄົນເຫລົ່ານັ້ນກໍສ້າງເມືອງໃຫມ່ ແລະອາໄສຢູ່ທີ່ນັ້ນ
29 ເຂົາຕັ້ງຊື່ເມືອງນັ້ນວ່າ ດານ ຕາມຊື່ດານບັນພະບຸຣຸດຂອງເຂົາ ຜູ້ຊຶ່ງເກີດກັບອິສຣາເອນ ແຕ່ຕອນແຣກເມືອງ
ນັ້ນຊື່ວ່າ ລາອິສ
30 ຄົນເຜົ່າດານກໍຕັ້ງຮູບແກະສລັກໄວ້ສຳລັບຕົນ ສ່ວນໂຢນາທານບຸດເກີໂຊມ ບຸດຂອງໂມເຊ ທັງທ່ານແລະບັນ
ດາບຸດຊາຍຂອງເຂົາກໍເປັນປະໂຣຫິດໃຫ້ແກ່ຄົນເຜົ່າດານຈົນເຖິງສະໄຫມທີ່ແຜ່ນດິນຕົກໄປເປັນຊະເລີຍ
31 ເຂົາໄດ້ຕັ້ງຮູບແກະສລັກຊຶ່ງມີກາໄດ້ທຳໄວ້ນັ້ນຂຶ້ນດົນນານຕລອດເວລາທີ່ພຣະວິຫານຂອງພຣະເຈົ້າຢູ່ທີ່ ຊີໂລ

## 19 ຄົນເລວີແລະເມັຽນ້ອຍຂອງຕົນ

The Levites's Concubine

1 ຢູ່ມາໃນສມັຍນັ້ນ ເມື່ອບໍ່ມີກະສັດໃນອິສຣາເອນ ມີຄົນເລວີຄົນນຶ່ງອາໄສຢູ່ທີ່ພູດອຍເອຟຣາອິມຢູ່ບ່ອນໄກທີ່
ສຸດ ເຂົາໄດ້ຍິງຄົນນຶ່ງຈາກເບັດເລເຮັມໃນຢູດາມາເປັນເມັຽນ້ອຍ
2 ເມັຽນ້ອຍນັ້ນຫລິ້ນຊູ້ຈຶ່ງຖິ້ມຜົວເສັຽກັບໄປຢູ່ບ້ານບິດາຂອງນາງທີ່ເບັດເລເຮັມໃນຢູດາ ຢູ່ທີ່ນັ້ນເຖິງສີ່ເດືອນ
3 ຜົວຂອງນາງກໍລຸກຂຶ້ນໄປຕາມນາງ ເພື່ອໄປເວົ້າກັບນາງດ້ວຍຈິດເມດຕາແລະຈະພານາງກັບມາ ເຂົາພາຄົນ
ໃຊ້ຄົນນຶ່ງ ແລະລໍຄູ່ນຶ່ງໄປນຳ ນາງພາກເຂົາເຂົ້າໄປໃນບ້ານບິດາຂອງນາງ ເມື່ອບິດາຂອງຜູ້ຍິງເຫັນເຂົ້າກໍມີ
ຄວາມຍິນດີຕ້ອນຮັບເຂົາ
4 ພໍ່ເຖົ້າຂອງເຂົາຄືບິດາຂອງຜູ້ຍິງຫນ່ວງຫນ່ຽວເຂົາ ແລະເຂົາພັກຢູ່ນຳສາມວັນ ເຂົາກໍກິນແລະດື່ມ ແລະພັກ
ນອນຢູ່ທີ່ນັ້ນ

5 ຢູ່ມາເຖິງວັນທີສີ່ເຂົາທັງຫລາຍກໍຕື່ນຂຶ້ນແຕ່ເດິກ ແລະຄົນນັ້ນລຸກຂຶ້ນຈະອອກເດີນທາງ ແຕ່ພໍ່ຂອງຜູ້ຍິງເວົ້າກັບ
ລູກເຂີຍຂອງເຂົາວ່າ, "ຈົ່ງຮັບປະທານອາຫານອີກຈັກໜ້ອຍນຶ່ງໃຫ້ຊື່ນໃຈແລ້ວພາຍຫລັງຈຶ່ງຄ່ອຍອອກເດີນ
ທາງ"
6 ຊາຍສອງຄົນນັ້ນກໍນັ່ງລົງຮັບປະທານແລະດື່ມດ້ວຍກັນ ແລະບິດາຂອງຜູ້ຍິງກໍບອກຊາຍນັ້ນວ່າ, "ຈົ່ງຄ້າງອີ
ກຄືນນຶ່ງເຖີດ ກະທຳຈິດໃຈໃຫ້ເບີກບານ"
7 ເມື່ອຊາຍຄົນນັ້ນລຸກຂຶ້ນຈະອອກເດີນທາງ ພໍ່ເຖົ້າກໍຊັກຊວນໄວ້ ຈົນເຂົາຕ້ອງພັກຢູ່ທີ່ນັ້ນອີກ
8 ໃນວັນທີຫ້າເຂົາກໍຕື່ນແຕ່ເດິກເພື່ອຈະອອກເດີນທາງໄປ ບິດາຂອງຍິງນັ້ນເວົ້າວ່າ, "ຂໍຢູ່ໃຫ້ຊື່ນໃຈຈົນເຖິງບ່າຍ
ເຖີດ" ເຂົາທັງສອງກໍຮັບປະທານຢູ່ດ້ວຍກັນອີກ
9 ເມື່ອຊາຍຄົນນັ້ນແລະເມັຽກັບຄົນໃຊ້ລຸກຂຶ້ນຈະອອກເດີນທາງ ພໍ່ເຖົ້າຂອງເຂົາຄືບິດາຂອງຜູ້ຍິງກໍບອກເຂົາວ່າ,
"ເບິ່ງແມ, ນີ້ກໍບ່າຍໃກ້ຄ່ຳແລ້ວ ຂໍຄ້າງຢູ່ອີກຄືນນຶ່ງເທີນ ມັນຈະໝົດວັນຢູ່ແລ້ວ ພັກນອນທີ່ນີ້ເຖີດ ເພື່ອໃຈຂອງ
ເຈົ້າຈະເບີກບານ ມື້ອື່ນເຊົ້າຂໍເຈົ້າຕື່ນແຕ່ເດິກເພື່ອອອກເດີນທາງເຈົ້າຈະໄດ້ໄປບ້ານ"
10 ແຕ່ຊາຍຄົນນັ້ນບໍ່ຍອມຄ້າງອີກຄືນນຶ່ງ ເຂົາຈຶ່ງລຸກຂຶ້ນອອກເດີນທາງໄປຈົນເຖິງກົງກັນຂ້າມກັບເມືອງເຢບຸສ (ຄື
ເຢຣູຊາເລັມ) ເຂົາມີລໍສອງໂຕທີ່ມີອານ ແລະເມັຽນ້ອຍກໍໄປນຳ
11 ເມື່ອເຂົາມາໃກ້ເມືອງເຢບຸສກໍໃກ້ຄ່ຳແລ້ວ ຄົນໃຊ້ຈຶ່ງບອກນາຍຂອງເຂົາວ່າ, "ໃຫ້ເຮົາແວະເຂົ້າໄປພັກໃນເມືອງ
ຂອງຄົນເຢ ບຸສເຖີດ ຄ້າງຄືນຢູ່ໃນເມືອງນີ້ແຫລະ"
12 ນາຍຂອງເຂົາຕອບວ່າ, "ເຮົາຈະບໍ່ແວະເຂົ້າໄປໃນເມືອງຂອງຄົນຕ່າງດ້າວ ຜູ້ທີ່ບໍ່ແມ່ນຄົນອິສຣາເອນ ເຮົາຈະ
ຜ່ານໄປເຖິງເມືອງກິເບອາ"
13 ເຂົາຈຶ່ງບອກຄົນໃຊ້ວ່າ, "ມາເຖີດ ໃຫ້ເຮົາເລັ່ງເຂົ້າໄປໃກ້ບ່ອນເຫລົ່ານີ້ແຫ່ງນຶ່ງ ແລະຄ້າງທີ່ກິເບອາ ຫລືທີ່ຣາ
ມາ"
14 ເຂົາຈຶ່ງເດີນທາງຜ່ານໄປ ເມື່ອເຂົາມາໃກ້ກິເບອາ ຊຶ່ງເປັນຂອງຄົນເບັນຢາມິນດວງອາທິດກໍຕົກແລ້ວ
15 ເຂົາຈຶ່ງແວະເຂົ້າໄປຈະຄ້າງຄືນທີ່ເມືອງກິເບອາ ເຂົາກໍແວະເຂົ້າໄປນັ່ງຢູ່ທີ່ລານເມືອງເພາະບໍ່ມີໃຜເຊີນໃຫ້ເຂົາ
ເຂົ້າໄປຄ້າງໃນບ້ານ
16 ເບິ່ງແມ, ມີຊາຍແກ່ຄົນນຶ່ງເຂົ້າມາ ເມື່ອເລີກຈາກງານນາເປັນເວລາຄ່ຳແລ້ວ ເຂົາເປັນຊາວພູດອຍເອຟຣາອິມ
ມາອາໄສຢູ່ໃນເມືອງກິເບອາຊາວເມືອງເປັນຄົນເບັນຢາມິນ
17 ເມື່ອເຂົາເງີຍໜ້າຂຶ້ນເຫັນຜູ້ເດີນທາງຄົນນັ້ນນັ່ງຢູ່ທີ່ລານເມືອງ ຊາຍແກ່ຄົນນັ້ນກໍຖາມວ່າ, "ທ່ານຈະໄປໃສ
ແລະມາຈາກໃສ"
18 ຊາຍຄົນນັ້ນຈຶ່ງຕອບເຂົາວ່າ, "ຂ້າພະເຈົ້າເດີນທາງຈາກເບັດເລເຮັມໃນຢູດາ ຈະໄປທີ່ພູດອຍເອຟຣາອິມບ່ອນ
ທີ່ໄກອອກໄປທາງພຸ້ນ ຊຶ່ງຂ້າພະເຈົ້າມາຈາກທີ່ນັ້ນ ຂ້າພະເຈົ້າໄປເບັດເລເຮັມໃນຢູດາມາ ແລະຂ້າພະເຈົ້າຈະ
ກັບໄປບ້ານຂອງຂ້າພະເຈົ້າ ບໍ່ມີໃຜເຊີນຂ້າພະເຈົ້າເຂົ້າໄປພັກໃນບ້ານ
19 ຟາງແລະອາຫານທີ່ຈະລ້ຽງລໍ ພວກເຮົາກໍມີພ້ອມແລ້ວ ທັງອາຫານແລະເຫລົ້າອະງຸ່ນທີ່ລ້ຽງຕົນ ທັງລ້ຽງຍິງຄົນນີ້
ແລະຊາຍໜຸ່ມຄົນທີ່ຢູ່ນຳກໍມີຢູ່ແລ້ວບໍ່ຂາດສິ່ງໃດເລີຍ"
20 ຊາຍແກ່ຄົນນັ້ນຈຶ່ງເວົ້າວ່າ, "ຂໍທ່ານເປັນສຸກສະບາຍເຖີດ ຖ້າທ່ານຂາດສິ່ງໃດ ຂ້າພະເຈົ້າຂໍເປັນທຸຣະທັງໝົດ
ຂໍແຕ່ຢ່ານອນທີ່ລານເມືອງນີ້ເລີຍ"
21 ເຂົາຈຶ່ງພາຊາຍຄົນນັ້ນເຂົ້າໄປໃນບ້ານ ເອົາອາຫານໃຫ້ລໍ ຕ່າງກໍລ້າງຕີນຂອງຕົນ ແລະຮັບປະທານອາຫານ
ແລະດື່ມ

Gibeah's Crime

22 ເມື່ອເຂົາກຳລັງທຳໃຫ້ຈິດໃຈເບີກບານ ເບິ່ງແມ, ຊາວເມືອງນັ້ນທີ່ເປັນຄົນອັນທະພານມາລ້ອມເຮືອນໄວ້ ທຸບ
ປະຕູ ຮ້ອງບອກຊາຍແກ່ຜູ້ເປັນເຈົ້າຂອງບ້ານວ່າ, "ສົ່ງຊາຍທີ່ເຂົ້າມາຢູ່ໃນບ້ານຂອງເຈົ້າມາໃຫ້ເຮົາຮ່ວມເພດ
ກັບເຂົາ"
23 ຊາຍຜູ້ເປັນເຈົ້າຂອງບ້ານກໍອອກໄປເວົ້າກັບເຂົາວ່າ, "ຢ່າເລີຍ ພີ່ນ້ອງຂອງຂ້າພະເຈົ້າ ຂໍຢ່າກະທຳການຮ້າຍ
ເຊັ່ນນີ້ເລີຍ ເມື່ອຊາຍຄົນນີ້ມາອາໄສບ້ານຂອງຂ້າພະເຈົ້າແລ້ວ ຂໍຢ່າທຳຮ້າຍເຂົາເລີຍ
24 ເບິ່ງແມ, ນີ້ມີລູກສາວພົມມະຈາຣີຄົນນຶ່ງ ແລະເມັຽນ້ອຍຂອງເຂົາຂ້າພະເຈົ້າຈະພາອອກມາໃຫ້ທ່ານດຽວນີ້ ຈົ່ງ
ຂົ່ມຂືນ ຫລືທຳສິ່ງໃດແກ່ເຂົາຕາມໃຈມັກຂອງເຈົ້າເຖີດ ແຕ່ຂໍຢ່າທຳສິ່ງທີ່ຫນ້າລັງກຽດກັບຊາຍຄົນນີ້ເລີຍ"
25 ແຕ່ຄົນເຫລົ່ານັ້ນບໍ່ຍອມຟັງສຽງ ຊາຍຄົນນັ້ນຈຶ່ງຈັບເມັຽນ້ອຍຂອງຕົນຊຸກນາງອອກໄປໃຫ້ເຂົາ ເຂົາກໍສົມສູ່ທຳ
ທາຣຸນ    ຕລອດຄືນຈົນຮຸ່ງເຊົ້າ ພໍຮຸ່ງສາງເຂົາກໍປ່ອຍນາງໄປ
26 ພໍແຈ້ງຜູ້ຍິງນັ້ນກໍກັບມາລົ້ມລົງທີ່ປະຕູບ້ານຊຶ່ງນາຍຂອງຕົນພັກຢູ່ ຈົນສວ່າງດີ
27 ຮຸ່ງເຊົ້ານາຍຂອງນາງກໍລຸກຂຶ້ນເມື່ອເປີດປະຕູບ້ານ ຈະອອກເດີນທາງ ເມັຽນ້ອຍຂອງເຂົາກໍນອນຢູ່ທີ່ປະຕູບ້ານ
ມືຢຽດອອກໄປຈຸປະຕູ
28 ເຂົາຈຶ່ງບອກນາງວ່າ, "ລຸກຂຶ້ນໄປກັນເຖີດ" ແຕ່ກໍບໍ່ມີຄຳຕອບ ເຂົາຈຶ່ງເອົານາງຂຶ້ນຫລັງລໍ ຊາຍນັ້ນກໍລຸກຂຶ້ນ
ເດີນທາງໄປບ້ານຂອງຕົນ
29 ເມື່ອເຖິງບ້ານແລ້ວ ກໍເອົາມີດຟັນສົບນາງເປັນທ່ອນໆສິບສອງທ່ອນດ້ວຍກັນສົ່ງໄປທົ່ວເຂດແດນອິສຣາເອນ
30 ທຸກຄົນທີ່ເຫັນກໍເວົ້າວ່າ, "ເຣື່ອງຢ່າງນີ້ບໍ່ມີໃຜເຄີຍເຫັນຕັ້ງແຕ່ສມັຍຄົນອິສຣາເອນອອກຈາກແຜ່ນດິນເອຢິບຈົນ
ເຖິງວັນນີ້ ຈົ່ງຕຶກຕອງປຶກສາກັນເບິ່ງ ແລ້ວກໍວ່າກັນໄປເຖີດ"

## 20 ການສົງຄາມຕໍ່ສູ້ຄົນເບັນຢາມິນ

The Other Tribes Attack Benjamin

1 ຄົນອິສຣາເອນທັງຫມົດຕັ້ງແຕ່ ດານເຖິງເບເອີເຊບາ ທັງແຜ່ນດິນກີເລອາດກໍອອກມາ ຊຸມນຸມຊົນນັ້ນໄດ້ປະ
ຊຸມກັນເປັນໃຈດຽວກັນຕໍ່ພຣະຜູ້ເປັນເຈົ້າທີ່ເມືອງມິສປາ
2 ຫົວຫນ້າປະຊາຊົນທັງປວງຄືຂອງເຜົ່າຄົນອິສຣາເອນທັງຫມົດ ເຂົາມາປາກົດຕົວໃນທີ່ປະຊຸມແຫ່ງໄພ່ພົນຂອງ
ພຣະຜູ້ເປັນເຈົ້າ ມີທະຫານຣາບຖືດາບສີ່ແສນຄົນ
3 (ຄັ້ງນັ້ນຄົນເບັນຢາມິນໄດ້ຍິນວ່າຄົນອິສຣາເອນໄດ້ຂຶ້ນໄປຍັງມິສປາ) ປະຊາຊົນອິສຣາເອນກ່າວວ່າ, "ຂໍບອກ
ເຮົາມາວ່າ ເຣື່ອງຊົ່ວຮ້າຍນີ້ເກີດຂຶ້ນມາຢ່າງໃດກັນ"
4 ຄົນເລວີຊຶ່ງເປັນຜົວຂອງຍິງທີ່ຖືກຂ້ານັ້ນກ່າວຕອບວ່າ, "ຂ້າພະເຈົ້າແລະເມັຽນ້ອຍຂອງຂ້າພະເຈົ້າມາເຖິງເມືອງ
ກິເບອາຊຶ່ງເປັນເມືອງຂອງເບັນຢາມິນ ເພື່ອຈະຄ້າງຄືນທີ່ນັ້ນ
5 ເວລາກາງຄືນຜູ້ຊາຍໃນເມືອງກິເບອາກໍລຸກຂຶ້ນລ້ອມຮອບບ້ານທີ່ຂ້າພະເຈົ້າພັກຢູ່ ເຂົາຫມາຍຈະຂ້າຂ້າພະເຈົ້າ
ເສັຽ ເຂົາຂົ່ມຂືນເມັຽນ້ອຍຂອງຂ້າພະເຈົ້າຈົນຕາຍ
6 ຂ້າພະເຈົ້າຈຶ່ງນຳສົບນາງມາຟັນອອກເປັນທ່ອນໆສົ່ງໄປທົ່ວປະເທດທີ່ເປັນມໍຣະດົກຂອງອິສຣາເອນ ເພາະເກີ
ດການອານາຈານແລະສິ່ງທີ່ຫນ້າກຽດຊັງຂຶ້ນໃນອິສຣາເອນແລ້ວ
7 ເບິ່ງແມ, ທ່ານຜູ້ເປັນຄົນອິສຣາເອນທັງຫລາຍ ຈົ່ງໃຫ້ຄຳປຶກສາແລະຄວາມເຫັນໃນທີ່ນີ້ເຖີດ"
8 ປະຊາຊົນທຸກຄົນກໍລຸກຂຶ້ນກ່າວເປັນໃຈດຽວກັນວ່າ, "ພວກເຮົາຈະບໍ່ກັບໄປເຕັນຂອງເຮົາ ເຮົາຈະບໍ່ກັບໄປ
ເຮືອນຂອງເຮົາ
9 ແຕ່ເຮົາຈະກະທຳກັບກິເບອາດັ່ງນີ້ ເຮົາຈະຈັບສລາກຍົກຂຶ້ນໄປສູ້ຮົບກັບເຂົາ

10 ເຮົາຈະເລືອກຄົນອິສຣາເອນທຸກເຜົ່າຄັດເອົາຮ້ອຍລະສິບຄົນ ພັນລະຮ້ອຍ ໝື່ນລະພັນໃຫ້ໄປຫາສະບຽງອາ
ຫານ ມາໃຫ້ປະຊາຊົນ ເພື່ອເຂົາທັງຫລາຍຈະຕອບສນອງຄວາມຊົ່ວທີ່ໜ້າລັງກຽດຊຶ່ງພວກກິເບອາກະທຳຂຶ້ນ
ໃນອິສຣາເອນເມື່ອເຂົາທັງຫລາຍມາເຖິງເມືອງກິເບອາຂອງເຜົ່າເບັນຢາມິນ"
11 ຄົນອິສຣາເອນທັງປວງກໍຮ່ວມຍົກໄປສູ້ເມືອງນັ້ນເປັນພັກພວກໃຈດຽວກັນ
12 ເຜົ່າຄົນອິສຣາເອນກໍສົ່ງຄົນໄປທົ່ວເຜົ່າຄົນເບັນຢາມິນບອກວ່າ, "ເປັນຫຍັງການຊົ່ວຊ້ານີ້ຈຶ່ງເກີດຂຶ້ນມາໄດ້ໃນ
ໝູ່ພວກທ່ານ
13 ເຫດສະນັ້ນຈົ່ງມອບຊາຍອັນທະພານໃນເມືອງກິເບອາມາໃຫ້ເຮົາປະຫານຊີວິດເສັຽ ຈະໄດ້ກຳຈັດຄວາມຊົ່ວ
ເສັຽຈາກຄົນອິສຣາເອນ" ແຕ່ຄົນເບັນຢາມິນບໍ່ຍອມຟັງສຽງຄົນອິສຣາເອນພີ່ນ້ອງຂອງຕົນ
14 ຄົນເບັນຢາມິນກໍອອກມາຈາກບັນດາຫົວເມືອງເຂົ້າໄປສູ່ກິເບອາພ້ອມກັນເພື່ອຍົກອອກໄປກະທຳສົງຄາມກັບ
ຄົນອິສຣາເອນ
15 ເມື່ອນັ້ນຄົນເບັນຢາມິນຮວມຈຳນວນທະຫານຖືດາບອອກຈາກບັນດາຫົວເມືອງໄດ້ສອງໝື່ນຫົກພັນຄົນ ນອກ
ຈາກຊາວເມືອງກິເບອາ ຊຶ່ງນັບທະຫານທີ່ຄັດເລືອກແລ້ວໄດ້ເຈັດຮ້ອຍຄົນ
16 ໃນຈຳນວນທັງໝົດນີ້ມີຄົນທີ່ຄັດເລືອກແລ້ວເຈັດຮ້ອຍຄົນຖະນັດມືຊ້າຍທຸກຄົນເອົາສະລິງແກວ່ງກ້ອນຫີນໃຫ້
ຖືກເສັ້ນຜົມໄດ້ບໍ່ມີຜິດເລີຍ
17 ຈຳນວນຄົນອິສຣາເອນທີ່ຖືດາບ ບໍ່ນັບຄົນເບັນຢາມິນໄດ້ສີ່ແສນຄົນເຫລົ່ານີ້ເປັນທະຫານທຸກຄົນ
18 ຄົນອິສຣາເອນກໍລຸກຂຶ້ນໄປຍັງເມືອງເບັດເອນ ແລະທູນຖາມພຣະຜູ້ເປັນເຈົ້າວ່າ, "ຜູ້ໃດໃນພວກຂ້າພຣະອົງທີ່
ຈະຂຶ້ນໄປສູ້ຮົບກັບຄົນເບັນຢາມິນກ່ອນ" ພຣະຜູ້ເປັນເຈົ້າສັ່ງວ່າ, "ໃຫ້ຢູດາຂຶ້ນໄປກ່ອນ"
19 ຮຸ່ງເຊົ້າ ຄົນອິສຣາເອນກໍລຸກຂຶ້ນຕັ້ງຄ້າຍຕໍ່ສູ້ເມືອງກິເບອາ
20 ຄົນອິສຣາເອນອອກໄປສູ້ຮົບກັບຄົນເບັນຢາມິນ ແລະຄົນອິສຣາເອນໄດ້ວາງພົນຮຽງຣາຍຕໍ່ສູ້ເຂົາທີ່ເມືອງກິເບ
ອາ
21 ໃນວັນນັ້ນຄົນເບັນຢາມິນອອກມາຈາກເມືອງກິເບອາ ຂ້າຟັນຄົນອິສຣາເອນລົ້ມຕາຍສອງໝື່ນສອງພັນຄົນ
22 ແຕ່ຄົນອິສຣາເອນຍັງໜຸນໃຈກັນແລະວາງພົນຮຽງຣາຍໃນທີ່ຊຶ່ງເຂົາວາງພົນໃນວັນແຮກ
23 ແລະຄົນອິສຣາເອນກໍຂຶ້ນໄປຮ້ອງໄຫ້ຄໍ່າຄວນຕໍ່ພຣະຜູ້ເປັນເຈົ້າຈົນເຖິງເວລາຄໍ່າ ເຂົາທັງຫລາຍທູນຖາມພຣະ
ຜູ້ເປັນເຈົ້າວ່າ, "ສົມຄວນທີ່ຂ້າພຣະອົງຈະເຂົ້າໄປປະຊິດຮົບກັບຄົນເບັນຢາມິນພີ່ນ້ອງຂອງຂ້າພຣະອົງຫລືບໍ"
ພຣະເຈົ້າສັ່ງວ່າ, "ໄປສູ້ເຂົາເຖີດ"
24 ຄົນອິສຣາເອນຈຶ່ງຍົກເຂົ້າປະຊິດຄົນເບັນຢາມິນໃນວັນທີສອງ
25 ແລະໃນວັນທີສອງນັ້ນເບັນຢາມິນກໍຍົກອອກໄປຈາກກິເບອາ ຂ້າຟັນຄົນອິສຣາເອນຕາຍອີກນຶ່ງໝື່ນແປດພັນ
ຄົນ ທຸກຄົນເປັນທະຫານຖືດາບ
26 ແລ້ວບັນດາອິສຣາເອນຄືກອງທັບທັງໝົດ ໄດ້ຂຶ້ນໄປທີ່ເບັດເອນ ແລະຮ້ອງໄຫ້ຄໍ່າຄວນ ເຂົານັ່ງເຝົ້າພຣະຜູ້ເປ
ັນເຈົ້າ ແລະອົດອາຫານຈົນຮອດຄໍ່າຖວາຍເຄື່ອງເຜົາບູຊາແລະສານຕິບູຊາແດ່ພຣະຜູ້ເປັນເຈົ້າ
27 ຄົນອິສຣາເອນຈຶ່ງທູນຖາມພຣະຜູ້ເປັນເຈົ້າວ່າ (ເພາະໃນສມັຍນັ້ນ ຫີບຄຳສັນຍາຂອງພຣະເຈົ້າຍັງຢູ່ທີ່ນັ້ນ
28 ແລະຟີເນຮັສບຸດເອເລອາຊາ ຜູ້ເປັນບຸດອາໂຣນກໍບົວລະບັດຢູ່ໜ້າຫີບນັ້ນໃນສມັຍນັ້ນ) ເຂົາທູນຖາມວ່າ,
"ສົມຄວນທີ່ຂ້າ  ພຣະອົງຈະຍັງຍົກໄປສູ້ຮົບກັບເບັນຢາມິນພີ່ນ້ອງຂອງຂ້າພຣະອົງອີກຄັ້ງນຶ່ງ ຫລືຄວນຈະຢຸດ
ເສັຽ" ແລະພຣະຜູ້ເປັນເຈົ້າຊົງສັ່ງວ່າ, "ຈົ່ງຍົກຂຶ້ນໄປເຖີດ ເພາະວ່າມື້ອື່ນເຮົາຈະມອບເຂົາໄວ້ໃນມືຂອງເຈົ້າ"
29 ດັ່ງນັ້ນ ອິສຣາເອນຈຶ່ງຊຸ່ມຄົນໄວ້ຮອບເມືອງກິເບອາ
30 ປະຊາຊົນອິສຣາເອນກໍຂຶ້ນໄປສູ້ຮົບກັບຄົນເບັນຢາມິນໃນວັນທີສາມ ແລະວາງພົນໄວ້ຕໍ່ສູ້ເມືອງກິເບອາຢ່າງ
ຄາວກ່ອນ

31 ຄົນເບັນຢາມິນກໍຍົກອອກມາສູ້ຮົບກັບປະຊາຊົນ ຖືກລວງໃຫ້ຫ່າງອອກໄປຈາກຕົວເມືອງ ເຂົາກໍເລີ່ມຂ້າຟັນປະຊາຊົນຢ່າງຄາວກ່ອນຄື ຕາມຖນົນຊຶ່ງສາຍນຶ່ງໄປເບັດເອນ ອີກສາຍນຶ່ງໄປກິເບອາແລະທີ່ກາງທົ່ງແຈ້ງອິສຣາເອນລົ້ມຕາຍປະມານສາມສິບຄົນ

32 ຄົນເບັນຢາມິນກ່າວກັນວ່າ, "ເຂົາພ່າຍແພ້ເຮົາຢ່າງຄາວກ່ອນ" ແຕ່ຄົນອິສຣາເອນວ່າ, "ໃຫ້ເຮົາຖອຍ ນໍາເຂົາອອກຫ່າງຈາກເມືອງໄປເຖິງຖນົນຫລວງ"

33 ຄົນອິສຣາເອນທັງຫມົດກໍລຸກອອກຈາກບ່ອນຂອງຕົນຮຽງຣາຍເຂົ້າໄປທີ່ບາອັນຕາມາ ສ່ວນຄົນອິສຣາເອນທີ່ຄອຍຊຸ່ມຢູ່ກໍອອກຈາກທີ່ຂອງຕົນໃກ້ເມືອງເກບາ

34 ມີທະຫານອິສຣາເອນທີ່ຄັດເລືອກແລ້ວນຶ່ງຫມື່ນຄົນບຸກຣຸກເຂົ້າເມືອງກິເບອາ ການສົງຄາມກໍາລັງໂຫດຮ້າຍ ຄົນເບັນຢາມິນບໍ່ຮູ້ວ່າເຫດຮ້າຍກໍາລັງມາໃກ້ຕົນແລ້ວ

35 ພຣະຜູ້ເປັນເຈົ້າຊົງໃຫ້ຄົນເບັນຢາມິນພ່າຍແພ້ຄົນອິສຣາເອນ ໃນວັນນັ້ນຄົນອິສຣາເອນທໍາລາຍຄົນເບັນຢາມິນເສັຽສອງຫມື່ນຫ້າພັນນຶ່ງຮ້ອຍຄົນ ທຸກຄົນເຫລົ່ານີ້ເປັນທະຫານຖືດາບ

36 ດັ່ງນັ້ນ ເບັນຢາມິນຈຶ່ງເຫັນວ່າເຂົາແພ້ແລ້ວ ຄົນອິສຣາເອນທໍາເປັນລ້າຖອຍໃຫ້ຕໍ່ເບັນຢາມິນ ເພາະເຂົາວາງໃຈຄົນທີ່ເຂົາໃຫ້ຊຸ່ມຢູ່ຮອບເມືອງກິເບອາ

37 ຄົນທີ່ຊຸ່ມຢູ່ກໍຮີບບຸກຣຸກເຂົ້າໄປໃນເມືອງກິເບອາ ທະຫານທີ່ຊຸ່ມຢູ່ນັ້ນກໍບຸກອອກມາປະຫານເມືອງນັ້ນເສັຽດ້ວຍຄົມດາບ

38 ຄົນອິສຣາເອນແລະຄົນທີ່ຊຸ່ມລີ້ຢູ່ນັດໃຫ້ສັນຍານວ່າ ຖ້າເຫັນຄວັນກຸ່ມໃຫຍ່ພຸ່ງຂຶ້ນມາຈາກໃນເມືອງ

39 ກໍໃຫ້ຄົນອິສຣາເອນຫັນກັບຄືນເຂົ້າມາຮົບ ຝ່າຍເບັນຢາມິນໄດ້ເລີ່ມຂ້າຄົນອິສຣາເອນໄດ້ປະມານສາມສິບຄົນ ກໍເວົ້າວ່າ, "ເຂົາຕ້ອງລົ້ມຕາຍຕໍ່ຫນ້າເຮົາຢ່າງຄາວກ່ອນແນ່ແລ້ວ"

40 ແຕ່ສັນຍານເປັນຄວັນໄຟລຸກພຸ່ງຂຶ້ນມາຈາກໃນເມືອງ ຄົນເບັນຢາມິນກໍຫລຽວຫລັງມາເບິ່ງ ເບິ່ງແມ, ທັງເມືອງກໍມີຄວັນພຸ່ງຂຶ້ນເຖິງທ້ອງຟ້າ

41 ຄົນອິສຣາເອນກໍຫັນກັບຄືນ ຄົນເບັນຢາມິນກໍທໍ້ຖອຍ ເພາະເຂົາເຫັນວ່າເຫດຮ້າຍມາໃກ້ເຂົາແລ້ວ

42 ເຂົາຈຶ່ງຫັນຫລັງໃຫ້ຄົນອິສຣາເອນຫນີເຂົ້າໄປທາງຖິ່ນກັນດານ ແຕ່ສົງຄາມຕິດຕາມເຂົາໄປຢ່າງຫນັກ ຄົນທີ່ອອກມາຈາກເມືອງກໍທໍາລາຍເຂົາທີ່ຢູ່ຖ້າມກາງ

43 ເຂົາທັງຫລາຍລ້ອມຄົນເບັນຢາມິນ ແລະຂັບໄລ່ເຂົາໄປແລະທັນເຂົາບ່ອນທີ່ເຂົາຢຸດພັກ ຈົນໄປເຖິງທີ່ກົງຂ້າມເມືອງກິເບອາທາງຕາເວັນອອກ

44 ຄົນເບັນຢາມິນລົ້ມຕາຍນຶ່ງຫມື່ນແປດພັນຄົນ ທຸກຄົນເປັນທະຫານທີ່ເກັ່ງກ້າ

45 ເຂົາກໍຫັນກັບຫນີເຂົ້າໄປໃນຖິ່ນກັນດານເຖິງສີລາຣິມໂມນ ຄົນອິສຣາເອນຂ້າເຂົາຕາຍຕາມຖນົນຫ້າພັນຄົນ ແລະຕິດຕາມຢ່າງກະຊັ້ນຊິດໄປເຖິງກິໂດມ ແລະຂ້າເຂົາຕາຍສອງພັນຄົນ

46 ຄົນເບັນຢາມິນທີ່ລົ້ມຕາຍໃນວັນນັ້ນ ເປັນທະຫານຖືດາບສອງຫມື່ນຫ້າພັນຄົນ ທຸກຄົນເປັນທະຫານເກັ່ງກ້າ

47 ແຕ່ມີທະຫານຫົກຮ້ອຍຄົນຫັນກັບຫນີເຂົ້າໄປໃນຖິ່ນກັນດານເຖິງສີລາຣິມໂມນ ແລະໄປອາໄສຢູ່ທີ່ສີລາຣິມໂມນສີ່ເດືອນ

48 ຄົນອິສຣາເອນກໍຫັນກັບຄືນໄປສູ້ຄົນເບັນຢາມິນອີກ ແລະໄດ້ປະຫານເຂົາເສັຽດ້ວຍຄົມດາບ ທັງຊາວເມືອງແລະຝູງສັດແລະບັນດາສິ່ງທີ່ເຂົາເຫັນ ເຖິງປານນັ້ນບັນດາເມືອງທີ່ເຂົາເຫັນເຂົາກໍເອົາໄຟເຜົາເສັຽທັງຫມົດ

## 21 ການຊອກຫາເມັຽໃຫ້ຄົນເບັນຢາມິນ

The Benjaminites Saved from Extinction

1 ຝ່າຍຄົນອິສຣາເອນໄດ້ປະຕິຍານໄວ້ທີ່ມີສປາວ່າ, "ພວກເຮົາບໍ່ມີຜູ້ໃດທີ່ຈະໃຫ້ບຸດຕຣີຂອງຕົນແຕ່ງງານກັບຄົນ
ເບັນຢາມິນ"
2 ປະຊາຊົນກໍມາທີ່ເບັດເອນ ນັ່ງຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າຈົນຮອດຄໍ່າ ເຂົາທັງຫລາຍກໍຮ້ອງໄຫ້ຄວນຄາງ
3 ເຂົາກ່າວວ່າ, "ໂອ ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນ ເປັນຫຍັງເຫດການຢ່າງນີ້ຈຶ່ງເກີດຂຶ້ນໃນອິສຣາ
ເອນ ຊຶ່ງວັນນີ້ຈະມີຄົນອິສຣາເອນຂາດໄປເຜົ່ານຶ່ງ"
4 ຢູ່ມາຮຸ່ງຂຶ້ນປະຊາຊົນກໍລຸກແຕ່ເດິກ ແລະສ້າງແທ່ນບູຊາແທ່ນນຶ່ງຖວາຍເຄື່ອງເຜົາບູຊາແລະເຄື່ອງສານຕິບູຊາ
5 ຄົນອິສຣາເອນກ່າວວ່າ, "ຄົນອິສຣາເອນຜູ້ໃດທີ່ບໍ່ໄດ້ຂຶ້ນມາປະຊຸມຕໍ່ພຣະຜູ້ເປັນເຈົ້າ" ເພາະເຂົາໄດ້ສາບານໄວ້
ແຂງແຮງເຖິງຜູ້ທີ່ບໍ່ໄດ້ມາປະຊຸມຕໍ່ພຣະຜູ້ເປັນເຈົ້າທີ່ມີສປາວ່າ "ຜູ້ນັ້ນຈະຕ້ອງຕາຍ"
6 ປະຊາຊົນສົງສານເບັນຢາມິນນ້ອງຂອງຕົນ ກ່າວວ່າ, "ວັນນີ້ເຜົ່ານຶ່ງຖືກຕັດອອກຈາກອິສຣາເອນແລ້ວ
7 ເຮົາຈະທຳຢ່າງໃດເຣື່ອງຫາເມັຽໃຫ້ຄົນທີ່ຍັງເຫລືອຢູ່ ຝ່າຍເຮົາກໍໄດ້ສາບານໃນພຣະນາມພຣະຜູ້ເປັນເຈົ້າແລ້ວ
ວ່າເຮົາຈະບໍ່ຍອມຍົກບຸດຕຣີຂອງເຮົາໃຫ້ເປັນເມັຽຂອງເຂົາ"
8 ເຂົາທັງຫລາຍຖາມຂຶ້ນວ່າ, "ມີເຜົ່າໃດໃນອິສຣາເອນທີ່ບໍ່ໄດ້ຂຶ້ນມາເຝົ້າພຣະຜູ້ເປັນເຈົ້າທີ່ມີສປາ"
ບໍ່ມີຄົນໃດຈາກຢາເບສກິເລອາດມາປະຊຸມທີ່ຄ້າຍເລີຍຈັກຄົນດຽວ
9 ເພາະວ່າເມື່ອປະຊາຊົນຮ່ວມກັນຢູ່ນັ້ນ ບໍ່ມີຊາວເມືອງຢາເບສກິເລອາດຢູ່ທີ່ນັ້ນເລີຍ
10 ດັ່ງນັ້ນຊຸມນຸມຊົນຈຶ່ງສົ່ງທະຫານຜູ້ກ້າຫານທີ່ສຸດນຶ່ງຫມື່ນສອງພັນຄົນແລ້ວບັນຊາເຂົາວ່າ, "ຈົ່ງໄປຂ້າຊາວຢາ
ເບສກິເລອາດເສັຽດ້ວຍຄົມດາບ ທັງຜູ້ຍິງແລະເດັກນ້ອຍ
11 ເຈົ້າທັງຫລາຍຈົ່ງກະທຳຢ່າງນີ້ ຄືຜູ້ຊາຍ ແລະຜູ້ຍິງທຸກຄົນທີ່ໄດ້ຫລັບນອນກັບຜູ້ຊາຍແລ້ວ ຈົ່ງຂ້າເສັຽໃຫ້ຫມົດ"
12 ໃນຫມູ່ຊາວຢາເບສກິເລອາດນັ້ນເຂົາພົບຍິງພົມມະຈາຣີສີ່ຮ້ອຍຄົນຜູ້ທີ່ຍັງບໍ່ໄດ້ສົມສູ່ກັບຜູ້ຊາຍເລີຍ ເຂົາຈຶ່ງ
ພາຍິງເຫລົ່ານັ້ນມາທີ່ຄ້າຍຊີໂລ ຊຶ່ງຢູ່ໃນແຜ່ນດິນການາອານ
13 ຊຸມນຸມຊົນທັງຫມົດກໍສົ່ງຂ່າວໄປທີ່ຄົນເບັນຢາມິນຊຶ່ງຢູ່ທີ່ສີລາຣິມໂມນ ປະກາດຂ່າວສງົບສຸກ
14 ຄົນເບັນຢາມິນກໍກັບມາໃນຄາວນັ້ນ ແລ້ວເຂົາກໍມອບຜູ້ຍິງທີ່ເຂົາໄວ້ຊີວິດໃນຫມູ່ຜູ້ຍິງແຫ່ງຢາເບສກິເລອາດ
ແຕ່ກໍບໍ່ພໍແກ່ກັນ
15 ປະຊາຊົນກໍສົງສານເບັນຢາມິນ ເພາະວ່າພຣະຜູ້ເປັນເຈົ້າຊົງກະທຳໃຫ້ເຂົາຈະຂາດໄປເຜົ່ານຶ່ງຈາກເຜົ່າອິສຣາ
ເອນ
16 ພວກຜູ້ໃຫຍ່ຂອງຊຸມນຸມຊົນນັ້ນຈຶ່ງກ່າວວ່າ, "ເມື່ອພວກຜູ້ຍິງໃນເບັນຢາມິນຖືກທຳລາຍເສັຽຫມົດເຊັ່ນນີ້ແລ້ວ
ເຮົາຈະທຳຢ່າງໃດເຣື່ອງຫາເມັຽໃຫ້ຄົນທີ່ຍັງເຫລືອຢູ່"
17 ເຂົາທັງຫລາຍກ່າວວ່າ, "ຕ້ອງມີມໍຣະດົກໃຫ້ແກ່ຄົນເບັນຢາມິນທີ່ລອດຕາຍ ເພື່ອວ່າຄົນເຜົ່ານຶ່ງຈະບໍ່ໄດ້ລົບ
ລ້າງເສັຽຈາກອິສຣາເອນ
18 ແຕ່ເຮົາຈະຍົກບຸດຕຣີຂອງເຮົາໃຫ້ເປັນເມັຽເຂົາກໍບໍ່ໄດ້" ເພາະຄົນອິສຣາເອນໄດ້ສາບານໄວ້ວ່າ, "ຜູ້ໃດໃຫ້ຍິງ
ແກ່ເບັນຢາມິນເປັນເມັຽ ຂໍໃຫ້ຖືກສາບແຊ່ງເຖີດ"
19 ດັ່ງນັ້ນເຂົາຈຶ່ງກ່າວວ່າ, "ເບິ່ງແມ, ທຸກປີມີເທສການຖວາຍພຣະຜູ້ເປັນເຈົ້າທີ່ຊີໂລ ຊຶ່ງຢູ່ເຫນືອເບັດເອນ ທາງ
ທິດຕາເວັນອອກຂອງຖນົນຂຶ້ນຈາກເບັດເອນເຖິງເຊເຄມ ແລະຢູ່ໃຕ້ເລໂບນາ
20 ເຂົາຈຶ່ງບັນຊາສັ່ງຄົນເບັນຢາມິນວ່າ, "ຈົ່ງໄປຊຸ່ມຢູ່ໃນສວນອະງຸ່ນ
21 ຄອຍເຝົ້າເບິ່ງຢູ່ ຖ້າບຸດຕຣີຊາວຊີໂລອອກມາເຕັ້ນຣຳໃນພິທີເຕັ້ນຣຳຈົ່ງອອກມາຈາກສວນອະງຸ່ນແລະສຸດດຶງ
ເອົາບຸດຕຣີຊາວຊີໂລ ຄົນລະຄົນໄປເປັນເມັຽຂອງຕົນ ແລ້ວໃຫ້ກັບໄປແຜ່ນດິນເບັນຢາມິນເສັຽ

22 ຖ້າບິດາຫລືພີ່ນ້ອງຂອງຍິງເຫລົ່ານັ້ນມາຮ້ອງທຸກຕໍ່ເຮົາ ເຮົາຈະບອກເຂົາວ່າ “ຂໍໂຜດຍິນຍອມເພາະເຫັນແກ່ເຮົາເຖີດ ໃນເວລາສົງຄາມເຮົາບໍ່ໄດ້ຜູ້ຍິງໃຫ້ພໍແກ່ທຸກຄົນ ທ່ານທັງຫລາຍເອງກໍບໍ່ໄດ້ໃຫ້ແກ່ເຂົາ ຖ້າບໍ່ດັ່ງນັ້ນບັດນີ້ພວກທ່ານກໍຈະມີໂທດ”
23 ຄົນເບັນຢາມິນກໍກະທຳຕາມຕ່າງກໍໄດ້ເມັຽໄປຕາມຈຳນວນຄືໄດ້ຍິງເຕັ້ນຣຳທີ່ເຂົາໄປສຸດດຶງມາ ເຂົາກໍກັບໄປຢູ່ໃນທີ່ດິນມໍຣະດົກຂອງເຂົາ ສ້າງເມືອງຂຶ້ນໃຫມ່ແລະອາໄສຢູ່ໃນນັ້ນ
24 ຄັ້ງນັ້ນອິສຣາເອນກໍກັບຈາກທີ່ນັ້ນໄປຍັງເຜົ່າ ແລະຕະກູນຂອງຕົນ ຕ່າງກໍຍົກກັບໄປສູ່ດິນແດນມໍຣະດົກຂອງຕົນ
25 ໃນສມັຍນັ້ນບໍ່ມີກະສັດໃນອິສຣາເອນ ຕ່າງຄົນກໍກະທຳຕາມໃຈມັກຂອງຕົນ